ສະຫະພັນບານເຕະແຫ່ງຊາດລາວ

LAO FOOTBALL FEDERATION

ລາວລີກ 1

# ກົດລະບຽບ

## ການແຂ່ງຂັນບານເຕະ ເປບຊີ ລາວລີກ 1

## ລະດູການ 2025/26

**Pepsi Lao League 1 Competition Regulation**

ສຳນັກງານໃຫຍ່ ສະຫະພັນບານເຕະແຫ່ງຊາດ, ບ້ານ ທ້ອຍທົ່ງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ຕູ້ ປ.ນ 1800
ໂທ: +856-21-560821, 562620, (030) 526 6415 ແຟັກ: +856-21-560820
ອີເມວ: contact@LaoFF.org.la

# ສາລະບານ


ພາກທີ I ............................................................ 5

1. ມາດຕາ 1: ຄຳນິຍາມ ແລະ ການຕີຄວາມໝາຍ ............................................................ 5

ພາກທີ II ............................................................ 7

ໜ້າທີ່ ແລະ ຄວາມຮັບຜິດຊອບໃນການບໍລິຫານຈັດການແຂ່ງຂັນລາວລີກ 1 ............................................................ 7

ມາດຕາ 2: ສະຫະພັນບານເຕະແຫ່ງຊາດລາວ ............................................................ 7

ມາດຕາ 3: ລະບົບຕຸລາການຂອງ ສຕລ ............................................................ 8

ມາດຕາ 4: ອະນຸກຳມະການອື່ນໆ ............................................................ 9

ມາດຕາ 5: ສະໂມສອນບານເຕະທີ່ເຂົ້າຮ່ວມການແຂ່ງຂັນ ............................................................ 9

ມາດຕາ 6: ການບໍລິຫານສິດທິປະໂຫຍດຂອງການແຂ່ງຂັນ ............................................................ 10

ມາດຕາ 7: ສັນຍາວ່າຈ້າງ ............................................................ 11

ມາດຕາ 8: ການພັດທະນານັກກິລາ ............................................................ 13

ພາກທີ III ............................................................ 13

ຂໍ້ກຳນົດການເຂົ້າຮ່ວມການແຂ່ງຂັນ, ການຖອນອອກຈາກການແຂ່ງຂັນ, ການຢຸດຕິເຂົ້າຮ່ວມການແຂ່ງຂັນ, ຕາຕະລາງແຂ່ງຂັນ ແລະ ຮູບແບບການແຂ່ງຂັນ ............................................................ 13

ມາດຕາ 9: ຂໍ້ກຳນົດການເຂົ້າຮ່ວມການແຂ່ງຂັນ ............................................................ 13

ມາດຕາ 10: ການຖອນອອກຈາກການແຂ່ງຂັນ ແລະ ການຢຸດຕິການເຂົ້າຮ່ວມແຂ່ງຂັນ ............................................................ 14

ມາດຕາ 11: ຕາຕະລາງການແຂ່ງຂັນ ............................................................ 15

ມາດຕາ 12: ຮູບແບບການແຂ່ງຂັນ ລາວລີກ 1 ............................................................ 16

ມາດຕາ 13: ການຄິດໄລ່ຄະແນນ ............................................................ 16

ມາດຕາ 14: ການຈັດອັນດັບໃນຕາຕະລາງຄະແນນ ............................................................ 16

ມາດຕາ 15: ສິດທິໃນການເລື່ອນຊັ້ນ ຫຼື ຕົກຊັ້ນ ............................................................ 17

ພາກທີ IV ............................................................ 18

ກະຕິກາ ແລະ ລະບຽບທີ່ໃຊ້ຄວບຄຸມການແຂ່ງຂັນບານເຕະ ລາວລີກ 1 ............................................................ 18

ມາດຕາ 16: ກະຕິກາການແຂ່ງຂັນ ..... 18

ມາດຕາ 17: ຫຼັກການການຕັດສິນ ..... 18

ມາດຕາ 18: ການປ່ຽນແປງຕາຕະລາງແຂ່ງຂັນ ແລະ ສະໜາມແຂ່ງຂັນໃນກໍລະນີເກີດເຫດສຸດວິໄສ ..... 18

ມາດຕາ 19: ສະຖານທີ່ຈັດການແຂ່ງຂັນ ..... 19

ມາດຕາ 20: ບ່ອນນັ່ງນັກກິລາສຳຮອງ ແລະ ເຂດເຕັກນິກ ..... 20

ມາດຕາ 21: ການຝຶກຊ້ອມທາງການ/Official Training ..... 21

ມາດຕາ 22: ບານສຳລັບການແຂ່ງຂັນ/Match ball ..... 21

ມາດຕາ 23: ຊຸດແຂ່ງຂັນ ..... 21

ມາດຕາ 24: ຂໍ້ຄວນປະຕິບັດຂອງສະໂມສອນໃນມື້ແຂ່ງຂັນ ..... 23

ມາດຕາ 25: ການປ່ຽນໂຕສຳຮອງໃນການແຂ່ງຂັນ ..... 24

ພາກທີ V ..... 25

ຄຸນສົມບັດ ແລະ ພາລະບົດບາດຂອງນັກກິລາ, ເຈົ້າໜ້າທີ່ສະໂມສອນ ແລະ ການລົງທະບຽນເຂົ້າຮ່ວມການແຂ່ງຂັນ ..... 25

ມາດຕາ 26: ຄຸນສົມບັດຂອງນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນ ..... 25

ມາດຕາ 27: ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນັກກິລາ, ເຈົ້າໜ້າທີ່, ພະນັກງານ ແລະ ຜູ້ບໍລິຫານສະໂມສອນ ..... 26

ມາດຕາ 29: ການລົງທະບຽນ ..... 28

ມາດຕາ 30: ການໂອນຍ້າຍນັກກິລາ ..... 32

ພາກທີ VI ..... 33

ມາດຕະການລົງໂທດການກະທຳຜິດກະຕິກາການແຂ່ງຂັນ, ການປະທ້ວງ ແລະ ການອຸທອນ ..... 33

ມາດຕາ 31: ມາດຕະການລົງໂທດການກຳທະຜິດກະຕິກາການແຂ່ງຂັນ ..... 33

ມາດຕາ 32: ການປະທ້ວງ ..... 34

ມາດຕາ 33: ການອຸທອນ ..... 35

ມາດຕາ 34: ມາດຕະການ ..... 35

ພາກທີ VII ..... 38

ບົດບັນຍັດສຸດທ້າຍ ..... 38

- ຂໍ້ກຳນົດເພີ່ມເຕີມ

    1. ລາຍລະອຽດຂອງການແຂ່ງຂັນ
    2. ນະໂຍບາຍອຸດໜູນສະໂມສອນ, ເງິນລາງວັນ ແລະ ປະເພດລາງວັນໃນການແຂ່ງຂັນ
    3. ມາດຕະຖານຂອງສະໜາມແຂ່ງຂັນ.
    4. ຕົວຢ່າງສັນຍາວ່າຈ້າງ
    5. ເງື່ອນໄຂການຂໍອອກໃບອະນຸຍາດສະໂມສອນ Club Licensing

# ຄຳນຳ

ອີງຕາມກົດລະບຽບພາຍໃນຂອງ ສະຫະພັນບານເຕະແຫ່ງຊາດລາວ(ສຕລ) ເພື່ອເຮັດໃຫ້ການແຂ່ງຂັນບານເຕະລາຍການ ເປບຊີ ລາວລີກ 1 ລະດູການ 2025/26 ດຳເນີນໄປຢ່າງສອດຄ່ອງກັບການເຄື່ອນໄຫວການແຂ່ງຂັນ ແລະ ເປັນລະບຽບໃນການຄຸ້ມຄອງການແຂ່ງຂັນ.

ກົດລະບຽບການແຂ່ງຂັນບານເຕະ ເປບຊີ ລາວລີກ 1 ລະດູການ 2025/26 ແມ່ນນິຕິກຳທີ່ສຳຄັນທີ່ທຸກສະໂມສອນບານເຕະທີ່ເຂົ້າຮ່ວມການແຂ່ງຂັນ, ເຈົ້າໜ້າທີ່ຮັບຜິດຊອບການແຂ່ງຂັນ, ບັນດາບຸກຄະລາກອນຈັດການແຂ່ງຂັນທີ່ໄດ້ລົງທະບຽນ ແລະ ຮັບຮອງຈາກ ສຕລ ທີ່ມີສ່ວນກ່ຽວຂ້ອງກັບການຈັດການແຂ່ງຂັນຕ້ອງໄດ້ປະຕິບັດຕາມຢ່າງເຂັ້ມງວດ.

ສະຫະພັນບານເຕະແຫ່ງຊາດລາວມີພາລະບົດບາດໃນການຄຸ້ມຄອງ, ສ້າງແຜນ ແລະ ຈັດການແຂ່ງຂັນບານເຕະ ຢູ່ພາຍໃນ ສປປ ລາວ ດັ່ງນັ້ນ, ສຕລ ຈຶ່ງໄດ້ສ້າງກົດລະບຽບການແຂ່ງຂັນສະບັບນີ້ຂຶ້ນມາ ໂດຍມີຈຸດປະສົງເພື່ອຮອງຮັບໃຫ້ການເຄື່ອນໄຫວແຂ່ງຂັນບານເຕະທີ່ຈັດຂຶ້ນໂດຍ ສະຫະພັນບານເຕະແຫ່ງຊາດລາວ ໃນທົ່ວປະເທດມີພື້ນຖານທາງດ້ານນິຕິກຳ ແລະ ຮັບຮອງການພັດທະນາກິລາບານເຕະໃຫ້ມີປະສິດທິພາບ ແລະ ກ້າວໜ້າຂຶ້ນໄປເລື້ອຍໆ.

ການແຂ່ງຂັນບານເຕະ ເປບຊີ ລາວລີກ 1 ລະດູການ 2025/26 ແມ່ນການແຂ່ງຂັນບານເຕະປະເພດຂອງສະໂມສອນກິລາບານເຕະ ລະດັບສູງສຸດ ທີ່ຈັດຂຶ້ນໃນ ສປປ ລາວ. ໂດຍມີຈຸດປະສົງໃນການພັດທະນານັກກິລາບານເຕະພາຍໃນເພື່ອສະໜອງບຸກຄະລາກອນໃຫ້ກັບທີມຊາດລາວໃນແຕ່ລະຮຸ່ນອາຍຸ ແລະ ສົ່ງເສີມສັງຄົມໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການພັດທະນາບຸກຄະລາກອນກິລາອາຊີບພາຍໃນຂອງ ສປປ ລາວ.

# ພາກທີ I

**ມາດຕາ 1 : ຄໍານິຍາມ ແລະ ການຕີຄວາມໝາຍ**

- LFF (Lao Football Federation): ໝາຍເຖິງສະຫະພັນບານເຕະແຫ່ງຊາດລາວ ໂດຍມີໂຕຫຍໍ້ທາງການໃນພາສາລາວແມ່ນ “ສຕລ”.
- FIFA (The Fédération Internationale de Football Association): ໝາຍເຖິງສະຫະພັນບານເຕະນາໆຊາດ.
- AFC (Asian Football Confederation): ໝາຍເຖິງສະຫະພັນບານເຕະທະວີບອາຊີ.
- L1 (Lao League 1): ໝາຍເຖິງການແຂ່ງຂັນບານເຕະແບບເຄິ່ງອາຊີບຂອງສະໂມສອນບານເຕະ ລະດັບສູງສຸດໃນ ສປປ ລາວ.
- L2 (Lao League 2): ໝາຍເຖິງແມ່ນການແຂ່ງຂັນບານເຕະແບບສະໝັກຫຼິ້ນຂອງສະໂມສອນບານເຕະທີ່ຈັດຂຶ້ນໃນ ທຸກໆແຂວງທົ່ວປະເທດ.
- ການປະທ້ວງ (Protest): ແມ່ນມີຄວາມໝາຍໂດຍລວມໝາຍເຖິງການໂຕ້ແຍ້ງບັນຫາໃດໆຫຼັງຈາກສິ້ນສຸດການແຂ່ງຂັນທີ່ກ່ຽວຂ້ອງກັບສິດ ແລະ ຄຸນສົມບັດຂອງນັກກິລາທີ່ເຂົ້າຮ່ວມການແຂ່ງຂັນນັ້ນບໍ່ເປັນໄປຕາມລະບຽບສະບັບນີ້, ວຽກງານ ເຕັກນິກຈັດການແຂ່ງຂັນຂອງຄະນະກໍາມະການຈັດການແຂ່ງຂັນ ແລະ ການປະພຶດປະຕິບັດໂຕຂອງນັກກິລາ, ຄະນະຄູຝຶກ, ຄະນະກໍາມະການຈັດການແຂ່ງຂັນ, ຄະນະບໍລິຫານງານຂອງສະໂມສອນ ແລະ ສະໂມສອນ.
- ການອຸທອນ (Appeal): ໝາຍເຖິງການແຈ້ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນທີ່ເປັນຮູບປະທໍາຈາກສະໂມສອນທີ່ ເປັນສະມາຊິກຂອງການແຂ່ງຂັນທີ່ບໍ່ເຫັນດ້ວຍກັບການຕັດສິນລົງໂທດໃນກໍລະນີໃດໜຶ່ງຂອງຄະນະກໍາມະການລະບຽບວິໄນຂອງສະຫະພັນບານເຕະແຫ່ງຊາດລາວຕໍ່ກັບບຸກຄະລາກອນທີ່ກ່ຽວຂ້ອງກັບສະໂມສອນ ຫຼື ສະໂມສອນເອງເພື່ອໃຫ້ຄະນະ ກໍາມະການອຸທອນຂອງ ສຕລ ພິຈາລະນາຄືນໃໝ່.
- ອະນຸກໍາມະການຈັດການແຂ່ງຂັນ(Competition Committee): ໝາຍເຖິງຄະນະຈັດການແຂ່ງຂັນປະຈໍາ ສຕລ ໂດຍມີໜ່ວຍງານຫຼືກົມພະແນກຈັດການແຂ່ງຂັນທີ່ຖືກແຕ່ງຕັ້ງໂດຍ ສຕລ.
- ລະບົບວຽກງານຕຸລາການຂອງ ສຕລ (The Judiciary Committee): ໝາຍເຖິງອະນຸກໍາມະການລະບຽບວິໄນ ແລະ ອະນຸກໍາມະການອຸທອນ.
- ລະບຽບການແຂ່ງຂັນ (Competition Regulations): ໝາຍເຖິງບັນດາກົດລະບຽບທີ່ກ່ຽວຂ້ອງກັບການແຂ່ງຂັນລາວລີກ 1 ແລະ ສະບັບແກ້ໄຂເພີ່ມເຕີມ.
- ເຈົ້າໜ້າທີ່ຈັດການແຂ່ງຂັນ (Match Officials): ໝາຍເຖິງບັນດາບຸກຄະລາກອນຈັດການແຂ່ງຂັນທີ່ໄດ້ລົງທະບຽນ ແລະ ຮັບຮອງຈາກ ສຕລ ເຊັ່ນ:
    1) ກໍາມະການຕັດສິນ (Referee)
    2) ກໍາະການຊ່ວຍ (Assistant Referees)
    3) ກໍາມະການທີ 4 (Fourth Official)

4) ຜູ້ປະເມີນກຳມະການຕັດສິນ (Referee Assessor)

5) ຜູ້ຄວບຄຸມການແຂ່ງຂັນ (Match Commissioner)

6) ຜູ້ຊ່ວຍຜູ້ຄວບຄຸມການແຂ່ງຂັນ (LGC ຫຼື Local General Coordinator)

- ເຈົ້າໜ້າທີ່ສະໂມສອນ (Team Officials): ໝາຍເຖິງບຸກຄະລາກອນຂອງສະໂມສອນທີ່ມີຕຳແໜ່ງດັ່ງນີ້:

  1) ຜູ້ຈັດການສະໂມສອນ (Team Manager)

  2) ຫົວໜ້າຄູຝຶກ (Head Coach)

  3) ຜູ້ຊ່ວຍຫົວໜ້າຄູຝຶກ (Assistant Coach)

  4) ຄູຝຶກຜູ້ຮັກສາປະຕູ (GK Coach)

  5) ແພດປະຈຳສະໂມສອນ (Medical or Doctor)

  6) ນັກກາຍະພາບບຳບັດ (Physio Therapist)

  7) ເຈົ້າໜ້າທີ່ສື່ມວນຊົນ (Team Media Officer)

  8) ປະທານສະໂມສອນ (President/Chairman)

  9) ເຈົ້າໜ້າທີ່ບໍລິຫານສະໂມສອນ (Team Staffs)ຫຼື ຜູ້ດູແລອຸປະກອນ (kit-man)

- LOC (Local Organizing Committee): ໝາຍເຖິງຝ່າຍຈັດການແຂ່ງຂັນຂອງສະໂມສອນເຈົ້າບ້ານທີ່ປະກອບມີຕຳແໜ່ງຕ່າງໆດັ່ງລຸ່ມນີ້:

  1) ຜູ້ຈັດການສະໜາມ (Stadium Manager)

  2) ຜູ້ປະສານງານວຽກປ້ອງກັນປະຈຳສະໜາມ (Security Officer)

  3) ຜູ້ປະສານງານວຽກສື່ມວນຊົນປະຈຳສະໜາມ (Media Officer)

  4) ຜູ້ປະສານງານວຽກການຕະຫຼາດປະຈຳສະໜາມ (Marketing Officer)

  5) ເຈົ້າໜ້າທີ່ແພດປະຈຳສະໜາມ (Medical Officer)

- ຜູ້ຕາງໜ້າທາງກົດໝາຍຂອງນັກກິລາ (Player Intermediary): ຜູ້ຕາງໜ້າທາງກົດໝາຍຂອງນັກກິລາ ຫຼື Player Intermediary ແມ່ນບຸກຄົນທີ່ໄດ້ຮັບສິດໃນການດຳເນີນການຕາງໜ້າໃນວຽກງານຕ່າງໆຂອງ ນັກກິລາທີ່ຕົນເປັນ ຜູ້ຕາງໜ້າໃຫ້, ແຕ່ຜູ້ຕາງໜ້າທາງກົດໝາຍຂອງນັກກິລາ ຈະຕ້ອງໄດ້ລົງທະບຽນກັບ ສຕລ ໃຫ້ສຳເລັດເສຍກ່ອນຈຶ່ງສາມາດດຳເນີນການຕາງໜ້າໃຫ້ນັກກິລາທີ່ແຂ່ງຂັນຢູ່ ໃນ ສປປ ລາວໄດ້.

- CL (Club Licensing): ແມ່ນໃບອະນຸຍາດທີ່ອອກໂດຍສະຫະພັນບານເຕະແຫ່ງຊາດລາວ ໃຫ້ກັບສະໂມສອນທີ່ສາມາດບັນລຸເງື່ອນໄຂຂອງການເຂົ້າຮ່ວມການແຂ່ງຂັນທີ່ ສຕລ ວາງອອກ ເຊິ່ງເອີ້ນວ່າ ໃບອະນຸຍາດສະໂມສອນລະດັບຊາດ.

- International Transfer Certificate (ITC): ໃບອະນຸຍາດການໂອນຍ້າຍນັກກິລາລະຫວ່າງປະເທດເຊິ່ງມີສອງປະເພດຄື ITC ຂອງນັກກິລາອາຊີບ ແລະ ITC ຂອງນັກກິລາສະໝັກຫຼິ້ນ.

- Transfer Matching System (TMS): ລະບົບໂອນຍ້າຍນັກກິລາອາຊີບລະຫວ່າງປະເທດຂອງສະຫະພັນບານເຕະນາໆຊາດທີ່ຄຸ້ມຄອງ ແລະ ຈັດການໂດຍສະຫະພັນບານເຕະຂອງແຕ່ລະປະເທດ.

- FIFA Competition Management System (FIFA CMS): ໝາຍເຖິງລະບົບການບໍລິຫານການຈັດການແຂ່ງຂັນ

- FIFA CONNECT: ລະບົບການລົງທະບຽນຂອງສະຫະພັນບານເຕະນາໆຊາດ (FIFA) ທີ່ນໍາໃຊ້ເຂົ້າໃນທຸກການແຂ່ງຂັນຂອງ ສຕລ ທີ່ຮັບຮອງໂດຍ ສະຫະພັນບານເຕະນາໆຊາດ (FIFA).
- AD Cards (Accreditation Cards): ໝາຍເຖິງບັດທີ່ອອກໃຫ້ກັບບຸກຄົນທີ່ຜ່ານການລົງທະບຽນກັບຝ່າຍຈັດການ ແຂ່ງຂັນເພື່ອຢັ້ງຢືນເຖິງສິດໃນການເຂົ້າຮ່ວມແຂ່ງຂັນຂອງບັນດານັກກິລາ, ເຈົ້າໜ້າທີ່ສະໂມສອນ ແລະ ເຈົ້າໜ້າທີ່ຈັດການແຂ່ງຂັນ.
- ສະໂມສອນເຈົ້າບ້ານ (Home Team): ໝາຍເຖິງສະໂມສອນທີ່ຈັດການແຂ່ງຂັນນັດໃດໜຶ່ງໃນສະໜາມແຂ່ງຂັນຂອງຕົນເອງ.
- ສະໂມສອນມາຢາມ (Away Team): ໝາຍເຖິງສະໂມສອນທີ່ເດີນທາງໄປແຂ່ງຂັນທີ່ສະໜາມແຂ່ງຂັນຂອງສະໂມສອນອື່ນ.
- ໃບປົດປ່ອຍນັກກິລາ (Release Letter): ໝາຍເຖິງໜັງສືຢັ້ງຢືນການສິ້ນສຸດພັນທະຂອງນັກກິລາກັບສະໂມສອນຕົ້ນສັງກັດ. ເປັນເອກະສານທີ່ສະໂມສອນອອກໃຫ້ນັກກິລາຫຼັງຈາກສິ້ນສຸດພັນທະສັນຍາຕໍ່ກັນ.
- ໃບຢັ້ງຢືນການບໍ່ຂຶ້ນກັບບຸກຄົນໃດຂອງນັກກິລາ (TPO ຫຼື Third Party Ownership): ໝາຍເຖິງເອກະສານຢັ້ງຢືນ ການບໍ່ຂຶ້ນກັບບຸກຄົນໃດໜຶ່ງທີ່ບໍ່ແມ່ນສະໂມສອນຕົ້ນສັງກັດໃນດ້ານສິດທິການຕະຫຼາດ ແລະ ການເງິນ.
- ສະໜາມແຂ່ງຂັນ (Stadium): ໝາຍເຖິງບໍລິເວນອ້ອມຮອບທາງດ້ານໃນ ແລະ ດ້ານນອກຂອງສະຖານທີ່ຈັດການແຂ່ງຂັນ
- ເດີ່ນແຂ່ງຂັນ (Field of Play): ໝາຍເຖິງບໍລິເວນອ້ອມຮອບເດີ່ນຫຍ້າທີ່ໃຊ້ສໍາລັບການແຂ່ງຂັນໂດຍໃຫ້ກວມເອົາເຂດ ເຕັກນິກບໍລິເວນຂ້າງເດີ່ນແຂ່ງຂັນພ້ອມ.
- ສະໂມສອນສະມາຊິກ (Clubs): ໝາຍເຖິງອົງກອນທີ່ມີສະຖານະນິຕິບຸກຄົນຕາມການຈົດທະບຽນໃນກົດໝາຍພາຍໃນທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ໄດ້ຮັບໃບອະນຸຍາດໃຫ້ເຂົ້າຮ່ວມການແຂ່ງຂັນຈາກ ສຕລ.
- Head-to-Head: ຜົນສະຫຼຸບຂອງຜົນການແຂ່ງຂັນລະຫວ່າງສະເພາະສະໂມສອນທີ່ມີຄະແນນເທົ່າກັນ.
- (F): ນັກກິລາຕ່າງປະເທດທີ່ບໍ່ຢູ່ໃນສະມາຊິກສະຫະພັນບານເຕະອາຊີ
- (A): ນັກກິລາຕ່າງປະເທດທີ່ຢູ່ໃນສະມາຊິກສະຫະພັນບານເຕະອາຊີ
- (AS): ນັກກິລາຕ່າງປະເທດທີ່ຢູ່ໃນສະມາຊິກສະຫະພັນບານເຕະອາຊ້ຽນ

## ພາກທີ II

## ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການບໍລິຫານຈັດການແຂ່ງຂັນ ລາວລີກ 1

### ມາດຕາ 2 : ສະຫະພັນບານເຕະແຫ່ງຊາດລາວ

ສະຫະພັນບານເຕະແຫ່ງຊາດລາວເປັນອົງການຈັດຕັ້ງທີ່ຄຸ້ມຄອງ, ບໍລິຫານ ແລະ ຖືສິດທີ່ກ່ຽວຂ້ອງໃນດ້ານຕ່າງໆຂອງການແຂ່ງຂັນບານເຕະ ລາວລີກ 1, ໂດຍມີຈຸດປະສົງເພື່ອພັດທະນາກິລາບານເຕະພາຍໃນປະເທດ ໃຫ້ມີການຂະຫຍາຍໂຕຢ່າງຍືນຍົງ ແລະ ກ້າວໄປສູ່ການແຂ່ງຂັນອາຊີບຢ່າງມີປະສິດທິຜົນ ໂດຍ ສຕລ ມີໜ່ວຍງານຮັບຜິດຊອບຄື: ພະແນກຈັດການແຂ່ງຂັນ ຊຶ່ງມີໜ້າທີ່ໃນການຈັດຕັ້ງປະຕິບັດ, ດໍາເນີນແຜນການຈັດການແຂ່ງຂັນຕ່າງໆຂອງການແຂ່ງຂັນບານເຕະ ລາວລີກ 1 ແລະ ການປະສານງານຮ່ວມກັບ ສະໂມສອນທີ່ເຂົ້າຮ່ວມແຂ່ງຂັນ ລວມທັງພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການແຂ່ງຂັນ.

1. ພາລະບົດບາດ ແລະ ໜ້າທີ່ ຂອງພະແນກຈັດການແຂ່ງຂັນ ສຕລ ມີຄື:

1.1 ຄຸ້ມຄອງ, ສ້າງແຜນ ແລະ ບໍລິຫານການຈັດການແຂ່ງຂັນ.

1.2 ຮັບຜິດຊອບຂໍການອະນຸມັດແຜນຈັດການແຂ່ງຂັນຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ.

1.3 ປະສານງານກັບສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນໃນວຽກງານບໍລິຫານການແຂ່ງຂັນລາວລີກ 1 ໃຫ້ມີຄວາມເປັນເອກະພາບ ແລະ ເປັນໄປຕາມແຜນການ.

1.4 ກວດສອບ ແລະ ຮັບຮອງບັນດາສະຖານທີ່ຈັດການແຂ່ງຂັນທີ່ສະເໜີມາໂດຍສະໂມສອນເຂົ້າຮ່ວມການແຂ່ງຂັນ.

1.5 ຈັດຕັ້ງການຄັດເລືອກ ແລະ ແຕ່ງຕັ້ງເຈົ້າໜ້າທີ່ຈັດການແຂ່ງຂັນໄປປະຕິບັດໜ້າທີ່ໃນການແຂ່ງຂັນ.

1.6 ລວບລວມ, ວິເຄາະ ແລະ ປະເມີນຜົນການແຂ່ງຂັນໃນແຕ່ລະໄລຍະແລ້ວລາຍງານຕໍ່ອະນຸກຳມະການຈັດການແຂ່ງຂັນປະຈຳ ສຕລ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນ.

1.7 ລວບລວມ, ຄົ້ນຄວ້າ ແລະ ລາຍງານຕໍ່ອະນຸກຳມະການວິໄນຂອງ ສຕລ ໃນກໍລະນີມີການກະທຳຜິດກົດລະບຽບການແຂ່ງຂັນຂອງພາກສ່ວນໃດໜຶ່ງໃນການແຂ່ງຂັນ.

1.8 ປະຕິບັດໜ້າທີ່ອື່ນໆທີ່ໄດ້ຮັບມອບໝາຍຈາກອະນຸກຳມະການຈັດການແຂ່ງຂັນປະຈຳ ສຕລ.

**ມາດຕາ 3 : ລະບົບຕຸລາການຂອງ ສຕລ**

ລະບົບຕຸລາການຂອງ ສຕລ ປະກອບດ້ວຍ 2 ອະນຸກຳມະການທີ່ຖືກແຕ່ງຕັ້ງຈາກ ສຕລ ຄື: ອະນຸກຳມະການວິໄນ ແລະ ອະນຸກຳມະການອຸທອນ ຊຶ່ງປະຕິບັດໜ້າທີ່ຕາມພາລະບົດບາດດັ່ງລຸ່ມນີ້:

1.ອະນຸກຳມະການວິໄນ (Disciplinary Committee) ມີສິດ ແລະ ໜ້າທີ່:

1.1 ພິຈາລະນາການປະທ້ວງຂອງສະໂມສອນໃນການແຂ່ງຂັນ ແລະ ໃສ່ວິໄນຕໍ່ການກະທຳຜິດຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບການແຂ່ງຂັນຕາມການປະທ້ວງ.

1.2 ພິຈາລະນາການໃສ່ວິໄນເຈົ້າໜ້າທີ່ຈັດການແຂ່ງ, ເຈົ້າໜ້າທີ່ສະໂມສອນ, ນັກກິລາ ແລະ ຜູ້ຊົມທີ່ກະທຳຜິດກົດລະບຽບການແຂ່ງຂັນຕາມການລາຍງານຂອງພະແນກຈັດການແຂ່ງຂັນ.

1.3 ພິຈາລະນາເພີ່ມໂທດ, ຫຼຸດໂທດ ຫຼື ຍົກເລີກໂທດໂດຍບໍ່ກ່ຽວຂ້ອງກັບຜົນການແຂ່ງຂັນ. ຍົກເວັ້ນກໍລະນີຖືກປັບເສຍຕາມກົດລະບຽບການແຂ່ງຂັນຈະບໍ່ສາມາດພິຈາລະນາປ່ຽນແປງໄດ້, ໃນກໍລະນີຖືກປັບເສຍອະນຸກຳມະການຈະສາມາດພິຈາລະນາການຫຼຸດໂທດ ຫຼື ຍົກເລີກໂທດຂອງບັດເຫຼືອງບັດແດງເທົ່ານັ້ນ.

1.4 ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ຮັບມອບໝາຍຈາກ ສຕລ.

2. ອະນຸກຳມະການອຸທອນ (Appeal Committee) ມີສິດ ແລະ ໜ້າທີ່:

2.1 ພິຈາລະນາການອຸທອນຈາກສະໂມສອນ, ເຈົ້າໜ້າທີ່ຈັດການແຂ່ງຂັນ, ເຈົ້າໜ້າທີ່ສະໂມສອນ ແລະ ນັກກິລາ ໃນການແຂ່ງຂັນທີ່ບໍ່ເຫັນດີກັບຄຳຕັດສິນຂອງອະນຸກຳມະການວິໄນ.

2.2 ພິຈາລະນາເພີ່ມໂທດ, ຫຼຸດໂທດ ຫຼື ຍົກເລີກໂທດບັດເຫຼືອງບັດແດງໂດຍບໍ່ກ່ຽວຂ້ອງກັບຜົນການແຂ່ງຂັນ.

2.3 ປະຕິບັດໜ້າທີ່ອື່ນໆຕາມທີ່ໄດ້ຮັບມອບໝາຍຈາກ ສຕລ.

**ມາດຕາ 4: ອະນຸກໍາມະການອື່ນໆ**

ສຕລ ຈະມີການແຕ່ງຕັ້ງອະນຸກໍາມະການຝ່າຍອື່ນໆ ເພື່ອຈັດຕັ້ງປະຕິບັດວຽກງານທີ່ກ່ຽວຂ້ອງກັບການຈັດການແຂ່ງຂັນເຊັ່ນ: ອະນຸກໍາມະການຈັດການແຂ່ງຂັນ, ອະນຸກໍາມະການຕັດສິນ, ອະນຸກໍາມະການເຕັກນິກວິທະຍາ ແລະ ອະນຸກໍາມະການການຕະຫຼາດ ແລະ ສື່ມວນຊົນ, ອະນຸກໍາມະການການແພດ, ອະນຸກໍາມະການການເງິນ ແລະ ອະນຸກໍາມະການອື່ນໆ. ບັນດາອະນຸກໍາມະການທີ່ແຕ່ງຕັ້ງໂດຍ ສຕລ ຈະປະຕິບັດພາລະບົດບາດຕາມການມອບໝາຍວຽກຂອງຄະນະບໍລິຫານງານ ສຕລ ແລະ ກົດລະບຽບທີ່ກ່ຽວຂ້ອງ.

**ມາດຕາ 5: ສະໂມສອນບານເຕະທີ່ເຂົ້າຮ່ວມການແຂ່ງຂັນ**

1. ສະໂມສອນບານເຕະທີ່ຈະເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ 1 ຕ້ອງປະຕິບັດຕາມເງື່ອນໄຂດັ່ງລຸ່ມນີ້:
   - 1.1 ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະທີ່ຈັດຂຶ້ນໂດຍ ສຕລ ຕ້ອງເປັນສະມາຊິກສົມບູນຂອງ ສຕລ ແລະ ຈະຕ້ອງຜ່ານການແຂ່ງຂັນຕາມລະດັບທີ່ ສຕລ ກໍານົດ.
   - 1.2 ສະໂມສອນທີ່ຕ້ອງການເຂົ້າຮ່ວມການແຂ່ງຂັນຈະຕ້ອງໄດ້ຮັບໃບອະນຸຍາດສະໂມສອນ (Club Licensing) ຕາມຫຼັກການໃນກົດລະບຽບ Club Licensing ຂອງ ສຕລ.
   - 1.3 ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນຕ້ອງເຄົາລົບ ແລະ ປະຕິບັດຕາມກົດລະບຽບການແຂ່ງຂັນທີ່ ສຕລ ວາງອອກ.
   - 1.4 ສະໂມສອນຕ້ອງເຄົາລົບ ແລະ ປະຕິບັດຕາມລະບຽບການບໍລິຫານຈັດການແຂ່ງຂັນ, ລະບຽບທີ່ກ່ຽວຂ້ອງກັບການແຂ່ງຂັນ ແລະ ມະຕິຕົກລົງຕ່າງໆຂອງອະນຸກໍາມະການຈັດການແຂ່ງຂັນ ສຕລ.
   - 1.5 ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນຕ້ອງຮັບປະກັນສະພາບຂອງສະຖານທີ່ແຂ່ງຂັນຂອງສະໂມສອນຕົນເອງໃຫ້ຢູ່ໃນສະພາບພ້ອມແຂ່ງຂັນຕາມມາດຕະຖານຂອງການແຂ່ງຂັນຕະຫຼອດລະດູການ.
   - 1.6 ສະໂມສອນເຈົ້າບ້ານຈະຕ້ອງຮັບຜິດຊອບກະກຽມອຸປະກອນຈັດການແຂ່ງຂັນພາກສະໜາມຕ່າງໆຕາມກົດລະບຽບການແຂ່ງຂັນ.
   - 1.7 ສະໂມສອນຕ້ອງແຕ່ງຕັ້ງຜູ້ປະສານງານຈັດການແຂ່ງຂັນຂອງສະໂມສອນໂຕເອງ (LOC) ເພື່ອປະສານງານກັບເຈົ້າໜ້າທີ່ຈັດການແຂ່ງຂັນຂອງ ສຕລ ແລະ ອຸປະກອນພາກສະໜາມ, ພ້ອມທັງຮັບຜິດຊອບດູແລຄວາມຮຽບຮ້ອຍຂອງການຈັດການແຂ່ງຂັນຢູ່ສະໜາມດັ່ງກ່າວ.
2. ຮັບຜິດຊອບຄ່າໃຊ້ຈ່າຍການກະກຽມພາກສະໜາມທີ່ກ່ຽວຂ້ອງກັບການແຂ່ງຂັນເຊັ່ນ:
   - 2.1. ຄ່າແຮງງານຂອງພະນັກງານບໍລິຫານພາກສະໜາມແຂ່ງຂັນຂອງສະໂມສອນ.
   - 2.2. ຄ່າໃຊ້ຈ່າຍຂອງວຽກງານປ້ອງກັນ ແລະ ວຽກງານແພດປະຈໍາສະໜາມ.
   - 2.3. ຄ່າໃຊ້ຈ່າຍຂອງເດັກເກັບບານ ແລະ ຫາມເປ.
   - 2.4. ຄ່າໃຊ້ຈ່າຍໃນການກະກຽມນໍ້າດື່ມ ແລະ ນໍ້າກ້ອນໃຫ້ເຈົ້າໜ້າທີ່ຈັດການແຂ່ງຂັນຈາກ ສຕລ ຕາມຄວາມເໝາະສົມໃນນັດທີ່ເປັນເຈົ້າບ້ານ.
   - 2.5. ຄ່າໃຊ້ຈ່າຍໃນການອານາໄມສະໜາມແຂ່ງຂັນ ແລະ ອື່ນໆກ່ຽວກັບການນໍາໃຊ້ສະໜາມ.
3. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນມີສິດໃນດໍາເນີນການຕະຫຼາດຂອງສະໂມສອນຕົນເອງໂດຍບໍ່ຂັດກັບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ນະໂນບາຍການຕະຫຼາດຂອງ ສຕລ.

4. ຄ່າໃຊ້ຈ່າຍການເດີນທາງ ແລະ ບໍລິຫານການແຂ່ງຂັນ, ສະໂມສອນຕ້ອງຮັບຜິດຊອບເອງ.
5. ສະໂມສອນທີ່ເປັນເຈົ້າບ້ານຕ້ອງຈັດສັນບ່ອນນັ່ງໃຫ້ຄະນະບໍລິຫານງານຂອງສະໂມສອນຄູ່ແຂ່ງຂັນຕາມຄວາມເໝາະສົມ, ແບ່ງເຂດ ແລະ ກໍານົດຈໍານວນແຟນບານເຂົ້າສະໜາມໃຫ້ເໝາະສົມຕາມມາດຕະການໃນການແຂ່ງຂັນ.
6. ສະໂມສອນມີສິດໃນການຈັດຈໍາໜ່າຍບັດເຂົ້າຊົມການແຂ່ງຂັນຢູ່ສະໜາມແຂ່ງຂັນຂອງສະໂມສອນຕົນເອງ, ການກໍານົດລາຄາແມ່ນຕ້ອງຜ່ານການປຶກສາຫາລືຮ່ວມກັບຝ່າຍຈັດການແຂ່ງຂັນເພີ່ມເຕີມ ແລະ ຫ້າມຈໍາໜ່າຍເກີນຄວາມຈຸຂອງສະໜາມແຂ່ງຂັນ.
7. ສະໂມສອນເຈົ້າບ້ານຕ້ອງກະກຽມລົດໂຮງໝໍ 1 ຄັນພ້ອມດ້ວຍອຸປະກອນປະຖົມພະຍາບານທີ່ຈໍາເປັນ ແລະ ທີມແພດມາປະຈໍາສະໜາມແຂ່ງຂັນກ່ອນເລີ່ມການແຂ່ງຂັນຢ່າງໜ້ອຍ 90 ນາທີ, ຖ້າຫາກບໍ່ມີລົດໂຮງໝໍ ແລະ ທີມແພດປະຈໍາສະໜາມຝ່າຍຈັດການແຂ່ງຂັນຈະບໍ່ອະນຸຍາດໃຫ້ເລີ່ມການແຂ່ງຂັນເດັດຂາດ ແລະ ສະໂມສອນເຈົ້າບ້ານຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຂອງເຈົ້າໜ້າທີ່ຈັດການແຂ່ງຂັນ ແລະ ສະໂມສອນຄູ່ແຂ່ງຂັນໃນກໍລະນີການແຂ່ງຂັນຖືກເລື່ອນ ຫຼື ຍົກເລີກ.
8. ສະໂມສອນເຈົ້າບ້ານຕ້ອງກະກຽມສະໜາມສໍາລັບການຝຶກຊ້ອມຂອງສະໂມສອນຄູ່ແຂ່ງຂັນ 1 ມື້ກ່ອນການແຂ່ງຂັນຢູ່ສະໜາມແຂ່ງຂັນເປັນເວລາ 1 ຊົ່ວໂມງ ໂດຍອີງຕາມເງື່ອນໄຂຂອງສະພາບສະໜາມແຂ່ງຂັນ. ຖ້າຫາກສະໂມສອນເຈົ້າບ້ານບໍ່ປະຕິບັດຕາມຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ.
9. ສະໂມສອນຕ້ອງຮັບຜິດຊອບ ແລະ ປະຕິບັດວຽກງານອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນຕາມທີ່ກໍານົດໄວ້ໃນຄູ່ມືຈັດການແຂ່ງຂັນຂອງ ສຕລ.
10. ສະໂມສອນໃດທີ່ຖືກກວດພົບວ່າມີຄວາມຜິດໃນການບໍ່ປະຕິບັດພັນທະສັນຍາກັບພະນັກງານ ຫຼື ນັກກິລາຂອງສະໂມສອນຕົນເອງ, ສະໂມສອນຈະຖືກປະຕິບັດວິໄນຕາມການຕັດສິນຂອງອະນຸກໍາມະການລະບຽບວິໄນຂອງ ສຕລ ໂດຍອີງໃສ່ກົດລະບຽບ ແລະ ແນວທາງປະຕິບັດຢູ່ພາຍໃນ ແລະ ສາກົນ.
11. ສະໂມສອນຕ້ອງປ່ອຍໂຕນັກກິລາໃຫ້ເຂົ້າຮ່ວມຝຶກຊ້ອມ ແລະ ແຂ່ງຂັນ ກັບທີມຊາດ ຕາມການແຈ້ງການຂອງ ສຕລ, ຖ້າຫາກສະໂມສອນບໍ່ປະຕິບັດຕາມຈະຖືກພິຈາລະນາລົງວິໄນໂດຍອະນຸກໍາມະການວິໄນຂອງ ສຕລ.

### ມາດຕາ 6: ການບໍລິຫານສິດທິປະໂຫຍດຂອງການແຂ່ງຂັນ

ສຕລ ເປັນຜູ້ຖືສິດໃນການດໍາເນີນການຕະຫຼາດ ແລະ ຈັດຫາການສະໜັບສະໜູນການແຂ່ງຂັນ ລາວລີກ 1 ແຕ່ພຽງຜູ້ດຽວໂດຍມີລາຍລະອຽດດັ່ງລຸ່ມນີ້:

1. ສຕລ ຖືສິດພຽງຜູ້ດຽວໃນການຖ່າຍທອດສົດການແຂ່ງຂັນ ລາວລີກ 1, ຜົນປະໂຫຍດທີ່ເກີດຈາກການຖ່າຍທອດສົດການແຂ່ງຂັນ ລາວລີກ 1 ແມ່ນເປັນຂອງ ສຕລ. ໃນກໍລະນີສະໂມສອນ ຫຼື ອົງກອນໃດໜຶ່ງທີ່ຕ້ອງການຖ່າຍທອດສົດການແຂ່ງຂັນຕ້ອງໄດ້ຮັບການຍິນຍອມ ແລະ ອະນຸຍາດຈາກສຕລກ່ອນ ຈຶ່ງສາມາດດໍາເນີນການໄດ້ ຜົນປະໂຫຍດທີ່ເກີດຈາກຖ່າຍທອດສົດການແຂ່ງຂັນ ລາວລີກ 1 ສຕລ ແລະ ຜູ້ທີ່ໄດ້ຮັບອະນຸຍາດຈະໄດ້ມີການຕົກລົງກັນ.
2. ສຕລ ຖືສິດໃນການຈັດຫາຜູ້ສະໜັບສະໜູນການການແຂ່ງຂັນບານເຕະ ລາວລີກ 1 ພຽງຜູ້ດຽວ.

3. ສຕລ ຖືສິດການຕິດຕັ້ງປ້າຍໂຄສະນາຂ້າງສະໜາມຕາມຈໍານວນ ແລະ ຮູບແບບທີ່ອະນຸກໍາມະການຈັດການແຂ່ງຂັນກໍານົດອອກ.ຜົນປະໂຫຍດທີ່ເກີດຈາກການຕິດຕັ້ງປ້າຍໂຄສະນາຂ້າງສະໜາມທີ່ອະນຸກໍາມະການຈັດການແຂ່ງຂັນກໍານົດອອກແມ່ນເປັນຂອງ ສຕລ.
4. ສະໂມສອນເຈົ້າບ້ານໄດ້ຮັບສິດໃນການຕັ້ງປ້າຍໂຄສະຂ້າງສະໜາມຕາມຈໍານວນທີ່ ສຕລ ກໍານົດໃຫ້ ແລະ ປ້າຍຕ້ອງເປັນໄປຕາມມາດຕະຖານທີ່ ສຕລ ກໍານົດ. ສະໂມສອນເຈົ້າບ້ານມີສິດທິໃນການດໍາເນີນກິດຈະກໍາການຕະຫຼາດຮ່ວມກັບຜູ້ສະໜັບສະໜູນຂອງສະໂມສອນໂຕເອງໃນບໍລິເວນຂອບນອກສະຖານທີ່ແຂ່ງຂັນໂດຍບໍ່ຂັດກັບແນວທາງການຕະຫຼາດຂອງ ສຕລ. ສະໂມສອນມີຄວາມຮັບຜິດຊອບໃນການດູແລຮັກສາປ້າຍໂຄສະນາຂອງການແຂ່ງຂັນທີ່ຕິດຕັ້ງຢູ່ໃນສະໜາມຂອງຕົນເອງໃຫ້ຢູ່ໃນສະພາບຮຽບຮ້ອຍ ແລະ ສາມາດນໍາໃຊ້ໄດ້ຈົນຈົບການແຂ່ງຂັນ.
5. ສະໂມສອນຕ້ອງອະນຸຍາດໃຫ້ ສຕລ ນໍາໃຊ້ເຄື່ອງໝາຍສະໂມສອນ, ຮູບພາບ, ນັກກິລາ ແລະ ສະຖານທີ່ຂອງສະໂມສອນໃນການດໍາເນີນການຕະຫຼາດ ແລະ ໂຄສະນາສົ່ງເສີມການແຂ່ງຂັນບານເຕະ ລາວລີກ 1.
6. ສະໂມສອນຕ້ອງໃຫ້ຄວາມຮ່ວມມືໃນການເຂົ້າຮ່ວມການຖະແຫຼງຂ່າວກ່ອນ ແລະ ຫຼັງການແຂ່ງຂັນທຸກໆຄັ້ງຕາມການແຈ້ງຂອງຝ່າຍຈັດການແຂ່ງຂັນບານເຕະລາວລີກ 1.
7. ສະໂມສອນຕ້ອງອໍານວຍຄວາມສະດວກໃຫ້ນັກກິລາຂອງຕົນເອງໃນການໃຫ້ສໍາພາດສັ້ນຫຼັງການແຂ່ງຂັນ (Flash Interview) ຕາມການແຈ້ງຂອງຝ່າຍຈັດການແຂ່ງຂັນບານເຕະລາວລີກ 1.
8. ໃນກໍລະນີທີ່ສະໂມສອນແຂ່ງຂັນມີຈຸດປະສົງຈັດຈໍາໜ່າຍບັດເຂົ້າຊົມການແຂ່ງຂັນ, ສະໂມສອນຕ້ອງສະເໜີຂໍອະນຸຍາດຈາກ ສຕລ ຢ່າງເປັນລາຍລັກອັກສອນກ່ອນໜ້າ 7 ວັນລັດຖະການໂດຍຕ້ອງສົ່ງແບບຂອງບັດເຂົ້າຊົມທີ່ຈະຈັດຈໍາໜ່າຍມາພ້ອມເພື່ອການອະນຸມັດຈາກຝ່າຍຈັດການແຂ່ງຂັນ, ຈັດສົ່ງບັດເຂົ້າຊົມໃຫ້ກັບຝ່າຍຈັດການແຂ່ງຂັນເພື່ອມອບໃຫ້ກັບຜູ້ສະໜັບສະໜູນການແຂ່ງຂັນໃນແຕ່ລະນັດເປັນຈໍານວນ 50 ໃບ, ແບ່ງເປັນບັດວີໄອພີ ຈໍານວນ 20 ບັດ ແລະ ບັດທົ່ວໄປ 30 ບັດໂດຍບໍ່ເສຍຄ່າບັດເຂົ້າຊົມການແຂ່ງຂັນ.

**ມາດຕາ 7: ສັນຍາວ່າຈ້າງ**

1. ສັນຍາວ່າຈ້າງລະຫວ່າງສະໂມສອນ ແລະ ນັກກິລາ:
   1.1 ນັກກິລາບານເຕະທີ່ລົງທະບຽນເຂົ້າແຂ່ງຂັນໃນເປັບຊີ ລາວລີກ 1 ຕ້ອງສະແດງສັນຍາສະບັບສໍາເນົາທີ່ຖືກ ຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.
   1.2 ໄລຍະເວລາສັນຍາຂອງສະໂມສອນກັບນັກກິລາທີ່ເຂົ້າຮ່ວມການແຂ່ງຂັນໃນ ເປັບຊີລາວລີກ 1 ຕ້ອງມີໄລຍະເວລາຕໍ່າສຸດເຄິ່ງລະດູການການແຂ່ງຂັນຂຶ້ນໄປ.
   1.3 ໃນກໍລະນີ ສະໂມສອນເຊັນສັນຍາກັບນັກກິລາບານເຕະຕ່າງປະເທດໃນສັນຍາຕ້ອງປະກອບມີໃບອະນຸຍາດໂອນຍ້າຍນັກກິລາລະຫວ່າງປະເທດ (ITC) ທັງແບບນັກກິລາອາຊີບ ແລະ ນັກກິລາສະໝັກຫຼິ້ນຈາກ ລະບົບ TMS ຂອງ FIFA ໃຫ້ຖືກຕ້ອງຕາມລະບຽບການ. ໃນກໍລະນີນີ້ລວມທັງນັກກິລາສັນຊາດລາວ ທີ່ຫຼິ້ນຢູ່ຕ່າງປະເທດແລ້ວໂອນຍ້າຍກັບມາດ້ວຍ.
   1.4 ໃນກໍລະນີທີ່ນັກກິລາຕ່າງປະເທດແຈ້ງວ່າບໍ່ເຄີຍມີສັນຍາກັບສະໂມສອນໃດມາກ່ອນໃຫ້ດໍາເນີນການຂໍໜັງສືຢັ້ງຢືນຈາກສະຫະພັນບານເຕະຂອງປະເທດຂອງນັກກິລາດັ່ງກ່າວພ້ອມທັງດໍາເນີນການໂອນຍ້າຍຕາມກົດລະບຽບການໂອນຍ້າຍນັກກິລາລະຫວ່າງປະເທດ.

1.5 ນັກກິລາຄົນໃດທີ່ປອມແປງເອກະສານ ແລະ ໃຫ້ຂໍ້ມູນຜິດໃນການເຮັດສັນຍາໂດຍສະເພາະນັກກິລາຕ່າງປະເທດກ່ຽວກັບອະດີດຕົ້ນສັງກັດຂອງນັກກິລາຖ້າຫາກ ສຕລ ກວດພົບ ສະໂມສອນທີ່ເຊັນສັນຍາ ແລະ ນັກກິລາຈະຖືກລົງໂທດຕາມກົດລະບຽບການໂອນຍ້າຍນັກກິລາຂອງ ຟີຟາ ແລະ ການພິຈາລະນາຂອງ ຄະນະກຳມະການລະບຽບວິໄນ ສຕລ.

1.6 ໃນກໍລະນີທີ່ ສຕລ ໄດ້ຮັບແຈ້ງວ່ານັກກິລາຍັງມີພັນທະຜູກພັນ ຫຼື ເປັນນັກກິລາທີ່ຍັງບໍ່ໝົດສັນຍາກັບສະໂມສອນ ແລະ ລົງທະບຽນຢູ່ສະຫະພັນບານເຕະຂອງປະເທດໃດໜຶ່ງແລ້ວ ນັກກິລາຄົນດັ່ງກ່າວຈະຖືກໂຈະການແຂ່ງຂັນ ແລະ ດຳເນີນການກວດສອບຖ້າມີຄວາມຜິດຈະຖືກລົງໂທດຖອນອອກຈາກການແຂ່ງຂັນ.

1.7 ສາມາດອີງຕາມຮ່າງສັນຍາໃນພາກເອກະສານຊ້ອນທ້າຍ 2 ໃນການເຮັດສັນຍາກັບພະນັກງານສະໂມສອນ ແລະ ນັກກິລາ.

2. ຂໍ້ກຳນົດແນວທາງໃນການຕໍ່ສັນຍາ ແລະ ການເຈລະຈາສັນຍາວ່າຈ້າງສະບັບໃໝ່.

2.1 ໃນກໍລະນີທີ່ນັກກິລາມີສັນຍາກັບສະໂມສອນໃດໜຶ່ງແລ້ວ ແລະ ສັນຍາຍັງບໍ່ໝົດຫ້າມນັກກິລາ ຫຼື ນາຍໜ້າຂອງນັກກິລາດຳເນີນການເຈລະຈາກັບສະໂມສອນອື່ນໂດຍເດັດຂາດຍົກເວັ້ນແຕ່ກໍລະນີມີການກຳໜົດເງື່ອນໄຂໄວ້ໃນສັນຍາ.

2.2 ໃນລັກສະນະດຽວກັນຫ້າມສະໂມສອນ ຫຼື ຕົວແທນຂອງສະໂມສອນດຳເນີນການເຈລະຈາກັບນັກກິລາທີ່ມີສັນຍາວ່າຈ້າງຢູ່ກັບສະໂມສອນອື່ນແລ້ວ ແລະ ຍັງບໍ່ໝົດສັນຍາເພື່ອຊັກຊວນມາຢູ່ກັບສະໂມສອນຂອງຕົວເອງ ຍົກເວັ້ນກໍລະນີທີ່ໄດ້ຮັບການຍິນຍອມຈາກສະໂມສອນຕົ້ນສັງກັດຂອງນັກກິລາດັ່ງກ່າວຢ່າງເປັນລາຍລັກອັກສອນແລ້ວຈຶ່ງສາມາດດຳເນີນການໄດ້. ຖ້າຫາກຜູ້ໃດຝ່າຝືນຂໍ້ກຳໜົດດັ່ງກ່າວນີ້ຈະຖືກລົງໂທດ ຕາມກົດລະບຽບທີ່ກ່ຽວຂ້ອງ ແລະ ການພິຈາລະນາຂອງຄະນະກຳມະການລະບຽບວິໄນ ສຕລ ຕາມຄວາມເໝາະສົມ.

2.3 ການເຈລະຈາລະຫວ່າງສະໂມສອນບານເຕະກັບນາຍໜ້າຂອງນັກກິລາ ຫຼື ນັກກິລາທີ່ມີສັນຍາຢູ່ກັບສະໂມສອນອື່ນແລ້ວຈະສາມາດດຳເນີນໄດ້ໃນກໍລະນີດັ່ງຕໍ່ໄປນີ້:

- ສັນຍາວ່າຈ້າງຂອງນັກກິລາດັ່ງກ່າວກັບສະໂມສອນຕົ້ນສັງກັດເຫຼືອໄລຍະເວລາໜ້ອຍກວ່າ 3 ເດືອນເຖິງຢ່າງໃດກໍ່ຕາມສະໂມສອນທີ່ຕ້ອງການເຈລະຈາ ຈະຕ້ອງເຮັດໜັງສືແຈ້ງສະໂມສອນຕົ້ນສັງກັດຕາມລະບຽບສະບັບນີ້. ຖ້າຫາກສະໂມສອນຕົ້ນສັງກັດຂອງນັກກິລາບໍ່ໄດ້ຮັບການສະເໜີຂໍເຈລະຈາເປັນລາຍລັກອັກສອນ ສະໂມສອນຕົ້ນສັງກັດມີສິດໃນການຟ້ອງຮ້ອງສະໂມສອນທີ່ມາເຈລະຈາກັບນັກກິລາຂອງຕົນມາຍັງຄະນະກຳມະການລະບຽບວິໄນຂອງ ສຕລ ໄດ້.
- ໃນກໍລະນີທີ່ສະໂມສອນ ແລະ ນັກກິລາມີພັນທະສັນຍາຜູກພັນກັນຢູ່ແລະບໍ່ໄດ້ດຳເນີນການຢ່າງໃດຢ່າງໜຶ່ງຕາມຂໍ້ກຳໜົດຂ້າງເທິງກ່ອນສັນຍາຈະສິ້ນສຸດ 3 ເດືອນໃຫ້ຖືວ່ານັກກິລາສາມາດເຈລະຈາກັບສະໂມສອນອື່ນໄດ້.

3. ໃນກໍລະນີທີ່ນັກກິລາ ຫຼື ພະນັກງານຂອງສະໂມສອນຮ້ອງຮຽນຫາ ສຕລ ວ່າຖືກສະໂມສອນຕົ້ນສັງກັດບໍ່ປະຕິບັດສັນຍາວ່າຈ້າງຢ່າງເປັນທຳ ຫຼື ສະໂມສອນຮ້ອງຮຽນວ່າ ນັກກິລາ ຫຼື ນາຍໜ້າຂອງນັກກິລາ ລະເມີດຂໍ້ກຳໜົດຕາມສັນຍາວ່າຈ້າງ ແລະ ເມື່ອ ສຕລ ກວດສອບແລ້ວພົບວ່າມີຄວາມຜິດຈິງ ນັກກິລາ, ນາຍໜ້າ ແລະ ສະໂມສອນທີ່ກະທຳຜິດຈະຖືກລົງໂທດຕາມການພິຈາລະນາ ຂອງຄະນະກຳມະການລະບຽບວິໄນ ສຕລ.

4. ຂໍ້ກຳນົດ ແລະ ຂັ້ນຕອນຂອງການດຳເນີນການຍື່ນຄຳຮ້ອງກໍລະນີບໍ່ປະຕິບັດພັນທະສັນຍາວ່າຈ້າງ
    4.1 ຜູ້ຍື່ນຄຳຮ້ອງຕ້ອງມີທະບຽນໃນການແຂ່ງຂັນ ແລະ ມີສັນຍາວ່າຈ້າງກັບຜູ້ລະເມີດສັນຍາວ່າຈ້າງ.
    4.2 ການຍື່ນຄຳຮ້ອງຕ້ອງຍື່ນພາຍໃນ 3 ເດືອນນັບຈາກມື້ທີ່ຖືກລະເມີດພັນທະສັນຍາວ່າຈ້າງ ໂດຍຕ້ອງຄັດຕິດ ບັນດາຫຼັກຖານ ແລະ ເອກະສານທີ່ກ່ຽວຂ້ອງມາພ້ອມ.
    4.3 ເມື່ອ ສຕລ ໄດ້ຮັບຄຳຮ້ອງແລ້ວຈະແຈ້ງໃຫ້ຝ່າຍຖືກຮ້ອງຮຽນຊາບ ແລະ ຊີ້ແຈງການຮ້ອງຟ້ອງດັ່ງກ່າວຕາມກຳ ນົດເວລາທີ່ ສຕລ ກຳນົດໃຫ້. ຫຼັງຈາກນັ້ນຈຶ່ງຈັດໃຫ້ມີການໄກ່ເກ່ຍລະຫວ່າງຜູ້ຍື່ນຄຳຮ້ອງ ແລະ ຜູ້ຖືກຮ້ອງຮຽນ.
    4.4 ໃນກໍລະນີບໍ່ສາມາດໄກ່ເກ່ຍກັນໄດ້ແມ່ນໃຫ້ຍື່ນຕໍ່ອະນຸກຳມະການລະບຽບວິໄນຂອງ ສຕລ ເປັນຜູ້ຕັດສິນ ແລະ ຝ່າຍທີ່ຖືກຕັດສິນວ່າມີຄວາມຜິດແມ່ນຈະຖືກປະຕິບັດວິໄນຕາມລະບຽບທີ່ກ່ຽວຂ້ອງ.
    4.5 ໃນໄລຍະທີ່ສະໂມສອນຖືກພິຈາລະນາຄວາມຜິດ ສຕລ ມີອຳນາດງົດຈ່າຍເງິນອຸດໜູນສະໂມສອນໄວ້ກ່ອນຈົນກວ່າຈະມີຂໍ້ສະຫຼຸບທີ່ຊັດເຈນຈາກພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 8: ການພັດທະນານັກກິລາພາຍໃນສະໂມສອນ**

1. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນ ລາວລີກ 1 ຈະໄດ້ສິດສົ່ງທີມນັກກິລາເຍົາວະຊົນລຸ້ນສືບທອດ ອາຍຸບໍ່ເກີນ 16 ປີ ແລະ 19 ປີ ຂອງສະໂມສອນຕົນເອງ ພ້ອມທັງຂຶ້ນທະບຽນນັກກິລາເຍົາວະຊົນທັງສອງລຸ້ນດັ່ງກ່າວໃນລະບົບລົງທະບຽນຂອງ ສຕລ.
2. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນລາວລີກ 1 ຕ້ອງປະກອບສ່ວນສົ່ງທີມເຍົາວະຊົນ U-16 ແລະ U-19 ເຂົ້າຮ່ວມການແຂ່ງຂັນເຍົາວະຊົນປະຈຳປີ ທີ່ ສຕລ ຈັດຂຶ້ນ.
3. ສະໂມສອນທີ່ມີນັກກິລາເຍົາວະຊົນເຂົ້າຮ່ວມການແຂ່ງຂັນຂອງ ສຕລ ຈະໄດ້ຮັບການອຸດໜູນເພີ່ມເຕີມຈາກ ສຕລ ຕາມແຜນຈັດການແຂ່ງຂັນເຍົາວະຊົນຂອງ ສຕລ.
4. ສະໂມສອນຕ້ອງເຂົ້າຮ່ວມ ແລະ ປະຕິບັດຕາມກິດຈະກຳການພັດທະນານັກກິລາເຍົາວະຊົນຂອງ ສຕລ ແລະການພັດທະນາບານເຕະຮ່ວມມືກັບສາກົນທີ່ຈັດຂຶ້ນໂດຍ ສຕລ.
5. ກໍລະນີທີ່ສະໂມສອນ ລາວລີກ 1 ທີ່ບໍ່ມີຄວາມພ້ອມໃນການສົ່ງທີມເຍົາວະຊົນຂອງຕົນເອງ ເຂົ້າຮ່ວມການແຂ່ງຂັນລາຍການU-16 ແລະ U-19 ສະໂມສອນຈະຕ້ອງເຮັດໜັງສືຢ່າງເປັນທາງການຫາ ສຕລ ໂດຍຈະຕ້ອງແຈ້ງເຫດຜົນທີ່ຊັດເຈນເພື່ອລາຍງານຫາຄະນະຈັດການແຂ່ງຂັນຮັບຊາບຕາມໄລຍະເວລາທີ່ກຳນົດ.

## ພາກທີ III

## ຂໍ້ກຳນົດການເຂົ້າຮ່ວມແຂ່ງຂັນ, ການຖອນສະໂມສອນອອກຈາກການແຂ່ງຂັນ, ການຢຸດຕິເຂົ້າຮ່ວມແຂ່ງຂັນ, ຕາຕະລາງແຂ່ງຂັນ ແລະ ຮູບແບບການແຂ່ງຂັນ

**ມາດຕາ 9: ຂໍ້ກຳນົດສະໂມສອນເຂົ້າຮ່ວມການແຂ່ງຂັນ**

1. ສະໂມສອນຊະນະເລີດການແຂ່ງຂັນບານເຕະ ລາວລີກ 2 ປີ 2025 ທີ່ ສະຫະພັນບານເຕະແຂວງຈັດຂຶ້ນ ມີສິດເລື່ອນຊັ້ນຂຶ້ນມາແຂ່ງຂັນໃນ ລາວລີກ 1 ລະດູການ 2026/27 ໂດຍມີເງື່ອນໄຂຄື ກໍລະນີທີ່ມີຈຳນວນ

ສະໂມສອນທີ່ໄດ້ຮັບສິດເລື່ອນຊັ້ນຈາກລາວລີກ 2 ຫຼາຍກວ່າໂຄຕ້າເລື່ອນຊັ້ນຂອງ ລາວລີກ 1. ສະໂມສອນທີ່ໄດ້ຮັບສິດຈາກລາວລີກ 2 ຈະຕ້ອງແຂ່ງຂັນຄັດເລືອກກັນເອງເພື່ອຫາສະໂມສອນທີ່ຈະໄດ້ຮັບໂຄຕ້າ ແລະ ຈະໄດ້ລົງແຂ່ງຂັນຄັດເລືອກກັບສະໂມສອນອັນດັບສຸດທ້າຍຂອງ ລາວລີກ 1 ໃນລະດູການ 2025/26 ເພື່ອລຸ້ນເລື່ອນຊັ້ນ. ຖ້າຫາກຊະນະການແຂ່ງຂັນໃນຮອບຄັດເລືອກກັບອັນສຸດທ້າຍຂອງລາວລີກ 1 ລະດູການ 2025/26 ກໍ່ຈະສາມາດເລື່ອນຊັ້ນຂຶ້ນສູ່ລາວລີກ 1 ລະດູການ 2026/27.

2. ຖ້າກໍລະນີທີ່ສະໂມສອນຊະນະເລີດການແຂ່ງຂັນບານເຕະ ລາວລີກ 2 ປີ 2025 ບໍ່ແຈ້ງເຈດຈຳນົງ ຫຼື ບໍ່ມີເງື່ອນໄຂຄົບຖ້ວນໃນການເລື່ອນຊັ້ນຂຶ້ນມາແຂ່ງຂັນໃນ ລາວລີກ 1 ໃນລະດູການ 2026/27. ໃນກໍລະນີນີ້ແມ່ນຈະຂຶ້ນກັບການພິຈາລະນາຂອງຄະນະກຳມະການຈັດການແຂ່ງຂັນ.
3. ສະໂມສອນທີ່ຈະເຂົ້າຮ່ວມການແຂ່ງຂັນລາວລີກ 1 ຈະຕ້ອງສົ່ງສັນຍາເຂົ້າຮ່ວມການແຂ່ງຂັນ (Participating Agreement) ທີ່ລົງລາຍເຊັນໂດຍປະທານສະໂມສອນ ແລະ ຜູ້ຈັດການສະໂມສອນ ຕາມກຳນົດເວລາທີ່ຝ່າຍຈັດການແຂ່ງຂັນກຳນົດໃຫ້.
4. ສະໂມສອນຕ້ອງປະກອບຂໍ້ມູນກ່ຽວກັບສະໂມສອນໃສ່ຮ່າງເອກະສານທີ່ຝ່າຍຈັດການແຂ່ງຂັນກຳນົດໃຫ້ ແລະ ສົ່ງໃຫ້ຝ່າຍຈັດການແຂ່ງຂັນຕາມກຳນົດເວລາ.
5. ສະໂມສອນຕ້ອງຜ່ານເງື່ອນໄຂອະນຸຍາດສະໂມສອນ (Club Licensing) ຂອງການແຂ່ງຂັນຈຶ່ງສາມາດເຂົ້າຮ່ວມການແຂ່ງຂັນໄດ້ ສ່ວນລາຍລະອຽດ ແລະ ເງື່ອນໄຂການຂໍອະນຸຍາດສະໂມສອນແມ່ນປະຕິບັດຕາມກົດລະບຽບການຂໍອະນຸຍາດສະໂມສອນ(Club Licensing) ທີ່ສະຫະພັນບານເຕະແຫ່ງຊາດລາວອອກ.
6. ການຮັບຮອງສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນ ແມ່ນອີງຕາມອົງປະກອບພາຍໃນສະໂມສອນ ແລະ ເງື່ອນໄຂການຂໍອະນຸຍາດສະໂມສອນ(Club Licensing) ໂດຍຜ່ານການພິຈາລະນາຈາກຄະນະກຳມະການຈັດການແຂ່ງຂັນ ສະຫະພັນບານເຕະແຫ່ງຊາດລາວ.

**ມາດຕາ 10: ການຖອນສະໂມສອນອອກຈາກການແຂ່ງຂັນ ແລະ ການຢຸດຕິການເຂົ້າຮ່ວມແຂ່ງຂັນ**

1. ການຖອນສະໂມສອນອອກຈາກການແຂ່ງຂັນ:
   - 1.1 ສະໂມສອນທີ່ໄດ້ຕອບຕົກລົງເຂົ້າຮ່ວມການແຂ່ງຂັນ ລາວລີກ 1 ແລ້ວ ຕາມກຳນົດເວລາທີ່ຝ່າຍຈັດການແຂ່ງຂັນກຳນົດແລ້ວ ແຕ່ມີຈຸດປະສົງຕ້ອງການຖອນໂຕອອກຈາກການແຂ່ງຂັນກ່ອນເລີ່ມການແຂ່ງຂັນໜ້ອຍກວ່າ 02 ເດືອນ ສະໂມສອນດັ່ງກ່າວຈະຖືກລົງວິໄນຕາມກົດລະບຽບການລົງວິໄນ ຂອງ ສຕລ.
   - 1.2 ສະໂມສອນໃດທີ່ມີການຖອນໂຕໃນໄລຍະດຳເນີນການແຂ່ງຂັນ ຫຼື ສະໂມສອນນັ້ນຖືກລົງໂທດຈາກຄະນະຈັດການແຂ່ງຂັນສຕລ ໃຫ້ອອກຈາກການແຂ່ງຂັນ. ສະໂມສອນດັ່ງກ່າວຈະຖືກລົງວິໄນຕາມກົດລະບຽບການລົງວິໄນ ຂອງ ສຕລ.
   - 1.3 ບຸກຄົນທີ່ເປັນຄະນະບໍລິຫານງານສະໂມສອນທີ່ຖອນໂຕອອກຈາກການແຂ່ງຂັນໂດຍອີງຕາມ ຂໍ້ 1.1 ແລະ 1.2 ແມ່ນຫ້າມບໍ່ໃຫ້ເຂົ້າຮ່ວມທຸກກິດຈະກຳ, ການເຄື່ອນໄຫວໃນທຸກຮູບການທີ່ມີສ່ວນພົວພັນກ່ຽວກັບການແຂ່ງຂັນບານເຕະຂອງ ສຕລ ເປັນເວລາ 1 ລະດູການແຂ່ງຂັນ.

1.4 ສະໂມສອນທີ່ຖອນໂຕອອກຈາກການແຂ່ງຂັນໂດຍອີງຕາມ ຂໍ້ 1.1 ແລະ 1.2 ແມ່ນຈະບໍ່ສາມາດສະເໜີເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ 1 ເປັນເວລາ 1 ລະດູການ ໂດຍທີ່ສະໂມສອນນັ້ນຈະຕ້ອງໄປເລີ່ມຈາກການແຂ່ງຂັນບານເຕະ ລາວລີກ 2 ຂຶ້ນມາໃໝ່ໃນປີຖັດໄປ.

1.5 ສະໂມສອນທີ່ຖອນໂຕອອກຈາກການແຂ່ງຂັນ ລາວລີກ 1 ຍັງສາມາດເຂົ້າຮ່ວມການແຂ່ງຂັນໄດ້ສະເພາະປະເພດບານເຕະເຍົາວະຊົນ ທີ່ ສຕລ ຈັດຂຶ້ນໃນປີທີ່ສະໂມສອນດັ່ງກ່າວຖອນໂຕອອກ. ແຕ່ສະໂມສອນຕ້ອງໄດ້ປັບປຸງໂຄງຮ່າງການຈັດຕັ້ງ ແລະ ຄະນະບໍລິຫານງານສະໂມສອນຊຸດໃໝ່.

1.6 ການແຈ້ງເຈດຈຳນົງທີ່ຕ້ອງການຖອນໂຕອອກຈາກການແຂ່ງຂັນ ສະໂມສອນຈະຕ້ອງເຮັດໜັງສືແຈ້ງຫາຄະນະຈັດການແຂ່ງຂັນເປັນລາຍລັກອັກສອນ ພ້ອມທັງລະບຸເຫດຜົນທີ່ຊັດເຈນໃນການຖອນໂຕອອກ ໂດຍຈະຕ້ອງໄດ້ຜ່ານການຮັບຮູ້ ແລະ ເຊັນຢັ້ງຢືນຈາກປະທານສະໂມສອນເທົ່ານັ້ນຈຶ່ງມີຜົນນຳໃຊ້ໄດ້.

2. ການຢຸດຕິການເຂົ້າຮ່ວມການແຂ່ງຂັນ:

2.1 ສະໂມສອນທີ່ປະກາດຢຸດຕິການເຄື່ອນໄຫວສະໂມສອນ ໂດຍທີ່ຍັງບໍ່ຄົບຕາມກຳນົດເວລາການເຂົ້າຮ່ວມແຂ່ງຂັນ ລາວລີກ 1 ທີ່ກຳນົດໄວ້ຈະຕ້ອງເຂົ້າຮ່ວມແຂ່ງຂັນຢ່າງໜ້ອຍ 3 ລະດູການ. ຈະຖືກຍົກເລີກໃບອະນຸຍາດສະໂມສອນ Club Licensing ແລະ ບໍ່ສາມາດເຂົ້າຮ່ວມການແຂ່ງຂັນ ລາວລີກ 1 ໄດ້ໃນລະດູການຖັດໄປ ສະໂມສອນດັ່ງກ່າວຈະຕ້ອງໄປເລີ່ມແຂ່ງຂັນໃນລາວລີກ 2 ຂຶ້ນມາໃນລະດູການຖັດໄປ.

2.2 ບຸກຄົນທີ່ເປັນຄະນະບໍລິຫານງານສະໂມສອນທີ່ຢຸດຕິການເຄື່ອນໄຫວສະໂມສອນຕາມຂໍ້ 2.1 ແມ່ນຈະບໍ່ສາມາດເຂົ້າຮ່ວມທຸກກິດຈະກຳເຄື່ອນໄຫວໃນທຸກຮູບການທີ່ມີສ່ວນພົວພັນກ່ຽວກັບການແຂ່ງຂັນບານເຕະຂອງສຕລ ເປັນເວລາ 1 ລະດູການແຂ່ງຂັນ ພ້ອມທັງຖືກລົງວິໄນຕາມກົດລະບຽບການລົງວິໄນ ຂອງ ສຕລ.

2.3 ການແຈ້ງຢຸດຕິການເຄື່ອນໄຫວສະໂມສອນ ຈະຕ້ອງເຮັດໜັງສືແຈ້ງຫາຄະນະຈັດການແຂ່ງຂັນເປັນລາຍລັກອັກສອນ ພ້ອມທັງລະບຸເຫດຜົນທີ່ຊັດເຈນໃນການຢຸດຕິການເຄື່ອນໄຫວ ໂດຍຈະຕ້ອງໄດ້ຜ່ານການຮັບຮູ້ ແລະ ເຊັນຢັ້ງຢືນຈາກປະທານສະໂມສອນເທົ່ານັ້ນຈຶ່ງມີຜົນນຳໃຊ້ໄດ້.

**ມາດຕາ 11: ຕາຕະລາງການແຂ່ງຂັນ**

1. ການຈັດຕາຕະລາງຂອງການແຂ່ງຂັນບານເຕະ ລາວລີກ 1 ແມ່ນຈະຕ້ອງອີງໃສ່ເງື່ອນໄຂຕົວຈິງເພື່ອອຳນວຍຄວາມສະດວກຮອບດ້ານໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງກັບການແຂ່ງຂັນ ແລະ ສະໂມສອນໃນການດຳເນີນການແຂ່ງຂັນເປັນຫຼັກ. ໃນກໍລະນີທີ່ມີຄວາມຈຳເປັນຕ້ອງໄດ້ມີການປ່ຽນແປງຕາຕະລາງການແຂ່ງຂັນເນື່ອງຈາກມີເຫດອັນຄວນ, ຝ່າຍຈັດການແຂ່ງຂັນຈະພິຈາລະນາແກ້ໄຂຕາຕະລາງການແຂ່ງຂັນໃໝ່ທີ່ເໝາະສົມ ໂດຍຄຳນຶງເຖິງຜົນປະໂຫຍດຂອງການແຂ່ງຂັນເປັນຫຼັກ ແລະ ຈະແຈ້ງໃຫ້ສະໂມສອນຮັບຊາບ 7 ມື້ກ່ອນການແຂ່ງຂັນນັດຕໍ່ໄປ.
2. ຕາຕະລາງການແຂ່ງຂັນຕ້ອງຮັບປະກັນຄວາມໂປ່ງໃສ, ຖືກຕ້ອງ ແລະ ຍຸດຕິທຳກັບທຸກຝ່າຍໃນການແຂ່ງຂັນ.

3. ສະໂມສອນສາມາດສະເໜີຂໍເລື່ອນຕາຕະລາງການແຂ່ງຂັນໃນນັດທີ່ສະໂມສອນຕົນເອງແຂ່ງຂັນໄດ້ ແຕ່ຈະຕ້ອງສົ່ງໜັງສືສະເໜີເປັນລາຍລັກອັກສອນເຖິງຄະນະຈັດການແຂ່ງຂັນຂອງ ສຕລ ເພື່ອພິຈາລະນາຊ້າສຸດ 7 ມື້ກ່ອນການແຂ່ງຂັນໃນນັດນັ້ນ ໂດຍມີເງື່ອນໄຂດັ່ງນີ້:
   - ສະໂມສອນມີລາຍຊື່ນັກກິລາທີ່ເຂົ້າຮ່ວມການເຄື່ອນໄຫວກັບທີມຊາດລາວ 03 ຄົນຂຶ້ນໄປ.
   - ສະໂມສອນເກີດເຫດສຸດວິໄສທີ່ຮຸນແຮງສົ່ງຜົນກະທົບກັບສະໂມສອນ ແລະ ນັກກິລາ ເຮັດໃຫ້ບໍ່ສາມາດເດີນທາງມາແຂ່ງຂັນໄດ້.

**ມາດຕາ 12: ຮູບແບບການແຂ່ງຂັນ ລາວລີກ 1**

ການແຂ່ງຂັນບານເຕະ ລາວລີກ 1 ລະດູການ 2025-26 ແຂ່ງຂັນ ຮູບແບບລີກ (Double Round Robin) ໂດຍແຂ່ງຂັນພົບກັນໝົດ 2 ຮອບຄື: ຮອບຂາໄປ (1st Leg) ແລະ ຮອບຂາກັບ (2nd Leg 2) ເພື່ອສະສົມຄະແນນຫາສະໂມສອນຊະນະເລີດຂອງການແຂ່ງຂັນ.

1. ຮອບຂາໄປ (1st Leg) :ອີງຕາມການປະກົບຄູ່ໃນຕາຕະລາງການແຂ່ງຂັນ ໂດຍການລະບຸສະໂມສອນເຈົ້າບ້ານ ແລະ ສະໂມສອນມາຢາມ, ເວລາ ແລະ ສະໜາມແຂ່ງຂັນ.
2. ຮອບຂາກັບ (2nd Leg):ອີງຕາມການປະກົບຄູ່ໃນຕາຕະລາງການແຂ່ງຂັນ ໂດຍການລະບຸສະໂມສອນເຈົ້າບ້ານ ແລະ ສະໂມສອນມາຢາມ ໂດຍຈະສະຫຼັບການເປັນເຈົ້າບ້ານຈາກໃນຮອບຂາໄປ, ເວລາ ແລະ ສະໜາມແຂ່ງຂັນ.

**ມາດຕາ 13: ການຄິດໄລ່ຄະແນນ.**

- ຊະນະ 3 ຄະແນນ
- ສະເໝີ 1 ຄະແນນ
- ເສຍ 0 ຄະແນນ

**ມາດຕາ 14: ການຈັດອັນດັບໃນຕາຕະລາງຄະແນນ.**

1. ການຄິດໄລ່ຄະແນນການຈັດອັນດັບການແຂ່ງຂັນແມ່ນອີງຕາມເງື່ອນໄຂດັ່ງນີ້:
   - ຄະແນນລວມ (Points).
   - ນັດພົບກັນ (Head-to-Head), ຖ້າກໍລະນີສະໂມສອນທີ່ມີຄະແນນເທົ່າກັນນັ້ນຍັງບໍ່ທັນໄດ້ພົບກັນແມ່ນໃຫ້ຄິດໄລ່ປະຕູສະເລ່ຍລວມ (Goal Difference) ແທນ.
   - ປະຕູສະເລ່ຍລວມ (Goal Difference).
   - ປະຕູໄດ້ລວມທີ່ຫຼາຍກ່ວາ (Goal For).
   - ປະຕູເສຍລວມທີ່ໜ້ອຍກ່ວາ (Goal Against).
2. ການຄິດໄລ່ຄະແນນການຈັດອັນດັບພາຍຫຼັງສິ້ນສຸດລະດູການແຂ່ງຂັນ.
   - ສະໂມສອນທີ່ໄດ້ຄະແນນລວມສູງສຸດ ເມື່ອສິ້ນສຸດການແຂ່ງຂັນຈະໄດ້ເປັນສະໂມສອນຊະນະເລີດ.
3. ຖ້າໃນກໍລະນີທີ່ມີສະໂມສອນຄະແນນເທົ່າກັນໃຫ້ໃຊ້ຫຼັກການດັ່ງລຸ່ມນີ້:

   3.1 ນັດພົບກັນ (Head-to-Head), ການຄິດໄລ່ (Head-to-Head) ຈະຄິດໄລ່ສະເພາະຜົນການແຂ່ງຂັນລະຫວ່າງ 2 ສະໂມສອນພົບກັນໃນຮອບຂາໄປ ແລະ ຮອບຂາກັບ ມາ

ພິຈາລະນາ. ການຄິດໄລ່ຫາຜູ້ຊະນະໃນກົດ Head-to-Head ຈະເລີ່ມຈາກຄະແນນທີ່ສະໂມສອນນັ້ນເກັບໄດ້ຈາກນັດທີ່ພົບກັນເອງຂອງສະໂມສອນທີ່ມີຄະແນນສະເໝີກັນ (ນຳໃຊ້ກໍລະນີມີ 2 ສະໂມສອນທີ່ມີຄະແນນລວມສະເໝີກັນຂຶ້ນໄປ), ຈຳນວນປະຕູສະເລ່ຍ (ຜົນຕ່າງປະຕູໄດ້-ເສຍຂອງນັດທີ່ພົບກັນເອງຂອງສະໂມສອນທີ່ມີຄະແນນລວມສະເໝີກັນ), ຄະແນນຄຸນສົມບັດ (ຈຳນວນບັດເຫຼືອງ ແລະ ບັດແດງທີ່ໄດ້ຮັບໃນນັດທີ່ພົບກັນເອງ). ຖ້າຫາກພິຈາລະນາໃນເງື່ອນໄຂທີ່ກ່າວມານີ້ແລ້ວຍັງສະເໝີກັນຢູ່ແມ່ນໃຫ້ນຳໃຊ້ເງື່ອນໄຂໃນຂໍ້ 3.2 ຫາ 3.5 ເພື່ອຕັດສິນ.

3.2 ປະຕູສະເລ່ຍລວມ (Goal Difference)

3.3 ປະຕູໄດ້ລວມທີ່ຫຼາຍກວ່າ (Goal For)

3.4 ປະຕູເສຍລວມທີ່ໜ້ອຍກວ່າ (Goal Against)

3.5 ນຳໃຊ້ຫຼັກການຄະແນນຄຸນສົມບັດຕາມລະບຽບຂອງສະຫະພັນບານເຕະນາໆຊາດ (FIFA) ໂດຍການນັບຈຳນວນບັດເຫຼືອງ ແລະ ບັດແດງ ທີ່ສະໂມສອນໄດ້ຮັບທັງໝົດໃນລະຫວ່າງການແຂ່ງຂັນ.

3.6 ໃນກໍລະນີສະໂມສອນທີ່ມີຄະແນນເທົ່າກັນນັ້ນໄດ້ຄິດໄລ່ຕາມຫຼັກການຂ້າງເທິງແລ້ວແຕ່ຍັງບໍ່ສາມາດສະຫຼຸບຫາສະໂມສອນຊະນະໄດ້ ແມ່ນໃຫ້ຈັດການແຂ່ງຂັນນັດພິເສດຂຶ້ນ 01 ນັດເພື່ອຫາສະໂມສອນຊະນະ ສ່ວນວັນ,ເວລາ ແລະ ສະຖານທີ່ແຂ່ງຂັນ ແມ່ນຄະນະຈັດການແຂ່ງຂັນຈະເປັນຜູ້ກຳນົດ.

4. ຖ້າຫາກມີສະໂມສອນທີ່ມີຄະແນນເທົ່າກັນຫຼາຍກວ່າ 2 ສະໂມສອນ ແມ່ນຈະຕັດສິນດ້ວຍການຄິດໄລ່ຕາມຫຼັກການຂ້າງເທິງ ໂດຍຄິດໄລ່ຈາກນັດແຂ່ງຂັນຂອງສະໂມສອນທີ່ມີຄະແນນເທົ່າກັນທັງໝົດໃນຮູບແບບ (Mini League).
5. ຖ້າໃນກໍລະນີພິຈາລະນາຕາມຫຼັກການຂ້າງເທິງຕາມລຳດັບແລ້ວ ຫາກໄດ້ຂໍ້ສະຕັດສິນ ຂໍ້ໃດຂໍ້ໜຶ່ງແລ້ວ ແມ່ນໃຫ້ຢຸດຕິການພິຈາລະນາຂໍ້ຕໍ່ໄປ.

**ມາດຕາ 15: ສິດທິໃນການເລື່ອນຊັ້ນ ຫຼື ຕົກຊັ້ນ**

- ການເລື່ອນຊັ້ນ:
  1. ສະໂມສອນທີ່ມີສິດເລື່ອນຊັ້ນຂຶ້ນມາແຂ່ງຂັນ ລາວລີກ 1 ລະດູການ (2025/26) ຈະຕ້ອງປະຕິບັດຕາມເງື່ອນໄຂໃນ ມາດຕາທີ 9 ຂອງກົດລະບຽບການແຂ່ງຂັນສະບັບນີ້ ແລະ ຈະຕ້ອງປະຕິບັດຕາມກົດລະບຽບການແຂ່ງຂັນບານເຕະ ລາວລີກ 1 ຕະຫຼອດໄລຍະການເຂົ້າຮ່ວມແຂ່ງຂັນ.
- ການຕົກຊັ້ນ(ປັບປຸງ):
  1. ສະໂມສອນທີ່ໄດ້ອັນດັບ 10 (ອັນດັບສຸດທ້າຍ) ຂອງການແຂ່ງຂັນ ເປບຊີ ລາວລີກ 1 ລະດູການ 2025/26 ຈະຕົກໄປຢູ່ໃນເງື່ອນໄຂຕົກຊັ້ນ ແລະ ຕ້ອງໄປແຂ່ງຂັນຄັດເລືອກກັບສະໂມສອນທີ່ຈະເລື່ອນຊັ້ນຈາກການແຂ່ງຂັນ ລາວລີກ 2 ຂອງບັນດາແຂວງ, ຖ້າຫາກຊະນະກໍ່ຈະສາມາດແຂ່ງຂັນຕໍ່ໃນລາວລີກ 1 ລະດູການຕໍ່ໄປ, ຖ້າຫາກເສຍກໍ່ຈະກາຍເປັນເປັນສະໂມສອນຕົກຊັ້ນໂດຍສົມບູນ.

# ພາກທີ IV

## ກະຕິກາ ແລະ ລະບຽບທີ່ໃຊ້ຄວບຄຸມການແຂ່ງຂັນບານເຕະ ລາວລີກ 1

**ມາດຕາ 16: ກະຕິກາການແຂ່ງຂັນ**

1. ກະຕິກາການແຂ່ງຂັນທີ່ນຳໃຊ້ໃນການແຂ່ງຂັນບານເຕະ ລາວລີກ 1 ແມ່ນນຳໃຊ້ກະຕິກາຈາກ Laws of The Game ສະບັບຫຼ້າສຸດຂອງ IFAB ເປັນຫຼັກ.
2. ກົດລະບຽບອື່ນໆທີ່ກ່ຽວຂ້ອງກັບການແຂ່ງຂັນ ທີ່ໄດ້ຜ່ານການຮັບຮອງ ແລະ ປະກາດນຳໃຊ້ໂດຍ ສຕລ.

**ມາດຕາ 17: ຫຼັກການຂອງການກຳມະການຕັດສິນ**

1. ກຳມະການຕັດສິນໃນການແຂ່ງຂັນຈະໄດ້ຮັບການແຕ່ງຕັ້ງຈາກ ສຕລ ເທົ່ານັ້ນ, ສະໂມສອນບໍ່ສາມາດສະເໜີເລືອກກຳມະການຕັດສິນໃນນັດໃດໜຶ່ງໄດ້.
2. ໃນກໍລະນີທີ່ມີເຫດການຜິດປົກກະຕິເກີດຂຶ້ນຢູ່ສະຖານທີ່ແຂ່ງຂັນເຊິ່ງເຫດການອາດເກີດຈາກນັກກິລາ, ເຈົ້າໜ້າທີ່ສະໂມສອນ ຫຼື ແຟນບານ, ເຫດສຸດວິໄສ ທີ່ອາດສົ່ງຜົນເສຍຕໍ່ການແຂ່ງຂັນ. ກຳມະການຕັດສິນ ແລະ ຜູ້ຄວບຄຸມການແຂ່ງຂັນຈະມີສິດຕັດສິນບັນຫາຮ່ວມກັນພ້ອມທັງເຮັດລາຍງານສະເໜີໃຫ້ອະນຸກຳມະການຈັດການແຂ່ງຂັນຮັບຊາບຢ່າງເປັນລາຍລັກອັກສອນພ້ອມດ້ວຍຫຼັກຖານເພື່ອສະເໜີຕໍ່ອະນຸກຳມະການລະບຽບວິໄນໃນຂັ້ນຕໍ່ໄປ.

**ມາດຕາ 18: ການປ່ຽນແປງຕາຕະລາງແຂ່ງຂັນ ແລະ ສະໜາມແຂ່ງຂັນໃນກໍລະນີເກີດເຫດສຸດວິໄສ**

1.ກໍລະນີຫາກມີເຫດການຈຳເປັນ ຫຼື ເລັ່ງດ່ວນ ແລະ ມີເຫດຜົນອັນຄວນ ຝ່າຍຈັດການແຂ່ງຂັນສາມາດພິຈາລະນາເລື່ອນ ວັນເວລາ ແລະ ສະຖານທີ່ແຂ່ງຂັນ ຫຼື ປ່ຽນແປງຄູ່ແຂ່ງຂັນໄດ້ຕາມຄວາມເໝາະສົມໂດຍຈະແຈ້ງໃຫ້ສະໂມສອນທີ່ກ່ຽວຂ້ອງຮັບຊາບຕາມເວລາອັນຄວນ.

2.ກໍລະນີທີ່ສະໂມສອນເຈົ້າບ້ານ ບໍ່ສາມາດຈັດການອຸປະກອນຕ່າງໆພາຍໃນສະໜາມແຂ່ງຂັນຂອງຕົນເອງໄດ້ໃນມື້ແຂ່ງຂັນ ໂດຍທີ່ສະໂມສອນຄູ່ແຂ່ງຂັນໄດ້ເດີນທາງໄປຮອດສະໜາມແຂ່ງຂັນແລ້ວ. ໃນກໍລະນີດັ່ງກ່າວນັ້ນສະໂມສອນເຈົ້າບ້ານຈະຕ້ອງຮັບຜິດຊອບຊົດໃຊ້ຄ່າເສຍຫາຍທີ່ເກີດຂຶ້ນໃຫ້ກັບສະໂມສອນຄູ່ແຂ່ງຂັນ ແລະ ເຈົ້າໜ້າທີ່ຈັດການແຂ່ງຂັນ ພ້ອມທັງປັບໃຫ້ສະໂມສອນເຈົ້າບ້ານເປັນຝ່າຍເສຍດ້ວຍຜົນການແຂ່ງຂັນ 0:3 ແລະ ຖືກລົງວິໄນຕາມການພິຈາລະນາຂອງອະນຸກຳມະການລະບຽບວິໄນຂອງ ສຕລ.

3.ໃນກໍລະນີເກີດເຫດສຸດວິໄສຂຶ້ນກ່ອນເລີ່ມການແຂ່ງຂັນ ໂດຍບໍ່ແມ່ນເກີດຈາກຝ່າຍໃດໜຶ່ງເຊັ່ນ: ລະບົບໄຟຟ້າໃນສະໜາມຂັດຂ້ອງຍ້ອນໄພທຳມະຊາດ, ຝົນຕົກໜັກ, ນ້ຳຖ້ວມ, ພາຍຸລົມແຮງ ແລະ ເຫດການອື່ນໆ. ໂດຍເຫດສຸດວິໄສດັ່ງກ່າວໄດ້ແກ່ຍາວກາຍເວລາການແຂ່ງຂັນໄປເກີນ 30-60 ນາທີແຕ່ຍັງບໍ່ຢຸດເຊົາ ແລະ ເຈົ້າໜ້າທີ່ຈັດການແຂ່ງຂັນປະຈຳສະໜາມ ປະເມີນເຫດການວ່າບໍ່ສາມາດຈັດການແຂ່ງຂັນໄດ້, ນັດດັ່ງກ່າວຈະຖືກເລື່ອນການແຂ່ງຂັນອອກໄປໃນມື້ໃໝ່ຕາມການພິຈາລະນາຂອງຝ່າຍຈັດການແຂ່ງຂັນ.

4.ໃນກໍລະນີເກີດເຫດສຸດວິໄສຂຶ້ນໃນລະຫວ່າງການແຂ່ງຂັນເຊັ່ນ: ລະບົບໄຟຟ້າໃນສະໜາມເສຍຫາຍຍ້ອນໄພທຳມະຊາດ, ຝົນຕົກໜັກ, ນ້ຳຖ້ວມ, ພາຍຸລົມແຮງ, ການກໍ່ຈາລະຈົນຂອງແຟນບານ ແລະ ເຫດການອື່ນໆທີ່ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບບໍ່ສາມາດຄວບຄຸມໄດ້, ເຈົ້າໜ້າທີ່ຝ່າຍຈັດການແຂ່ງຂັນສາມາດປະເມີນ

ສະຖານະການດ້ວຍການຢຸດຕິການແຂ່ງຂັນ ແລະ ລໍຖ້າໄດ້ເປັນເວລາ 30 ນາທີ ເພື່ອປະເມີນສະຖານະການຕົວຈິງ ແລະ ຖ້າຫາກລໍຖ້າຄົບ 30 ນາທີແລ້ວສະພາບການຍັງບໍ່ດີຂຶ້ນ, ເຈົ້າໜ້າທີ່ຝ່າຍຈັດການແຂ່ງຂັນສາມາດຂະຫຍາຍເວລາອອກໄປອີກ 30 ນາທີ ຖ້າຫາກສາມາດຮັບປະກັນວ່າ ຈະສາມາດແຂ່ງຂັນຄືນໄດ້ໂດຍຕ້ອງໄດ້ຮັບການເຫັນດີຮ່ວມກັນທຸກຝ່າຍ. ຖ້າຫາກລໍຖ້າຄົບກຳນົດເວລາ 60 ນາທີແລ້ວຍັງບໍ່ສາມາດຈັດການແຂ່ງຂັນຄືນໄດ້, ການແຂ່ງຂັນນັດດັ່ງກ່າວຈະຖືກເລື່ອນໄປແຂ່ງຂັນໃນມື້ໃໝ່ໂດຍໃຫ້ຮັກສາເວລາການແຂ່ງຂັນທີ່ຍັງເຫຼືອນັ້ນ ແລະ ຜົນການແຂ່ງຂັນໄວ້ຄືເກົ່າ.

5. ເພື່ອຫຼີກລ້ຽງພາລະຄ່າໃຊ້ຈ່າຍທີ່ຈະເກີດຂຶ້ນກັບສະໂມສອນ ແລະ ຝ່າຍຈັດການແຂ່ງຂັນ ໃນກໍລະນີທີ່ຈະຕ້ອງຈັດການແຂ່ງຂັນຄືນໃໝ່ຕາມເວລາແຂ່ງຂັນທີ່ເຫຼືອຢູ່ນັ້ນ ໂດຍໄດ້ປະຕິບັດຕາມຂໍ້ 4 ຂອງມາດຕາ 18 ແລ້ວ, ຖ້າໃນກໍລະນີເກີດເຫດສຸດວິໄສຂຶ້ນໃນລະຫວ່າງແຂ່ງຂັນທີ່ໄດ້ດຳເນີນແຂ່ງຂັນເກີນກວ່າ 80 ນາທີແລ້ວ ແລະ ຜົນການແຂ່ງຂັນໃນຂະນະນັ້ນຍັງສະເໝີກັນຢູ່ ຫຼື ສະໂມສອນໃດໜຶ່ງໄດ້ປະຕູຂຶ້ນນຳ. ໂດຍຜ່ານການພິຈາລະນາແລ້ວວ່າຜົນການແຂ່ງຂັນດັ່ງກ່າວນັ້ນບໍ່ມີຜົນຕໍ່ອັນດັບຕາຕະລາງຄະແນນ ຫຼື ມີຜົນກະທົບຕໍ່ຄູ່ອື່ນໆ ແມ່ນໃຫ້ເປັນດຸນພິນິດຂອງເຈົ້າໜ້າທີ່ຈັດການແຂ່ງຂັນ ໂດຍອີງໃສ່ການຕົກລົງເຫັນດີເປັນເອກະພາບຂອງທັງສອງສະໂມສອນ ໃນການຕັດສິນໃຫ້ນັດແຂ່ງຂັນດັ່ງກ່າວຈົບລົງດ້ວຍຜົນການແຂ່ງຂັນໃນເວລານັ້ນ ແລະ ຖືວ່າການແຂ່ງຂັນສິ້ນສຸດ.

6. ໃນກໍລະນີເກີດເຫດໄຟຟ້າໃນສະໜາມດັບ ຫຼື ມີເຫດການວຸ້ນວາຍຕ່າງໆເກີດຂຶ້ນໃນສະໜາມ ທີ່ເກີດຈາກຄວາມຮັບຜິດຊອບຂອງສະໂມສອນເຈົ້າບ້ານໂດຍກົງ ເຊິ່ງເປັນເຫດໃຫ້ຕ້ອງຢຸດຕິການແຂ່ງຂັນ ແລະ ບໍ່ສາມາດການແຂ່ງຂັນໄດ້ພາຍໃນ 45 ນາທີ ສະໂມສອນທີ່ເປັນເຈົ້າບ້ານຈະຖືກລົງວິໄນດັ່ງນີ້:

6.1 ກໍລະນີໄຟຟ້າໃນສະໜາມດັບໃນລະຫວ່າງການແຂ່ງຂັນ ທີ່ເກີດຈາກການບໍ່ກຽມພ້ອມຂອງສະໂມສອນເຈົ້າບ້ານ ແລະ ບໍ່ສາມາດແຂ່ງຂັນຄືນໄດ້ພາຍໃນເວລາ 45 ນາທີສະໂມສອນ ເຈົ້າບ້ານຈະຖືກປັບໃຫ້ເສຍດ້ວຍຜົນ 0-3 ແຕ່ຖ້າຫາກສະໂມສອນມາຢາມຍິງໄດ້ຫຼາຍກວ່າ 3 ລູກກໍ່ໃຫ້ຮັກສາຈຳນວນປະຕູນັ້ນໄວ້.

6.2 ກໍລະນີເກີດເຫດວຸ້ນວາຍຈາກແຟນບານ ສິ່ງຜົນເຮັດໃຫ້ບໍ່ສາມາດກັບມາແຂ່ງຂັນໄດ້ໃນພາຍໃນໄລຍະເວລາ 45 ນາທີ ຝ່າຍທີ່ກໍ່ເຫດຈະຖືກປັບໃຫ້ເສຍ ຕາມຂໍ້ 6.1 ຂອງມາດຕາ 18 ພ້ອມທັງຖືກພິຈາລະນາລົງວິໄນຈາກອະນຸກຳມະການວິໄນຂອງ ສຕລ.

### ມາດຕາ 19: ສະຖານທີ່ຈັດການແຂ່ງຂັນ

1. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນ ຕ້ອງແຈ້ງສະໜາມແຂ່ງຂັນທີ່ຈະນຳໃຊ້ເປັນສະໜາມແຂ່ງຂັນນັດໃນບ້ານຂອງຕົນເອງ ໃນແບບຟອມເອກະສານທີ່ຝ່າຍຈັດການແຂ່ງຂັນກຳນົດໃຫ້.
2. ສະໜາມແຂ່ງຂັນຕ້ອງມີເງື່ອນໄຂຄົບຖ້ວນຕາມມາດຕະຖານການແຂ່ງຂັນທີ່ກຳນົດໄວ້ໃນກົດລະບຽບການແຂ່ງຂັນບານເຕະ ລາວລີກ 1.
3. ສະຖານທີ່ຈັດການແຂ່ງຂັນທີ່ບໍ່ມີເງື່ອນໄຂຕາມມາດຕະຖານທີ່ກຳນົດໄວ້ໃນກົດລະບຽບສະບັບນີ້ແມ່ນຈະບໍ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ແຂ່ງຂັນ ຈົນກວ່າຈະມີການປັບປຸງໃຫ້ໄດ້ຕາມມາດຕະຖານ.
4. ສະໂມສອນເຈົ້າບ້ານຕ້ອງກະກຽມສະໜາມໃຫ້ມີຄວາມພ້ອມທຸກດ້ານໃນມື້ແຂ່ງຂັນ ຕາມກົດລະບຽບການແຂ່ງຂັນບານເຕະ ລາວລີກ 1 ວາງອອກ.

5. ເດີ່ນແຂ່ງຂັນບານເຕະຕ້ອງມີຂະໜາດຕາມມາດຕະຖານທີ່ກຳນົດໄວ້ໃນ Laws of The Game, ເດີ່ນບານເຕະຕ້ອງມີພື້ນລຽບພຽງດີ, ມີຫຍ້າທຸກຈຸດຂອງເດີ່ນ, ຫຍ້າຂອງເດີ່ນແຂ່ງຂັນສາມາດເປັນຫຍ້າທຳມະຊາດ ຫຼື ຫຍ້າທຽມກໍ່ໄດ້ ໂດຍຜ່ານການຮັບຮອງຈາກຄະນະຈັດການແຂ່ງຂັນ ສຕລ.
6. ເຈົ້າໜ້າທີ່ຈັດການແຂ່ງຂັນ ຈະມີການກວດສອບສະໜາມແຂ່ງຂັນທຸກໆຄັ້ງກ່ອນເລີ່ມຕົ້ນການແຂ່ງຂັນ ເພື່ອຮັບປະກັນໃຫ້ການແຂ່ງຂັນເປັນໄປຕາມກົດລະບຽບ ແລະ ມີປະສິດທິຜົນ. ຫາກມີຂໍ້ບົກພ່ອງໃນການກະກຽມສະໜາມ ສະໂມສອນເຈົ້າບ້ານ ຈະຕ້ອງແກ້ໄຂໃຫ້ທັນເວລາຖ້າຫາກບໍ່ປະຕິບັດຕາມຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.
7. ຖ້າຫາກສະໂມສອນເຈົ້າບ້ານ ເຫັນວ່າສະໜາມແຂ່ງຂັນຂອງຕົນເອງບໍ່ພ້ອມນຳໃຊ້ຈັດການແຂ່ງຂັນ ຕ້ອງແຈ້ງເປັນລາຍລັກອັກສອນຕໍ່ຝ່າຍຈັດການແຂ່ງຂັນຢ່າງໜ້ອຍ 72 ຊົ່ວໂມງ ກ່ອນການແຂ່ງຂັນ, ຖ້າຫາກເຈົ້າໜ້າທີ່ຈັດການແຂ່ງຂັນ ແລະ ສະໂມສອນຄູ່ແຂ່ງຂັນເດີນທາງຮອດສະໜາມແຂ່ງຂັນແລ້ວ ຈຶ່ງໄດ້ຮັບແຈ້ງຈາກສະໂມສອນເຈົ້າບ້ານວ່າສະໜາມແຂ່ງຂັນບໍ່ພ້ອມ, ສະໂມສອນເຈົ້າບ້ານຈະຖືກປະຕິບັດວິໄນຕາມກົດລະບຽບການແຂ່ງຂັນ ແລະ ລະບຽບການລົງວິໄນຂອງ ສຕລ.

**ມາດຕາ 20: ບ່ອນນັ່ງນັກກິລາສຳຮອງ ແລະ ເຂດເຕັກນິກ**

1. ສະໜາມແຂ່ງຂັນຕ້ອງມີບ່ອນນັ່ງນັກກິລາສຳຮອງທີ່ມີຫຼັງຄາປົກຄຸມ,ແຂງແຮງ ໂດຍສາມາດຮອງຮັບໄດ້ຢ່າງໜ້ອຍຈຳນວນ 20 ບ່ອນນັ່ງ ເພື່ອໃຫ້ພຽງພໍກັບຈຳນວນນັກກິລາສຳຮອງ 12 ຄົນ ແລະ ເຈົ້າໜ້າທີ່ສະໂມສອນຈຳນວນ 08 ທ່ານ.
2. ນັກກິລາສຳຮອງ ແລະ ເຈົ້າໜ້າທີ່ສະໂມສອນຕ້ອງໃສ່ເສື້ອບິບ ຫຼື ເສື້ອທີ່ມີສີແຕກຕ່າງຈາກນັກກິລາໃນເດີ່ນແຂ່ງຂັນຕະຫຼອດເວລາໃນເວລາຢູ່ໃນເຂດເຕັກນິກ ແລະ ເຂດອົບອຸ່ນຮ່າງກາຍ.
3. ນັກກິລາ ຫຼື ເຈົ້າໜ້າທີ່ສະໂມສອນທີ່ຖືກໄລ່ອອກຈາກເດີ່ນແຂ່ງຂັນ(ກໍລະນີໄດ້ຮັບບັດແດງ)ບໍ່ສາມາດນັ່ງຢູ່ໃນເຂດເຕັກນິກໄດ້ ບຸກຄົນດັ່ງກ່າວຕ້ອງຂຶ້ນໄປນັ່ງຢູ່ອັດສະຈັນ ຫຼື ໃນຫ້ອງປ່ຽນເຄື່ອງຂອງສະໂມສອນຕົນເອງ.
4. ເຈົ້າໜ້າທີ່ສະໂມສອນທີ່ປະຕິບັດໜ້າທີ່ໃນເຂດເຕັກນິກ ຕ້ອງແຕ່ງກາຍໃຫ້ສຸພາບ ແລະ ເໝາະສົມ (ຫ້າມໃສ່ເກີບແຕະ, ເສື້ອກ້າມ ຫຼື ອຸປະກອນອື່ນໆທີ່ຂັດຕໍ່ລະບຽບຂອງການແຂ່ງຂັນ) ພ້ອມທັງຄ້ອງບັດ AD Card ຂອງຕົນເອງໄວ້ຕະຫຼອດເວລາ ຖ້າຫາກບຸກຄົນໃດທີ່ບໍ່ປະຕິບັດ ແມ່ນຈະຖືກກຳມະການຕັດສິນແຈ້ງເຕືອນ ຫຼື ອາດຖືກເຊີນໃຫ້ອອກຈາກເຂດເຕັກນິກຂອງການແຂ່ງຂັນ ພ້ອມທັງຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.
5. ໃນໄລຍະການແຂ່ງຂັນຫ້າມນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນໃຊ້ເຄື່ອງມືສື່ສານເຊັ່ນ: ໂທລະສັບມືຖື, ຄອມພິວເຕີ້ ຫຼື ເຄື່ອງມືສື່ສານຕ່າງໆ ໃນບໍລິເວນເຂດເຕັກນິກ ແລະ ອ້ອມຮອບເດີ່ນແຂ່ງຂັນຍົກເວັ້ນເຄື່ອງມືສື່ສານສະເພາະທີ່ນຳໃຊ້ສຳຫຼັບເຫດຜົນດ້ານເຕັກນິກ ຫຼື ເພື່ອປະຖົມພະຍາບານນັກກິລາບາດເຈັບ. ຖ້າສະໂມສອນມີຈຸດປະສົງທີ່ຈະນຳໃຊ້ເຄື່ອງມືສື່ສານໃດໜຶ່ງໃນເຂດເຕັກນິກ ຕ້ອງໄດ້ຮັບການອະນຸຍາດຈາກເຈົ້າໜ້າທີ່ຈັດການແຂ່ງຂັນປະຈຳສະໜາມຈຶ່ງສາມາດນຳໃຊ້ໄດ້.
6. ຫົວໜ້າຄູຝຶກຈະຕ້ອງຄວບຄຸມ ແລະ ກຳກັບດູແລພຶດຕິກຳຂອງເຈົ້າໜ້າທີ່ສະໂມສອນ ແລະ ນັກກິລາສຳຮອງໃນເຂດເຕັກນິກຂອງຕົນເອງ. ຖ້າຫາກມີການກະທຳຜິດເກີດຂຶ້ນໃນເຂດເຕັກນິກຂອງສະໂມສອນໃດໜຶ່ງ ແລະ ບໍ່ສາມາດລະບຸຜູ້ກະທຳຜິດໄດ້ ຫົວໜ້າຄູຝຶກຕ້ອງເປັນຜູ້ຮັບຜິດຊອບຕໍ່ການກະທຳຜິດດັ່ງກ່າວແທນ.ຖ້າ

ຫາກນັດດັ່ງກ່າວບໍ່ມີຫົວໜ້າຄູຝຶກ ແມ່ນຈະຕ້ອງເປັນຜູ້ຊ່ວຍຫົວໜ້າຄູຝຶກ ຫຼື ຄະນະນຳສະໂມສອນເປັນຜູ້ຮັບຜິດຊອບແທນ.

**ມາດຕາ 21: ການຝຶກຊ້ອມທາງການ (Official Training)**

ສະໂມສອນເຈົ້າບ້ານມີໜ້າທີ່ຮັບຜິດຊອບໃນການກະກຽມສະໜາມແຂ່ງຂັນເຈົ້າບ້ານ ໃຫ້ສະໂມສອນມາຢາມສາມາດລົງຝຶກຊ້ອມຢູ່ສະໜາມແຂ່ງຂັນໄດ້ 1 ມື້ກ່ອນການແຂ່ງຂັນ ໂດຍມີເວລາຝຶກຊ້ອມບໍ່ເກີນ 60 ນາທີ ເຊິ່ງສະໂມສອນມາຢາມສາມາດມີສິດໃນການເລືອກເວລາຊ້ອມທີ່ກົງກັບເວລາແຂ່ງຂັນໂຕຈິງໄດ້ ແຕ່ກໍຕ້ອງອີງຕາມສະພາບຂອງສະໜາມແຂ່ງຂັນຕົວຈິງວ່າສາມາດຝຶກຊ້ອມໄດ້ ຫຼື ບໍ່ ໂດຍການພິຈາລະນາຈາກເຈົ້າໜ້າທີ່ຈັດການແຂ່ງຂັນປະຈຳສະໜາມ. ຖ້າຫາກສະໂມສອນເຈົ້າບ້ານບໍ່ປະຕິບັດຕາມຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ. ຍົກເວັ້ນສະໂມສອນທີ່ນຳໃຊ້ສະໜາມກິລາແຫ່ງຊາດຫຼັກ16 ເປັນສະໜາມເຈົ້າບ້ານແມ່ນຈະບໍ່ສາມາດຝຶກຊ້ອມໄດ້.

**ມາດຕາ 22: ໝາກບານສຳລັບການແຂ່ງຂັນ**

1. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນຈະໄດ້ຮັບໝາກບານ ທີ່ນຳໃຊ້ເຂົ້າໃນການແຂ່ງຂັນເພື່ອການຝຶກຊ້ອມ 10 ໜ່ວຍ/ສະໂມສອນ/ລະດູການ
2. ໝາກບານແຂ່ງຂັນແມ່ນຈະໃຊ້ໝາກບານເບີ 05 ແລະ ຜ່ານການຮັບຮອງມາດຕະຖານຈາກ FIFA.
3. ໝາກບານນຳໃຊ້ສຳລັບການແຂ່ງຂັນໃນມື້ແຂ່ງຂັນ ຝ່າຍຈັດການແຂ່ງຂັນຈະເປັນຜູ້ຮັບຜິດຊອບກະກຽມ.
4. ໃນກໍລະນີທີ່ສະໂມສອນຕ້ອງການໝາກບານເພີ່ມ ເພື່ອນຳໃຊ້ໃນການຝຶກຊ້ອມຂອງສະໂມສອນຕົນເອງສາມາດສະເໜີຂໍຊື້ຈາກ ສຕລ ໄດ້.

**ມາດຕາ 23: ຊຸດແຂ່ງຂັນ**

1. ສະໂມສອນທີ່ເຂົ້າຮ່ວມຕ້ອງໄດ້ແຈ້ງຮູບແບບຂອງຊຸດແຂ່ງຂັນປະຈຳສະໂມສອນຢ່າງຕ່ຳຈຳນວນ 2 ຊຸດ ຕໍ່ໜຶ່ງລະດູການ ໂດຍແຕ່ລະຊຸດຈະຕ້ອງເປັນສີທີ່ແຕກຕ່າງກັນຢ່າງຊັດເຈນ ແລະ ຕ້ອງແຈ້ງໃຫ້ຄະນະຈັດການແຂ່ງຂັນກ່ອນ 2 ອາທິດ ກ່ອນການແຂ່ງຂັນລີກຈະເປີດຂຶ້ນຢ່າງເປັນທາງການ.
2. ເພື່ອຫຼີກລ້ຽງສີຄືກັນ, ສີຊຸດຂອງການແຂ່ງຂັນນັ້ນແມ່ນຕ້ອງອີງໃສ່ກົດລະບຽບ ແລະ ຕາຕະລາງການແຂ່ງຂັນສະໂມສອນທີ່ຂຶ້ນໜ້າ(ເປັນສະໂມສອນເຈົ້າບ້ານ) ມີສິດເລືອກສີແຂ່ງຂັນກ່ອນ ສ່ວນສະໂມສອນມາຢາມຕ້ອງໄດ້ເລືອກສີຊຸດແຂ່ງຂັນທີ່ແຕກຕ່າງຈາກສະໂມສອນເຈົ້າບ້ານ.
3. ທຸກໆສະໂມສອນຕ້ອງນຳເອົາເຄື່ອງນຸ່ງແຂ່ງຂັນ 2 ຊຸດ ໄປໃນມື້ແຂ່ງຂັນທຸກຄັ້ງ ເພື່ອປ້ອງກັນບໍ່ໃຫ້ຊຸດແຂ່ງຂັນຄ້າຍຄືກັນ ຖ້າຫາກຜູ້ຄວບຄຸມການແຂ່ງຂັນ ແລະ ກຳມະການຕັດສິນເຫັນວ່າສີຂອງທັງສອງສະໂມສອນຄ້າຍຄືກັນ ແລະ ເຫັນວ່າມັນບໍ່ຖືກຕ້ອງຕາມກະຕິກາການແຂ່ງຂັນ ເຮັດໃຫ້ມີຄວາມຫຍຸ້ງຍາກໃນ ການຕັດສິນ ກຳມະການຕັດສິນມີສິດຮຽກຮ້ອງໃຫ້ສະໂມສອນໃດໜຶ່ງປ່ຽນສີຊຸດແຂ່ງຂັນທັນທີ ນັ້ນກໍ່ຄືສະໂມສອນມາຢາມ.
4. ຜູ້ຮັກສາປະຕູ ຕ້ອງໃສ່ເຄື່ອງນຸ່ງທີ່ມີສີແຕກຕ່າງຈາກນັກກິລາທັງສອງສະໂມສອນ ແລະ ກຳມະການຕັດສິນ, ຕ້ອງໃສ່ຊຸດແຂ່ງຂັນທີ່ມີນຳເບີທີ່ຕົນເອງໄດ້ຂຶ້ນທະບຽນສົ່ງໃຫ້ທາງຄະນະຈັດການແຂ່ງຂັນຈົນກວ່າສິ້ນສຸດລະດູການແຂ່ງຂັນ.
5. ນັກກິລາທຸກຄົນຕ້ອງໃສ່ເບີເສື້ອ ທີ່ໄດ້ຂຶ້ນທະບຽນໄວ້ດ້ານໜ້າ ແລະ ດ້ານຫຼັງ, ເບີໂສ້ງເອົາໄວ້ດ້ານໜ້າເບື້ອງຂວາ, ເບີຂອງນັກກິລາຕ້ອງມີສີກົງກັນຂ້າມກັບສີເສື້ອ ຫຼື ສີໂສ້ງ. ເບີເສື້ອມີຄວາມສູງ 25 ຊມ ທາງ ດ້ານຫຼັງ

ແລະ 10 ຊມ ທາງດ້ານໜ້າ. ເບີສົ້ງສູງ 10 ຊມ ທາງໜ້າເບື້ອງຂວາ. ນໍ້າເບີນັກກິລາແມ່ນກຳນົດແຕ່ເບີ 1 ຫາ ເບີ 99 ເທົ່ານັ້ນ(ເບີ 1 ແມ່ນສະຫງວນໄວ້ໃຫ້ສະເພາະຜູ້ຮັກສາປະຕູ). ສ່ວນຊື່ທີ່ພິມໃສ່ດ້ານຫຼັງເສື້ອ ຕ້ອງກົງກັບຊື່ທີ່ລົງທະບຽນ ແລະ ຢູ່ໃນບັດ AD Card. ໃນກໍລະນີເສື້ອແຂ່ງຂັນຂອງສະໂມສອນທີ່ບໍ່ມີເບີເສື້ອຢູ່ດ້ານຫຼັງ ຫຼື ມີເບີເສື້ອແຂ່ງຂັນທີ່ບໍ່ກົງກັບບັດນັກກິລາ ນັກກິລາຄົນດັ່ງກ່າວຈະບໍ່ສາມາດລົງແຂ່ງຂັນໄດ້ ແລະ ໃນກໍລະນີທີ່ເບີໂສ້ງແຂ່ງຂັນບໍ່ກົງກັບເບີເສື້ອແຂ່ງຂັນ ແມ່ນບໍ່ສາມາດລົງແຂ່ງຂັນໄດ້ ໂດຍກຳມະການລະບຽບວິໄນຈະພິຈາລະນາປັບລົງໂທດເພີ່ມເຕີມຖ້າຫາກຍັງສືບຕໍ່ກະທຳຜິດໃນກໍລະນີເດີມ.




6. ນັກກິລາທຸກໆຄົນຕ້ອງໃສ່ຊຸດແຂ່ງຂັນທີ່ມີເບີເສື້ອ ແລະ ໂສ້ງຂອງຕົນເອງ ທີ່ໄດ້ແຈ້ງຕໍ່ຝ່າຍຈັດການແຂ່ງຂັນຂອງ ສຕລ ແລະ ນຳໃຊ້ເບີນັ້ນຈົນກວ່າສິ້ນສຸດລະດູການ ບໍ່ອະນຸຍາດໃຫ້ມີການປ່ຽນແປງ ເບີເສື້ອ ແລະ ໂສ້ງໃນລະຫວ່າງການແຂ່ງຂັນເດັດຂາດ. ໃນກໍລະນີບໍ່ມີເບີໂສ້ງ ແຕ່ມີເບີເສື້ອແຂ່ງຂັນທີ່ຖືກຕ້ອງຕາມລະບຽບແມ່ນສາມາດລົງແຂ່ງຂັນໄດ້ ແຕ່ຈະຖືກປັບໄໝເງິນຈຳນວນ 1,500,000 ກີບ/ຄັ້ງ ແລະຈະຕ້ອງຊຳລະຄ່າປັບໄໝພາຍໃນ 7 ວັນລັດຖະການຫຼັງຈາກໄດ້ຮັບແຈ້ງການປະຕິບັດວິໄນ.
7. ເສື້ອແຂ່ງຂັນຈະຕ້ອງມີຊື່ຂອງນັກກິລາຢູ່ທາງດ້ານຫຼັງເທິງເບີເສື້ອ ຫຼື ດ້ານລຸ່ມເບີເສື້ອກໍ່ໄດ້ ໂດຍມີຂະໜາດຄວາມສູງ 7.5 ຊມ ແລະ ຈະຕ້ອງມີສີດຽວກັບເບີເສື້ອ ທີ່ແຕກຕ່າງຈາກສີເສື້ອຢ່າງຊັດເຈນ, ຊື່ນັກກິລາຕ້ອງແມ່ນຊື່ແທ້ ທີ່ກົງກັບຊື່ໃນລະບົບລົງທະບຽນເປັນພາສາອັງກິດ. ໃນກໍລະນີທີ່ຊື່ຂອງນັກກິລາບໍ່ກົງກັບບັດ AD Card ບໍ່ເກີນເຄິ່ງໜຶ່ງຂອງຊື່ ແມ່ນຍັງສາມາດລົງແຂ່ງຂັນໄດ້ ແຕ່ຈະຖືກປັບໄໝເງິນຈຳນວນ 1,500,000 ກີບ/ຄັ້ງ ແລະຈະຕ້ອງຊຳລະຄ່າປັບ ໄໝພາຍໃນ 7 ວັນລັດຖະການຫຼັງຈາກໄດ້ຮັບແຈ້ງການປະຕິບັດວິໄນ.
8. ສະໂມສອນສາມາດໃສ່ຜູ້ສະໜັບສະໜູນ ຫຼື ຊື່ສະໂມສອນ ຢູ່ທາງດ້ານຫຼັງຂອງເສື້ອແຂ່ງຂັນໄດ້ ເຊິ່ງຈະໃສ່ຢູ່ທາງດ້ານລຸ່ມຂອງເບີເສື້ອ ຫຼື ເທິງເບີເສື້ອແຂ່ງຂັນເທົ່ານັ້ນ.
9. ເສື້ອແຂ່ງຂັນຈະຕ້ອງມີໂລໂກ້ຂອງສະໂມສອນຕິດຢູ່ທີ່ໜ້າເອິກເບື້ອງຊ້າຍ ແລະ ຕ້ອງມີໂລໂກ້ຂອງການແຂ່ງຂັນຕິດທີ່ແຂນເສື້ອເບື້ອງຂວາ ຖ້າບໍ່ມີແມ່ນຈະບໍ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ລົງແຂ່ງຂັນ, ສຳລັບໂລໂກ້ຕິດແຂນເສື້ອແມ່ນທາງ ສຕລ ຈະເບີກໃຫ້ສະໂມສອນ.



10. ອະນຸຍາດໃຫ້ໃສ່ກາສິນຄ້າຂອງຜູ້ອຸປະຖຳຂອງສະໂມສອນດ້ານໃດກໍ່ໄດ້ ແຕ່ບໍ່ໃຫ້ປິດບັງເບີເສື້ອ ແລະ ບໍ່ຫຼາຍຈົນເກີນໄປ ຈົນສ້າງຄວາມຫຍຸ້ງຍາກໃຫ້ການຕັດສິນຂອງກຳມະການ.

11. ສະໂມສອນສາມາດໃສ່ຊື່ ຫຼື ໂລໂກ້ຂອງຜູ້ອຸປະຖຳຂອງສະໂມສອນຕົວເອງໄດ້ແຕ່ຕ້ອງເປັນບໍລິສັດ ທີ່ໄດ້ຮັບການຈົດທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ ແລະ ຕ້ອງແຈ້ງໃຫ້ຝ່າຍຈັດການແຂ່ງຂັນຊາບຢ່າງເປັນລາຍລັກອັກສອນໃນການຈະໃສ່ກາສິນຄ້າໃດໜຶ່ງໃນຊຸດແຂ່ງຂັນເພື່ອໃຫ້ສອດຄ່ອງກັບລະບຽບການແຂ່ງຂັນ.

12. ສະໂມສອນຈະຕ້ອງແຈ້ງສີຊຸດແຂ່ງຂັນຂອງຄູ່ຕົນເອງໃນແຕ່ລະອາທິດໃຫ້ຝ່າຍຈັດການແຂ່ງຂັນຮັບຊາບ ແລະ ຈະຕ້ອງປະຕິບັດໃສ່ສີຊຸດແຂ່ງຂັນຕາມການແຈ້ງມານັ້ນໃນມື້ແຂ່ງຂັນຢ່າງເຂັ້ມງວດ. ກໍລະນີທີ່ສະໂມສອນມີຄວາມຈຳເປັນຕ້ອງໄດ້ປ່ຽນສີຊຸດແຂ່ງຂັນນັ້ນຈະຕ້ອງແຈ້ງໃຫ້ຝ່າຍຈັດການແຂ່ງຂັນຮັບຊາບຢ່າງໜ້ອຍ 1 ມື້ກ່ອນການແຂ່ງຂັນ.

### ມາດຕາ 24: ຂໍ້ຄວນປະຕິບັດຂອງສະໂມສອນໃນມື້ແຂ່ງຂັນ

1. ສະໂມສອນຕ້ອງເດີນທາງຮອດສະໜາມແຂ່ງຂັນຊ້າສຸດ 90 ນາທີກ່ອນການແຂ່ງຂັນ ແລະ ປະຕິບັດຕາມວາລະການນັບຖອຍຫຼັງສູ່ການແຂ່ງຂັນທີ່ຝ່າຍຈັດການແຂ່ງຂັນກຳນົດໃຫ້. ຖ້າມາຊ້າເກີນ 15 ນາທີໂດຍບໍ່ມີເຫດຜົນຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.
2. ສະໂມສອນຕ້ອງແຈ້ງລາຍຊື່ນັກກິລາຈຳນວນ 23 ຄົນ ທີ່ລະບຸນັກກິລາໂຕຈິງ 11 ຄົນ, ໂຕສຳຮອງບໍ່ເກີນ 12 ຄົນ ແລະ ຄະນະຄູຝຶກ 8 ທ່ານ ກ່ອນການແຂ່ງຂັນຊ້າສຸດ 85 ນາທີໃນແຕ່ລະນັດ ຕໍ່ຄະນະຈັດການແຂ່ງຂັນຂອງ ສຕລ ກໍຄືໃນລະບົບຂອງການແຂ່ງຂັນ (FCMS) ເພື່ອກະກຽມລາຍຊື່ຂອງນັດແຂ່ງຂັນນັ້ນ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງກັບການກະກຽມການແຂ່ງຂັນ.
3. ສະໂມສອນໃດມາແຂ່ງຂັນບໍ່ທັນຕາມເວລາແຂ່ງຂັນ ເກີນກວ່າ 15 ນາທີ (ໂດຍບໍ່ມີເຫດຜົນພຽງພໍ) ແມ່ນຖືວ່າສະລະສິດ ແລະ ເສຍນັດດັ່ງກ່າວໃຫ້ກັບຄູ່ແຂ່ງຂັນ 0-3 ປະຕູ ພ້ອມທັງຖືກປັບໃໝໂດຍການຊົດໃຊ້ຄ່າເສຍຫາຍໃຫ້ກັບສະໂມສອນຄູ່ແຂ່ງຂັນ ແລະ ຝ່າຍຈັດການແຂ່ງຂັນຕາມລະບຽບການລົງວິໄນຂອງ ສຕລ.
4. ເຈົ້າໜ້າທີ່ສະໂມສອນ ແລະ ນັກກິລາທຸກຄົນ ຕ້ອງມີບັດ AD Card ໄວ້ເພື່ອສະແດງຕໍ່ຝ່າຍຈັດການແຂ່ງຂັນ ຖ້າຫາກບໍ່ມີບັດແມ່ນບໍ່ມີສິດນັ່ງຢູ່ໃນບ່ອນນັ່ງສຳຮອງໃນໄລຍະການແຂ່ງຂັນຢ່າງເດັດຂາດ, ອະນຸຍາດໃຫ້ເຈົ້າໜ້າທີ່ສະໂມສອນສູງສຸດ 8 ທ່ານ ແລະ ນັກກິລາຈຳນວນ 12 ທ່ານລວມທັງໝົດ 20 ທ່ານ ເທົ່ານັ້ນ ທີ່ສາມາດຢູ່ໃນມ້ານັ່ງສຳຮອງໃນໄລຍະຂອງການແຂ່ງຂັນ. ສຳລັບບຸກຄົນທີ່ບໍ່ມີໃນລາຍຊື່ທີ່ໄດ້ຮັບອະນຸຍາດແມ່ນບໍ່ສາມາດຢູ່ໃນເຂດເຕັກນິກໃນໄລຍະເວລາການແຂ່ງຂັນ.
5. ຫ້າມບໍ່ໃຫ້ບຸກຄົນໃດໜຶ່ງທີ່ບໍ່ແມ່ນຄະນະຄູຝຶກ ແລະ ບໍ່ມີບັດ AD Card ເຂົ້າໄປໃນຫ້ອງຖ່າຍເຄື່ອງຂອງນັກກິລາຢ່າງເດັດຂາດ ກໍລະນີເຈົ້າໜ້າທີ່ຈັດການແຂ່ງຂັນກວດພົບຈະສົ່ງລາຍງານຫາຄະນະກຳມະການລະບຽບວິໄນ ເພື່ອປະຕິບັດວິໄນຕາມກົດລະບຽບ ສຕລ.
6. ກໍລະນີເກີດເຫດສຸດວິໄສ ທີ່ສົ່ງຜົນໃຫ້ສະໂມສອນມີນັກກິລາທີ່ຈະລົງແຂ່ງຂັນບໍ່ຄົບ 11 ຄົນ ແຕ່ບໍ່ຫຼຸດ 07 ຄົນນັດດັ່ງກ່າວ ແມ່ນສາມາດເລີ່ມການແຂ່ງຂັນໄດ້ ໂດຍອີງຕາມການຕົກລົງເຫັນດີຮ່ວມກັນ ລະຫວ່າງສະໂມສອນ ແລະ ຄະນະຈັດການແຂ່ງຂັນປະຈຳນັດ. ແຕ່ໃນກໍລະນີທີ່ບໍ່ມີເຫດສຸດວິໄສ ຫຼື ເຫດຜົນອັນເໝາະສົມ ສະໂມສອນທີ່ບໍ່ພ້ອມລົງແຂ່ງຂັນ ກໍຄືສະໂມສອນທີ່ມີນັກກິລາທີ່ບໍ່ຄົບ 11 ຄົນ ກ່ອນເລີ່ມແຂ່ງຂັນ

ຈະຖືກປັບໃຫ້ເປັນຝ່າຍເສຍໃນນັດດັ່ງກ່າວດ້ວຍຜົນການແຂ່ງຂັນ 3 – 0 ແລະ ຈະຖືກປັບໄໝຕາມກົດລະບຽບພ້ອມທັງຈະສົ່ງລາຍງານຫາຄະນະກໍາມະການລະບຽບວິໄນ ເພື່ອປະຕິບັດວິໄນຕາມກົດລະບຽບ ສຕລ.

7. ສະໂມສອນຕ້ອງໃຫ້ການຮ່ວມມືໃນການເຂົ້າຮ່ວມການຖະແຫຼງຂ່າວຫຼັງການແຂ່ງຂັນ ຕາມການແຈ້ງຂອງຝ່າຍຈັດການແຂ່ງຂັນປະຈໍາສະໜາມໃນແຕ່ລະນັດ, ຖ້າສະໂມສອນບໍ່ປະຕິບັດຕາມ ສະໂມສອນດັ່ງກ່າວຈະຖືກລົງວິໄນຕາມກົດລະບຽບການລົງວິໄນ ຂອງ ສຕລ.
8. ສະໂມສອນຕ້ອງໃຫ້ການຮ່ວມມື ແລະ ອໍານວຍຄວາມສະດວກໃຫ້ກັບເຈົ້າໜ້າທີ່ສື່ມວນຊົນໃນການສໍາພາດສັ້ນຫຼັງຈົບການແຂ່ງຂັນ (Flash Interview) ຖ້າບໍ່ປະຕິບັດຕາມສະໂມສອນດັ່ງກ່າວຈະຖືກລົງວິໄນຕາມກົດລະບຽບການລົງວິໄນ ຂອງ ສຕລ.

**ມາດຕາ 25: ການປ່ຽນໂຕນັກກິລາສໍາຮອງໃນການແຂ່ງຂັນ**

1. ການປ່ຽນຕົວນັກກິລາສໍາຮອງໃນແຕ່ລະນັດການແຂ່ງຂັນແມ່ນບໍ່ເກີນ 5 ຄົນ/ສະໂມສອນ.
2. ນັກກິລາທີ່ມີລາຍຊື່ເປັນນັກກິລາສໍາຮອງຕ້ອງມີໜ້າໃນມ້ານັ່ງສໍາຮອງກ່ອນເລີ່ມການແຂ່ງຂັນທຸກຄັ້ງ.
3. ນັກກິລາທີ່ປ່ຽນອອກມາແລ້ວບໍ່ສາມາດກັບຄືນເຂົ້າໄປຫຼິ້ນໄດ້ອີກ.
4. ກໍລະນີສະໂມສອນມີຈຸດປະສົງຕ້ອງການປ່ຽນແປງລາຍຊື່ນັກກິລາ ພາຍຫຼັງທີ່ໄດ້ສົ່ງລາຍຊື່ໃຫ້ຄະນະຈັດການແຂ່ງຂັນແລ້ວ ແມ່ນຈະຕ້ອງແຈ້ງໃຫ້ຄະນະຈັດການແຂ່ງຂັນຮັບຊາບຊ້າສຸດ 20 ນາທີ ກ່ອນເລີ່ມການແຂ່ງຂັນ. ຫາກໃນກໍລະນີທີ່ຈໍາເປັນເຊັ່ນ: ນັກກິລາບາດເຈັບໃນລະຫວ່າງຊ້ອມກ່ອນແຂ່ງຈົນບໍ່ສາມາດລົງໄດ້ ຫຼື ໃນກໍລະນີສຸກເສີນອື່ນໆ ແມ່ນຈະຂຶ້ນກັບການພິຈາລະນາ ແລະ ເຫັນດີຈາກຄະນະຈັດການແຂ່ງຂັນຈຶ່ງສາມາດປ່ຽນແປງລາຍຊື່ໄດ້.
5. ໃນກໍລະນີທີ່ມີນັກກິລາສະໂມສອນໃດໜຶ່ງເກີດອຸປະຕິເຫດກະທົບຮຸນແຮງບໍລິເວນຫົວໃນລະຫວ່າງການແຂ່ງຂັນ ແລະໄດ້ຮັບການປະເມີນຈາກທີມແພດປະຈໍາສະໜາມວ່ານັກກິລາດັ່ງກ່າວນັ້ນບໍ່ສາມາດລົງແຂ່ງຂັນໄດ້ຕໍ່, ໃນກໍລະນີດັ່ງກ່າວ, ສະໂມສອນສາມາດນໍາໃຊ້ໂຄຕ້າການປ່ຽນຕົວພິເສດ(Concussion Substitution) ສາລັບນັກກິລາຜູ້ທີ່ໄດ້ຮັບບາດເຈັບນັ້ນໄດ້ສູງສຸດ 01 ຄົນ/ນັດ/ສະໂມສອນ ໂດຍກໍລະນີນີ້ຈະບໍ່ລວມກັບການປ່ຽນຕົວປົກກະຕິ, ແຕ່ການປ່ຽນຕົວພິເສດນັ້ນຈະຕ້ອງໄດ້ປ່ຽນຕົວໃນໄລຍະເວລາດັ່ງກ່າວທັນທີພາຍຫຼັງທີ່ໄດ້ຮັບການປະເມີນຈາກທີມແພດປະຈໍາສະໜາມວ່າບໍ່ສາມາດລົງຫຼິ້ນໄດ້ຕໍ່. ການປ່ຽນຕົວພິເສດ (Concussion Substitution) ຈະບໍ່ສາມາດນໍາໄປລວມກັບການປ່ຽນຕົວປົກກະຕິໄດ້. ເມື່ອມີການນໍາໃຊ້ການປ່ຽນຕົວພິເສດ (Concussion Substitution) ຈາກສະໂມສອນໃດໜຶ່ງແລ້ວ, ສະໂມສອນຄູ່ແຂ່ງຂັນແມ່ນສາມາດເພີ່ມການປ່ຽນຕົວສໍາຮອງໄດ້ອີກ 01 ຄົນເຊັ່ນກັນ ແລະ ສາມາດນໍາໃຊ້ປ່ຽນຕົວໃນຕອນໃດກໍ່ໄດ້ໃນລະຫວ່າງການແຂ່ງຂັນ.

# ພາກທີ V

## ຄຸນສົມບັດ, ພາລະບົດບາດຂອງນັກກິລາ, ເຈົ້າໜ້າທີ່ສະໂມສອນ ແລະ ການລົງທະບຽນ

### ມາດຕາ 26: ຄຸນສົມບັດຂອງນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນ

1. ນັກກິລາ

1.1 ນັກກິລາບານເຕະສັນຊາດລາວຈະຕ້ອງມີອາຍຸແຕ່ 15 ປີຂຶ້ນໄປ ແລະ ນັກກິລາຕ່າງປະເທດຕ້ອງມີອາຍຸແຕ່ 18 ປີຂຶ້ນໄປຈຶ່ງສາມາດລົງທະບຽນແຂ່ງຂັນບານເຕະ ລາວລີກ 1 ໄດ້.

1.2 ນັກກິລາບານເຕະທີ່ສັງກັດໃນສະໂມສອນໃດໜຶ່ງຈະຕ້ອງຂຶ້ນທະບຽນ ແລະ ເຮັດສັນຍາຮ່ວມກັບສະໂມສອນທີ່ຕົນສັງກັດຢູ່ ໂດຍທີ່ມີໄລຍະເວລາ, ຄ່າແຮງງານ ແລະ ນະໂຍບາຍຕ່າງໆ ໃນໃບສັນຍາຢ່າງຈະແຈ້ງ.

1.3 ນັກກິລາທີ່ລົງແຂ່ງຂັນຈະຕ້ອງມີລາຍຊື່ຢູ່ໃນທະບຽນຂອງສະໂມສອນໃດໜຶ່ງເທົ່ານັ້ນ ແລະ ບໍ່ມີສິດລົງແຂ່ງຂັນໃຫ້ສະໂມສອນອື່ນເດັດຂາດ ຈົນກວ່າຈະມີການໂອນຍ້າຍຢ່າງຖືກຕ້ອງຕາມກົດລະບຽບການແຂ່ງຂັນ. ໂດຍສັນຍາຜູກພັນລະຫວ່າງສະໂມສອນ ກັບ ນັກກິລາ ນັ້ນແມ່ນຈະອີງຕາມໄລຍະເວລາທີ່ໄດ້ລະບຸໄວ້ໃນໃບສັນຍາທີ່ມີການລົງລາຍເຊັນທັງສອງຝ່າຍ ຫຼື ມີການຕົກລົງເຫັນດີປົດປ່ອຍ ໂດຍຈະຕ້ອງມີເອກະສານທາງການຈາກສະໂມສອນຕົ້ນສັງກັດຈຶ່ງຈະຖືວ່າຖືກຕ້ອງຕາມກົດລະບຽບ.

1.4 ນັກກິລາທີ່ລົງທະບຽນແຂ່ງຂັນໃນລາວລີກ 1 ແມ່ນຈະບໍ່ສາມາດໄປແຂ່ງຂັນໃນລາຍການອື່ນໆໄລຍະດຳເນີນການແຂ່ງຂັນ ຫຼື ຈົນກວ່າຈະຖືກປົດປ່ອຍຢ່າງຖືກຕ້ອງຈາກສະໂມສອນຕົ້ນສັງກັດຢ່າງຖືກຕ້ອງ.

1.5 ບຸກຄົນທີ່ລົງທະບຽນເປັນຄະນະຄູຝຶກ ແມ່ນບໍ່ສາມາດລົງແຂ່ງຂັນເປັນນັກກິລາໄດ້ ແຕ່ສາມາດປັບປ່ຽນໄດ້ເຊິ່ງຈະຕ້ອງຢູ່ໃນໄລຍະການໂອນຍ້າຍນັກກິລາເທົ່ານັ້ນ ພາຍຫຼັງໄດ້ຕົກລົງເຫັນດີກັບສະໂມສອນທີ່ຕົ້ນສັງກັດ ແລະ ໄດ້ມີການປ່ຽນແປງຕຳແໜ່ງໃນລະບົບຢ່າງຖືກຕ້ອງ.

1.6 ນັກກິລາທີ່ສາມາດເຂົ້າຮ່ວມການແຂ່ງຂັນຈະຕ້ອງເປັນບຸກຄົນທີ່ບໍ່ຢູ່ໃນລາຍຊື່ການລົງໂທດຫ້າມເຄື່ອນໄຫວກິດຈະກຳບານເຕະໂດຍ ສຕລ, AFF, AFC ແລະ FIFA.

2. ເຈົ້າໜ້າທີ່ສະໂມສອນ

2.1 ເຈົ້າໜ້າທີ່ສະໂມສອນທີ່ສາມາດລົງທະບຽນເຂົ້າຮ່ວມການແຂ່ງຂັນໄດ້ຕ້ອງເປັນບຸກຄົນທີ່ມີອາຍຸ 18 ປີຂຶ້ນໄປໂດຍບໍ່ຈຳກັດສັນຊາດ.

2.2 ຕ້ອງບໍ່ເປັນບຸກຄົນທີ່ຢູ່ໃນລາຍຊື່ລົງໂທດຫ້າມເຄື່ອນໄຫວກິດຈະກຳບານເຕະໂດຍ ສຕລ, AFF, AFC ແລະ FIFA.

2.3 ເຈົ້າໜ້າທີ່ສະໂມສອນໃນປະເພດຄູຝຶກ ຕ້ອງມີໃບປະກາດວິຊາສະເພາະກ່ຽວກັບໜ້າວຽກຂອງຕົນເອງໃນການແຂ່ງຂັນ ໂດຍມີເງື່ອນໄຂດັ່ງລຸ່ມນີ້:

- ຫົວໜ້າຄູຝຶກ: ຕ້ອງເປັນຄູຝຶກລະດັບ *"A"* ຂອງ AFC ຂຶ້ນໄປ ໂດຍຮັບຮອງຈາກ AFC ຫຼື ສາກົນ.

- ຜູ້ຊ່ວຍຄູຝຶກ: ຕ້ອງເປັນຄູຝຶກລະດັບ *"C"* ຂອງ AFC ຂຶ້ນໄປ ໂດຍຮັບຮອງຈາກ AFC ຫຼື ສາກົນ. ຄູຝຶກຜູ້ຮັກສາປະຕູ: ຕ້ອງເປັນຄູຝຶກລະດັບ *"C"* ຂອງ AFC ຂຶ້ນໄປ ຫຼື ໃບປະກາດຄູຝຶກປະຕູ *"GK Coach Level 1"* ຂອງ AFC ທີ່ມີການຮັບຮອງຈາກ AFC ຫຼື ສາກົນ.
- ແພດປະຈຳທີມ: ຕ້ອງມີໃບປະກາສະນີຍະບັດ ແພດທົ່ວໄປ ຫຼື ສະເພາະທາງ ລະດັບຊັ້ນສູງຂຶ້ນໄປ ທີ່ຂຶ້ນກັບກະຊວງສາທາລະນະສຸກ ຫຼື ສາກົນ.
- ນັກກາຍະພາບບຳບັດ: ຕ້ອງມີໃບປະກາດ ແພດກາຍະບຳບັດ ລະດັບຊັ້ນຕົ້ນຂຶ້ນໄປ ທີ່ຂຶ້ນກັບກະຊວງສາທາລະນະສຸກ ຫຼື ສາກົນ.
- ຄູຝຶກພາລະກຳລັງ: ຕ້ອງມີໃບປະກາດຄູຝຶກພາລະກຳລັງ(Fitness Coach)ທີ່ຢັ້ງຢືນໂດຍສະຖາບັນທີ່ໄດ້ຖືກຮັບຮອງໂດຍກົດໝາຍ ສປປ ລາວ ຫຼື ສາກົນ.

2.4 ຕຳແໜ່ງຫົວໜ້າຄູຝຶກ ແລະ ຜູ້ຈັດການທີມ ຈະຕ້ອງມີຕົວຕົນ, ສາມາດມາຮ່ວມປະຕິບັດໜ້າທີ່ໃນມື້ແຂ່ງຂັນໄດ້.

2.5 ເຈົ້າໜ້າທີ່ສະໂມສອນທຸກທ່ານຕ້ອງມີສັນຍາແຮງງານກັບສະໂມສອນທີ່ລະບຸໄລຍະເວລາ ແລະ ຄ່າແຮງງານ ໃນສັນຍາວ່າຈ້າງຢ່າງຈະແຈ້ງ.

2.6 ເຈົ້າໜ້າທີ່ສະໂມສອນທຸກທ່ານຕ້ອງເປັນບຸກຄົນທີ່ບໍ່ມີສັນຍາກັບສະໂມສອນອື່ນໃນການແຂ່ງຂັນ ລາວລີກ 1 ຫຼື ລາຍການອື່ນໆທີ່ແຂ່ງຂັນໃນໄລຍະດຽວກັນ.

**ມາດຕາ 27: ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນັກກິລາ, ເຈົ້າໜ້າທີ່ ແລະ ຜູ້ບໍລິຫານສະໂມສອນ**

1. ພາລະບົດບາດ, ສິດ ແລະ ໜ້າທີ່ຂອງນັກກິລາ

1.1 ນັກກິລາບານເຕະມີພາລະບົດບາດຮັບໃຊ້ສະໂມສອນທີ່ຕົນສັງກັດ ແລະ ເຄື່ອນໄຫວແຂ່ງຂັນຢ່າງມີປະສິດທິພາບ, ໂປ່ງໃສ ແລະ ປະຕິບັດຕາມກົດລະບຽບການແຂ່ງຂັນ.

1.2 ນັກກິລາບານເຕະມີສິດດັ່ງນີ້:

1.2.1 ໄດ້ຮັບການດູແລເບິ່ງແຍງຈາກສະໂມສອນທີ່ຕົນສັງກັດຕາມສັນຍາແຮງງານຢ່າງຖືກຕ້ອງ.

1.2.2 ສະເໜີ ຫຼື ຮຽກຮ້ອງຫາ ສຕລ ຫາກສະໂມສອນຕົ້ນສັງກັດບໍ່ປະຕິບັດຕາມສັນຍາທີ່ລະບຸໄວ້.

1.2.3 ໄດ້ຮັບການຍ້ອງຍໍຊົມເຊີຍຕາມຜົນງານການເຄື່ອນໄຫວຈາກຝ່າຍຈັດການແຂ່ງຂັນ ແລະ ສະໂມສອນ.

1.3 ນັກກິລາບານເຕະມີໜ້າທີ່ດັ່ງນີ້:

1.3.1 ປະຕິບັດກົດລະບຽບ ແລະ ກະຕິກາການແຂ່ງຂັນທຸກປະການ.

1.3.2 ຕອບຮັບໂດຍບໍ່ມີເງື່ອນໄຂເມື່ອຖືກເຊີນໂຕມາຮັບໃຊ້ທີມຊາດ.

1.3.3 ປະຕິບັດສັນຍາຂອງຕົນເອງກັບສະໂມສອນຢ່າງເຕັມທີ່ ແລະ ໂປ່ງໃສ.

1.3.4 ໃຫ້ຄວາມຮ່ວມມືກັບ ສຕລ ໃນກໍລະນີຖືກເລືອກໃຫ້ເຄື່ອນໄຫວວຽກງານການຕະຫຼາດ ແລະ ສື່ມວນຊົນ.

1.3.5 ເຂົ້າຮ່ວມກິດຈະກຳ ຫຼື ກອງປະຊຸມຕາມການແຈ້ງການຂອງ ສຕລ.

1.3.6 ໃຫ້ຄວາມຮ່ວມມືກັບ ສຕລ ໃນການຕໍ່ຕ້ານປາກົດການຫຍໍ້ທໍ້ໃນກິລາບານເຕະ.

1.4 ພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສະໂມສອນ:

1.4.1 ເຈົ້າໜ້າທີ່ສະໂມສອນມີພາລະບົດບາດເຄື່ອນໄຫວຮັບໃຊ້ສະໂມສອນຕົ້ນສັງກັດຕາມພັນທະສັນຍາ ຂອງຕົນເອງກັບສະໂມສອນ ແລະ ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມງວດ.

1.4.2 ເຈົ້າໜ້າທີ່ສະໂມສອນມີສິດດັ່ງນີ້:

- ໄດ້ຮັບການດູແລເບິ່ງແຍງຈາກສະໂມສອນທີ່ຕົນສັງກັດຕາມສັນຍາ.
- ສະເໜີ ຫຼື ຮຽກຮ້ອງຫາ ສຕລ ຫາກສະໂມສອນຕົ້ນສັງກັດບໍ່ປະຕິບັດຕາມສັນຍາທີ່ລະບຸໄວ້.
- ປະຕິບັດໜ້າທີ່ໃຫ້ສະໂມສອນທີ່ຕົນສັງກັດ ຫຼື ທີມຊາດຕາມຄວາມຕ້ອງການຂອງ ສຕລ.
- ໄດ້ຮັບການຍ້ອງຍໍຊົມເຊີຍຕາມຜົນງານການເຄື່ອນໄຫວຈາກຝ່າຍຈັດການແຂ່ງຂັນ ແລະ ສະໂມສອນ.

1.4.3 ເຈົ້າໜ້າທີ່ສະໂມສອນມີໜ້າທີ່:

- ປະຕິບັດພັນທະສັນຍາຂອງຕົນກັບສະໂມສອນຢ່າງເຕັມທີ່ ແລະ ໂປ່ງໃສ.
- ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມງວດ.
- ໃຫ້ຄວາມຮ່ວມມືກັບ ສຕລ ໃນກໍລະນີຖືກເລືອກໃຫ້ເຄື່ອນໄຫວວຽກງານການຕະຫຼາດ ແລະ ສື່ມວນຊົນ.
- ເຂົ້າຮ່ວມກິດຈະກຳ ຫຼື ກອງປະຊຸມຕາມການແຈ້ງການຂອງ ສຕລ.
- ໃຫ້ຄວາມຮ່ວມມືກັບ ສຕລ ໃນການຕໍ່ຕ້ານປະກົດການຫຍໍ້ທໍ້ໃນກິລາບານເຕະ.
- ສຶກສາອົບຮົມນັກກິລາຂອງສະໂມສອນຕົນເອງໃຫ້ປະຕິບັດກົດລະບຽບການແຂ່ງຂັນ ແລະ ບໍ່ຫຍຸ້ງກ່ຽວກັບກິດຈະກຳທີ່ຂັດກັບກົດລະບຽບການແຂ່ງຂັນ ແລະ ກົດໝາຍຂອງ ສປປ ລາວ.

1.5 ພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານ ແລະ ຜູ້ບໍລິຫານສະໂມສອນ:

1.5.1 ພະນັກງານ ແລະ ຜູ້ບໍລິຫານສະໂມສອນມີພາລະບົດບາດເຄື່ອນໄຫວຮັບໃຊ້ສະໂມສອນຕົ້ນສັງກັດຕາມສັນຍາຂອງຕົນເອງກັບສະໂມສອນ ແລະ ປະຕິບັດກົດລະບຽບຢ່າງເຂັ້ມງວດ.

1.5.2 ພະນັກງານ ແລະ ຜູ້ບໍລິຫານສະໂມສອນມີສິດດັ່ງນີ້:

- ໄດ້ຮັບການດູແລເບິ່ງແຍງຈາກສະໂມສອນທີ່ຕົນສັງກັດຕາມສັນຍາ.
- ປະຕິບັດໜ້າທີ່ໃຫ້ສະໂມສອນທີ່ຕົນສັງກັດ ຫຼື ທີມຊາດຕາມຄວາມຕ້ອງການຂອງ ສຕລ.
- ໄດ້ຮັບການຍ້ອງຍໍຕາມຜົນງານການເຄື່ອນໄຫວຈາກຝ່າຍຈັດການແຂ່ງຂັນ ແລະ ສະໂມສອນ.

1.5.3 ພະນັກງານ ແລະ ຜູ້ບໍລິຫານສະໂມສອນມີໜ້າທີ່:

- ປະຕິບັດພັນທະສັນຍາຂອງຕົນກັບສະໂມສອນຢ່າງເຕັມທີ່ ແລະ ໂປ່ງໃສ.
- ປະຕິບັດກົດລະບຽບການແຂ່ງຂັນຢ່າງເຂັ້ມງວດ.
- ໃຫ້ຄວາມຮ່ວມມືກັບ ສຕລ ໃນກໍລະນີຖືກເລືອກໃຫ້ເຄື່ອນໄຫວວຽກງານຕ່າງໆ.
- ເຂົ້າຮ່ວມກິດຈະກຳ ຫຼື ກອງປະຊຸມຕາມການແຈ້ງການຂອງ ສຕລ.
- ໃຫ້ຄວາມຮ່ວມມືກັບ ສຕລ ໃນການຕໍ່ຕ້ານປະກົດການຫຍໍ້ທໍ້ໃນກິລາບານເຕະ.
- ອຳນວຍຄວາມສະດວກດ້ານເອກະສານປົດປ່ອຍນັກກິລາ ຫຼື ການໂອນຍ້າຍຂອງນັກກິລາ.

- ສຶກສາອົບຮົມນັກກິລາ ແລະ ບຸກຄະລາກອນສະໂມສອນຕົນເອງໃຫ້ປະຕິບັດກົດລະບຽບການແຂ່ງຂັນ ແລະ ບໍ່ຫຍຸ້ງກ່ຽວກັບກິດຈະກຳທີ່ຂັດກັບກົດລະບຽບການແຂ່ງຂັນ ແລະ ກົດໝາຍຂອງ ສປປ ລາວ.

**ມາດຕາ 28: ຂອບເຂດສິດອຳນາດຂອງເຈົ້າໜ້າທີ່ສະໂມສອນໃນການປະສານງານກັບ ສຕລ.**

ທຸກໆເອກະສານປະສານງານຂອງສະໂມສອນທີ່ສົ່ງເຖິງ ສຕລ ຕ້ອງປະຕິບັດຕາມຂໍ້ກຳນົດດັ່ງລຸ່ມນີ້ຈຶ່ງຖືວ່າຖືກຕ້ອງ, ມີຜົນນຳໃຊ້ ແລະ ໄດ້ຮັບການຮັບຮູ້ຈາກ ສຕລ.

1. ເອກະສານທາງການທຸກໆປະເພດຈາກສະໂມສອນສົ່ງເຖິງ ສຕລ ຕ້ອງເຊັນໂດຍປະທານສະໂມສອນ, ຮອງປະທານ ຫຼື ບຸກຄົນທີ່ຖືກແຕ່ງຕັ້ງຈາກປະທານສະໂມສອນເທົ່ານັ້ນຈຶ່ງຖືວ່າມີຜົນນຳໃຊ້ ແລະ ຮັບຮູ້ຈາກ ສຕລ.
2. ໃບລາຍຊື່ນັກກິລາ (Starting List) ໃນມື້ແຂ່ງຂັນຕ້ອງເຊັນໂດຍຫົວໜ້າຄູຝຶກ ແລະ ຜູ້ຈັດການສະໂມສອນເທົ່ານັ້ນຈຶ່ງຖືວ່າຖືກຕ້ອງ ແລະ ມີຜົນນຳໃຊ້.
3. ຮ່າງເອກະສານຂໍປະທ້ວງທີ່ຍື່ນຕໍ່ຜູ້ຄວບຄຸມການແຂ່ງຂັນຕ້ອງເຊັນໂດຍປະທານສະໂມສອນ ຫຼື ຜູ້ຈັດການສະໂມສອນເທົ່ານັ້ນຈຶ່ງຖືວ່າຖືກຕ້ອງ ແລະ ມີຜົນນຳໃຊ້.
4. ໜັງສືອະທິບາຍ ຫຼື ຊີ້ແຈງເຫດຜົນການປະທ້ວງທີ່ສະໂມສອນຕ້ອງປະກອບໃສ່ໃນການປະທ້ວງຫຼັງຈາກຍື່ນແບບຟອມຂໍປະທ້ວງແລ້ວນັ້ນຕ້ອງເຊັນໂດຍປະທານ ຫຼື ຮອງປະທານ ສະໂມສອນເທົ່ານັ້ນຈຶ່ງຖືວ່າ ຖືກຕ້ອງ ແລະ ມີຜົນນຳໃຊ້ໄດ້.

**ມາດຕາ 29: ການລົງທະບຽນ(ປັບປຸງ).**

1. ການລົງທະບຽນນັກກິລາທີ່ລົງແຂ່ງຂັນ(ປັບປຸງ).
   - 1.1 ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະລາວລີກ 1 ສາມາດລົງທະບຽນນັກກິລາສັນຊາດລາວ ແລະ ຕ່າງປະເທດ ລວມກັນຕ້ອງບໍ່ໜ້ອຍກວ່າ 23 ຄົນ ແລະ ສູງສຸດບໍ່ຈຳກັດຈຳນວນ ໃນນັ້ນຈະຕ້ອງມີຜູ້ຮັກສາປະຕູຢ່າງໜ້ອຍ 2 ຄົນ. ແຕ່ສາມາດສົ່ງລາຍຊື່ໃນມື້ແຂ່ງຂັນໄດ້ບໍ່ເກີນ 23 ຄົນ/ນັດ ແລະຕ້ອງມີຜູ້ຮັກສາປະຕູຢ່າງໜ້ອຍ 2 ຄົນໃນລາຍຊື່ປະຈຳນັດແຂ່ງຂັນ.
   - 1.2 ສະໂມສອນສາມາດລົງທະບຽນນັກກິລາເຍົາວະຊົນສັນຊາດລາວທີ່ມີ ອາຍຸແຕ່ 15 ບໍລິບູນຂຶ້ນໄປ ແຕ່ບໍ່ເກີນ 18 ປີ ໄດ້ສູງສຸດບໍ່ເກີນ 05 ຄົນ/ສະໂມສອນ ໂດຍປີເກີດຕ້ອງຢູ່ໃນລະຫວ່າງ 2007-2009.
   - 1.3 ສະໂມສອນທີ່ແຂ່ງຂັນໃນ ລາວລີກ 1 ລະດູການ 2025/26 ສາມາດລົງທະບຽນນັກກິລາຕ່າງປະເທດທີ່ຢູ່ໃນສະມາຊິກຂອງສະຫະພັນບານເຕະອາຊີ (A)ໄດ້ສູງສຸດ 10 ຄົນ/ສະໂມສອນ ແລະ ສາມາດສົ່ງລາຍຊື່ໃນມື້ແຂ່ງຂັນໄດ້ທັງໝົດ ແຕ່ສາມາດສົ່ງລົງຫຼິ້ນໃນສະໜາມໄດ້ສູງສຸດບໍ່ເກີນ 07 ຄົນ/ນັດ.
   - 1.4 ໃນກໍລະນີການລົງທະບຽນນັກກິລາຕ່າງປະເທດນັ້ນມີນັກກິລາສັນຊາດທີ່ບໍ່ແມ່ນສະມາຊິກຂອງສະຫະພັນບານເຕະອາຊີ (F) ຈຳນວນ 01 ຄົນ ຂຶ້ນໄປແມ່ນຈະສາມາດລົງທະບຽນນັກກິລາຕ່າງປະເທດລວມກັນໄດ້ສູງສຸດບໍ່ເກີນ 06 ຄົນ/ສະໂມສອນ ໂດຍມີເງື່ອນໄຂດັ່ງນີ້:
     - ນັກກິລາທີ່ຢູ່ນອກສະມາຊິກຂອງສະຫະພັນບານເຕະອາຊີ (F) ສາມາດລົງທະບຽນໄດ້ສູງສຸດບໍ່ເກີນ 04 ຄົນ/ສະໂມສອນ. ສ່ວນ 2 ໂຄຕ້າທີ່ເຫຼືອຕ້ອງເປັນສັນຊາດໃນ AFC 1 ຄົນ ແລະ ASEAN 1 ຄົນ. ຫຼື ເອົາເປັນ ASEAN ທັງສອງຄົນກໍ່ໄດ້.

- ໃນກໍລະນີທີ່ສະໂມສອນຈະລົງທະບຽນນັກກິລາສັນຊາດທີ່ຢູ່ໃນສະມາຊິກຂອງ AFC ພາຍໃນເງື່ອນໄຂນີ້ (A) ສາມາດລົງທະບຽນໄດ້ສູງສຸດ 05 ຄົນ/ສະໂມສອນ. ສ່ວນອີກ 1 ໂຄຕ້າທີ່ເຫຼືອສາມາດລົງທະບຽນສັນຊາດ ASEAN ຫຼື ສັນຊາດທີ່ບໍ່ແມ່ນສະມາຊິກຂອງ AFC.
- ໃນກໍລະນີທີ່ສະໂມສອນຈະລົງທະບຽນນັກກິລາສັນຊາດສະມາຊິກອາຊ້ຽນ (AS) ພາຍໃຕ້ເງື່ອນໄຂນີ້ແມ່ນສາມາດລົງທະບຽນໄດ້ສູງສຸດ 06 ຄົນ/ສະໂມສອນ. ພ້ອມທັງສາມາດລົງສະໜາມໄດ້ພ້ອມກັນ 6 ຄົນ/ນັດ
   - ຖ້າສະໂມສອນທີ່ບໍ່ມີນັກກິລາສັນຊາດສະມາຊິກອາຊ້ຽນ (AS) ແມ່ນຈະຫຼຸດໂຄຕ້າການລົງທະບຽນນັກກິລາຕ່າງປະເທດ (F+A) ລວມກັນໄດ້ສູງສຸດບໍ່ເກີນ 05 ຄົນເທົ່ານັ້ນ.
   - ສຳລັບມື້ແຂ່ງຂັນສະໂມສອນສາມາດສົ່ງລາຍຊື່ນັກກິລາຕ່າງປະເທດລວມໄດ້ສູງສຸດ 06 ຄົນ. ແຕ່ສາມາດສົ່ງລົງຫຼິ້ນ ແລະ ສັບປ່ຽນກັນໄດ້ໃນສະໜາມໄດ້ສູງສຸດບໍ່ເກີນ 05 ຄົນ/ຄັ້ງ ໂດຍບໍ່ໄດ້ກຳນົດຈຳນວນປະເພດສັນຊາດຂອງນັກກິລາທີ່ຢູ່ໃນສະໜາມ.

1.5 ຖ້າສະໂມສອນໃດໜຶ່ງທີ່ລົງທະບຽນນັກກິລາຕ່າງປະເທດຈຳນວນ 07 ຄົນຂຶ້ນໄປແມ່ນຈະຕ້ອງປະຕິບັດເງື່ອນໄຂຄື: ສະໂມສອນຈະຕ້ອງສະແດງເອກະສານຢັ້ງຢືນສະຖານະການເງິນຂອງສະໂມສອນ (Club Bank Statement) ທີ່ຈະຕ້ອງມີຈຳນວນເງິນ 3,000 ລ້ານກີບຂຶ້ນໄປ (ສາມພັນລ້ານກີບ) ໃຫ້ກັບຝ່າຍຈັດການແຂ່ງຂັນຂອງ ສຕລ ຮັບຊາບກ່ອນຈຶ່ງສາມາດລົງທະບຽນໄດ້ ແລະ/ຫຼື ຜ່ານ AFC Club Licensing ປະຈຳລະດູການແຂ່ງຂັນຂອງ AFC ຈຶ່ງຈະສາມາດລົງທະບຽນໄດ້.

1.6 ແຕ່ຖ້າສະໂມສອນລົງທະບຽນນັກກິລາຕ່າງປະເທດຈຳນວນ 06 ຄົນລົງມາ ແມ່ນຈະບໍ່ຈຳເປັນສະແດງເອກະສານການເງິນຕາມທີ່ລະບຸໄວ້ ຂໍ້ 1.5 ຂ້າງເທິງ.

1.7 ນັກກິລາສັນຊາດຕ່າງປະເທດທີ່ມີເຊື້ອຊາດລາວແມ່ນສາມາດລົງທະບຽນໃນນາມເປັນນັກກິລາຄົນລາວເພື່ອເຂົ້າຮ່ວມແຂ່ງຂັນໄດ້. ແຕ່ຈະຕ້ອງປະກອບເອກະສານຢັ້ງຢືນສາຍພົວພັນກັບ ພໍ່ຕູ້,ແມ່ຕູ້, ປູ່, ຍ່າ ຫຼື ພໍ່,ແມ່ທີ່ເປັນຄົນລາວໃນການລົງທະບຽນ. ລວມທັງນັກກິລາດັ່ງກ່າວຈະຕ້ອງຜ່ານການໂອນຍ້າຍລະຫວ່າງປະເທດ (FIFA TMS) ຖ້າໃນກໍລະນີທີ່ຜູ້ກ່ຽວເຄີຍແຂ່ງຂັນບານເຕະໃນລີກຕ່າງປະເທດມາກ່ອນ.

1.8 ນັກກິລາຕ່າງປະເທດທີ່ຢູ່ໃນສະມາຊິກຂອງສະຫະພັນບານເຕະອາຊີ(A)ທີ່ຈະໂອນຍ້າຍເພື່ອເຂົ້າຮ່ວມການແຂ່ງຂັນ ລາວລີກ 1 ແມ່ນຈະຕ້ອງຜ່ານການແຂ່ງຂັນບານເຕະໃນລະດັບລີກສະໝັກຫຼິ້ນ ຫຼື ລະດັບອາຊີບຈຶ່ງສາມາດລົງທະບຽນການໂອນຍ້າຍລະຫວ່າງປະເທດໄດ້. ສ່ວນນັກກິລາຕ່າງປະເທດທີ່ບໍ່ຢູ່ໃນສະມາຊິກຂອງສະຫະພັນບານເຕະອາຊີ (F) ແມ່ນຈະຕ້ອງຜ່ານການແຂ່ງຂັນບານເຕະໃນລະດັບລີກອາຊີບມາກ່ອນຈຶ່ງສາມາດລົງທະບຽນໂອນຍ້າຍໄດ້.

1.9 ນັກກິລາຕ່າງປະເທດສາມາດລົງທະບຽນຮ່ວມກັບສະໂມສອນໃດໜຶ່ງຂອງ ລາວລີກ 1 ໄດ້ ພາຍຫຼັງທີ່ປະຕິບັດທຸກຂັ້ນຕອນການໂອນຍ້າຍຕາມລະບຽບສະບັບນີ້ ແລະ ຜ່ານການລົງທະບຽນ FIFA TMS.

1.10 ສະໂມສອນຈະຕ້ອງສຳເລັດການລົງທະບຽນນັກກິລາ ແລະ ຄະນະຄູຝຶກ ຕາມກຳນົດເວລາທີ່ຝ່າຍຈັດການແຂ່ງຂັນແຈ້ງອອກຢ່າງເຂັ້ມງວດ.

2. ການລົງທະບຽນຄະນະຄູຝຶກ, ພະນັກງານ ແລະ ຜູ້ບໍລິຫານສະໂມສອນ.

2.1 ການລົງທະບຽນຄະນະຄູຝຶກ, ພະນັກງານ ແລະ ຜູ້ບໍລິຫານສະໂມສອນ.

ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະລາວລີກ 1 ສາມາດລົງທະບຽນເຈົ້າໜ້າທີ່ ສະໂມສອນ ໄດ້ຕໍ່າສຸດບໍ່ຫຼຸດ 8 ທ່ານ ແລະ ສູງສຸດບໍ່ເກີນ 15 ທ່ານ ຕາມລາຍການດັ່ງລຸ່ມນີ້:

- ຄະນະຄູຝຶກ
  - ປະທານສະໂມສອນ
  - ຮອງປະທານສະໂມສອນ
  - ພະນັກງານການຕະຫຼາດສະໂມສອນ
  - ພະນັກງານການເງິນ
  - ພະນັກງານຊ່ວຍວຽກບໍລິຫານ
  - ຫົວໜ້າຄູຝຶກ
  - ຜູ້ຊ່ວຍຄູຝຶກ
  - ຄູຝຶກປະຕູ
  - ແພດປະຈໍາທີມ
  - ນັກກາຍະພາບບໍາບັດ
  - ຜູ້ຈັດການສະໂມສອນ
  - ຜູ້ດູແລອຸປະກອນ
  - ສື່ມວນຊົນປະຈໍາສະໂມສອນ

2.2 ການລົງທະບຽນຜູ້ຕາງໜ້ານັກກິລາ (Player Intermediary)

ນັກກິລາທີ່ມີຜູ້ຕາງໜ້າທາງກົດໝາຍ (Player Intermediary) ຕ້ອງໄດ້ແຈ້ງໃຫ້ ສຕລ ຮັບຮູ້ກ່ອນການເຊັນສັນຍາກັບສະໂມສອນໃດໜຶ່ງໃນ ສປປ ລາວ ພ້ອມທັງຕ້ອງໄດ້ລົງທະບຽນກັບ ສຕລ ໃຫ້ສໍາເລັດຮຽບຮ້ອຍເພື່ອໃຫ້ຜູ້ຕາງໜ້ານັກກິລາດັ່ງກ່າວສາມາດດໍາເນີນກິດຈະການຕ່າງໆທີ່ກ່ຽວຂ້ອງກັບວຽກງານການແຂ່ງຂັນຂອງ ສະຫະພັນບານຕະແຫ່ງຊາດລາວໄດ້, ໃນການເຂົ້າມາເຮັດໜ້າທີ່ເປັນຜູ້ຕາງໜ້າຂອງນັກກິລາທີ່ລົງທະບຽນກັບ ສຕລ ໃນການແຂ່ງຂັນລາຍການຕ່າງໆນັ້ນ ຜູ້ຕາງໜ້ານັກກິລາ (Player Intermediary) ຕ້ອງລົງທະບຽນກັບ ສຕລ ໂດຍສາມາດຂໍຮັບເອກະສານລົງທະບຽນໄດ້ທີ່ພະແນກຈັດການແຂ່ງຂັນຂອງ ສຕລ ໄດ້ໂດຍບໍ່ເສຍຄ່າ. ການລົງທະບຽນຂອງຜູ້ຕາງໜ້ານັກກິລາ (Player Intermediary) ນັ້ນຈະມີອາຍຸການພຽງແຕ່ 1 ປີ ເທົ່ານັ້ນ, ດັ່ງນັ້ນຜູ້ຕາງໜ້ານັກກິລາຕ້ອງໄດ້ລົງທະບຽນໃໝ່ກັບ ສຕລ ໃນປີຕໍ່ໄປໃນກໍລະນີທີ່ຍັງເຄື່ອນໄຫວຢູ່ ສປປ ລາວ.

2.3 ຂັ້ນຕອນ ແລະ ເອກະສານປະກອບການລົງທະບຽນ.

2.3.1 ຂັ້ນຕອນການລົງທະບຽນ.

- ສະໂມສອນຕ້ອງປະກອບເອກະສານລົງທະບຽນຂອງນັກກິລາ ແລະ ຄະນະຄູຝຶກ ໃຫ້ຄົບຖ້ວນ ແລະຖືກຕ້ອງຕາມຮູບແບບ ແລະ ຂັ້ນຕອນໃນລະບົບ FIFA CONNECT & FCMS.
- ສະໂມສອນຕ້ອງແຕ່ງຕັ້ງຜູ້ຮັບຜິດຊອບການລົງທະບຽນໂດຍສະເພາະສູງສຸດ 2 ທ່ານ ທີ່ສາມາດນໍາໃຊ້ລະບົບໃນໄລຍະການລົງທະບຽນ ແລະ ແຂ່ງຂັນ (1 ໃນນັ້ນຕ້ອງເປັນຜູ້ຈັດການສະໂມສອນ) ເຊິ່ງຕ້ອງໄດ້ເຂົ້າຮ່ວມການຝຶກອົບຮົມນໍາໃຊ້ລະບົບໂດຍຝ່າຍຈັດການແຂ່ງຂັນຈັດຂຶ້ນ.
- ສະໂມສອນຕ້ອງຈ່າຍຄ່າທໍານຽມລົງທະບຽນນັກກິລາ ແລະ ຄະນະຄູຝຶກຕາມລາຍລະອຽດດັ່ງນີ້:

1) ນັກກິລາສັນຊາດຕ່າງປະເທດ ຫຼື ນັກກິລາສັນຊາດລາວ ແມ່ນ 50.000 ກີບ/ຄົນ/ຄັ້ງ.

2) ພະນັກງານສະໂມສອນ ຫຼື ຄະນະຄູຝຶກ ແມ່ນ 50.000 ກີບ/ຄົນ/ຄັ້ງ.

3) ກໍລະນີທີ່ນັກກິລາ ຫຼື ຄະນະຄູຝຶກ ໄດ້ເຮັດບັດ Ad Card ເສຍຫາຍ ແມ່ນຈະຕ້ອງໄດ້ເສຍຄ່າດຳເນີນການອອກບັດໃຫ້ໃໝ່ ເປັນເງິນຈຳນວນ 500.000 ກີບ/ບັດ/ຄັ້ງ

– ການຊຳລະຄ່າລົງທະບຽນນັ້ນແມ່ນຝ່າຍຈັດການແຂ່ງຂັນຈະສະຫຼຸບຈຳນວນລວມທັງໝົດ ພາຍຫຼັງສິ້ນສຸດການແຂ່ງຂັນ ແລະ ຈະຫັກຄ່າທຳນຽມລົງທະບຽນໃນເງິນອຸດໜູນສະໂມສອນ.

– ການຖອນຊື່ນັກກິລາອອກຈາກການລົງທະບຽນຂອງສະໂມສອນຕ້ອງເຮັດເປັນລາຍລັກອັກສອນພ້ອມທັງກໍລະນີຍົກເລີກສັນຍາສະໂມສອນຕ້ອງເຮັດໜັງສືຢັ້ງຢືນຍົກເລີກສັນຍາສອງຝ່າຍ ແລະ ສຳເນົາສົ່ງໃຫ້ກັບຝ່າຍຈັດການແຂ່ງຂັນຮັບຊາບ.

– ສຳຫຼັບນັກກິລາ ຫຼື ພະນັກງານສະໂມສອນທີ່ລົງທະບຽນສຳເລັດໃນລະບົບ FIFA CONNECT ແລະ FCMS ຈະໄດ້ຮັບເລກລະຫັດປະຈຳໂຕຈາກສະຫະພັນບານເຕະນາໆຊາດ ແລະ ລະຫັດປະຈຳໂຕສະມາຊິກ ຈາກ ສຕລ. ເຊິ່ງລະຫັດປະຈຳໂຕດັ່ງກ່າວຈະເປັນລະຫັດຂອງຜູ້ກ່ຽວໄປຕະຫຼອດ.

2.3.2 ເອກະສານປະກອບການລົງທະບຽນ

– ສັນຍາວ່າຈ້າງ (ສະແກນຈາກຕົ້ນສະບັບເປັນຟາຍ PDF)

– ໃບປະກາດສຳຫຼັບເຈົ້າໜ້າທີ່ສະໂມສອນ (ສະແກນຈາກຕົ້ນສະບັບເປັນຟາຍ PDF)

– ເອກະສານປົດປ່ອຍສຳລັບນັກກິລາ (ສະແກນຈາກຕົ້ນສະບັບເປັນຟາຍ PDF)

– ບັດປະຈຳໂຕ, ໜັງສືເດີນທາງ ຫຼື ສຳມະໂນຄົວ (ສະແກນຈາກຕົ້ນສະບັບເປັນຟາຍ PDF)

– ຟາຍຮູບສວມໃສ່ຊຸດຂອງສະໂມສອນພື້ນຫຼັງສີຂາວຂະໜາດບໍ່ເກີນ 1 MB (ເປັນຟາຍ JPG

– ສຳລັບນັກກິລາ ຫຼື ພະນັກງານສະໂມສອນທີ່ມີສັນຊາດຕ່າງປະເທດ ຕ້ອງປະກອບໃບອະນຸຍາດເຮັດວຽກ (Work Permit), ວີຊາເຮັດວຽກ (VISA LA-B2), ເອກະສານອະນຸຍາດພັກເຊົາ (Stay Permit) ທີ່ຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ເທົ່ານັ້ນ ໃນການລົງທະບຽນຈຶ່ງສາມາດລົງແຂ່ງຂັນໄດ້.

  ▪ ຖ້າໃນກໍລະນີທີ່ນັກກິລາແມ່ນເປັນພະນັກງານປະຈຳຢູ່ອົງກອນໃດໜຶ່ງທີ່ໄດ້ເຮັດວຽກຢູ່ ສປປ ລາວ ໂດຍໄດ້ເຮັດເອກະສານທາງການໃບອະນຸຍາດເຮັດວຽກ (Work Permit), ວີຊາເຮັດວຽກ (VISA LA-B2), ເອກະສານອະນຸຍາດພັກເຊົາ(Stay Permit) ທີ່ມີຜູ້ຄ້ຳປະກັນເປັນຊື່ອົງກອນທີ່ສັງກັດຢູ່ນັ້ນຢ່າງຄົບຖ້ວນ ແລະ ຖືກຕ້ອງຕາມລະບຽບ ກົດໝາຍແລ້ວ, ແຕ່ສະໂມສອນມີຈຸດປະສົງຕ້ອງການບຸກຄົນຄົນດັ່ງກ່າວນັ້ນມາເປັນນັກກິລາມາຮ່ວມສະໂມສອນຂອງຕົນ. ໃນກໍລະນີນີ້ສະໂມສອນທີ່ຕ້ອງການຈະຕ້ອງໄດ້ໄປປຶກສາຫາລື ແລະ ເຮັດບົດບັນທຶກຄວາມເຂົ້າໃຈຮ່ວມກັບອົງກອນທີ່ນັກກິລາປະຈຳຢູ່ນັ້ນໃຫ້ເປັນລາຍລັກອັກສອນຢ່າງຖືກຕ້ອງ, ນັກກິລາດັ່ງກ່າວຈຶ່ງສາມາດນຳໃຊ້ເອກະສານທາງການທີ່ອອກຊື່ອົງກອນທີ່ປະຈຳນັ້ນມາລົງທະບຽນເຂົ້າຮ່ວມແຂ່ງຂັນກັບສະໂມສອນໄດ້ເລີຍ ໂດຍບໍ່ຈຳເປັນຕ້ອງໄດ້ເຮັດໃໝ່ທີ່ອອກຊື່ສະໂມສອນ, ແຕ່ເອກະສານທາງການນັ້ນຈະຕ້ອງຍັງຢູ່ໃນໄລຍະເວລາທີ່ກຳນົດຕາມໄລຍະເວລາທີ່ລະບຸໃນສັນຍາລະຫວ່າງ

ສະໂມສອນ ແລະ ນັກກິລາ ແຕ່ເຖິງຢ່າງໃດກໍຕາມນັກກິລາຈະຕ້ອງໄດ້ຮັບການໂອນຍ້າຍລະຫວ່າງປະເທດ(ITC)ກ່ອນຈຶ່ງສາມາດລົງແຂ່ງຂັນໄດ້.

- ສໍາລັບນັກກິລາສັນຊາດຕ່າງປະເທດ ທີ່ໄດ້ໂອນຍ້າຍສະໂມສອນມາຈາກຕ່າງປະເທດ ຈະຕ້ອງປະກອບເອກະສານການໂອນຍ້າຍລະຫວ່າງປະເທດ (ITC)ໃຫ້ທັນກັບກໍານົດການ.

**ມາດຕາ 30: ການໂອນຍ້າຍນັກກິລາ**

1. ການໂອນຍ້າຍນັກກິລາພາຍໃນ:

1.1 ສະໂມສອນທີ່ຕ້ອງການໂອນຍ້າຍນັກກິລາພາຍໃນປະເທດຕ້ອງປະກອບແບບຟອມການໂອນຍ້າຍນັກກິລາ ພາຍໃນຕາມທີ່ຝ່າຍຈັດການແຂ່ງຂັນກໍານົດໃຫ້.

1.2 ປະຕິບັດຕາມຂັ້ນຕອນການໂອນຍ້າຍນັກກິລາພາຍໃນຢູ່ລະບົບ FIFA CONNECT ຕາມລໍາດັບ.

1.3 ເອກະສານປະກອບການໂອນຍ້າຍນັກກິລາພາຍໃນປະກອບມີ:

1.3.1 ແບບຟອມການໂອນຍ້າຍນັກກິລາພາຍໃນ(ສະແກນເປັນຟາຍ PDF).

1.3.2 ສັນຍາລະຫວ່າງນັກກິລາ ກັບ ສະໂມສອນໃໝ່, ຫຼື ສັນຍາຢືມຕົວ(ສະແກນເປັນຟາຍ PDF).

1.3.3 ໃບປົດປ່ອຍ ຫຼື ສັນຍາສະບັບເກົ່າທີ່ໝົດອາຍຸ(ສະແກນເປັນຟາຍ PDF).

1.3.4 ບັດປະຈໍາໂຕ ຫຼື ໜັງສືເດີນທາງ ຫຼື ສໍາມະໂນຄົວ (ສະແກນເປັນຟາຍ PDF).

1.3.5 ເອກະສານອື່ນໆທີ່ກ່ຽວຂ້ອງໃນການໂອນຍ້າຍ.

1.4 ການໂອນຍ້າຍສະໂມສອນພາຍໃນ ສໍາລັບນັກກິລາຕ່າງປະເທດ:

1.4.1 ກໍລະນີການຢືມຕົວ

ສະໂມສອນຕົ້ນສັງກັດເກົ່າ ແລະ ສະໂມສອນຕົ້ນສັງກັດໃໝ່ ສາມາດເຮັດສັນຍາການຢືມຕົວນັກກິລາຕ່າງປະເທດໄດ້ ໂດຍຈະຕ້ອງມີການຕົກລົງເຫັນດີເປັນເອກະພາບ ແລະ ກໍານົດເງື່ອນໄຂຄວາມຮັບຜິດຊອບຂອງແຕ່ລະຝ່າຍ ຫຼື ຄ່າຊົດເຊີຍຕ່າງໆໃຫ້ລະອຽດລົງໃນໃບສັນຍາຢືມຕົວ ແລະ ຈະຕ້ອງເຊັນຮັບຮອງທັງ 3 ຝ່າຍຄື: ສະໂມສອນເກົ່າ, ສະໂມສອນໃໝ່ ແລະ ນັກກິລາ.

- ກໍລະນີນີ້ແມ່ນນັກກິລາສາມາດນໍາໃຊ້ເອກະສານທາງການທີ່ອອກຊື່ສະໂມສອນເກົ່າເຊັ່ນ: (VISA LA-B2), (STAY PERMIT), (WORK PERMIT) ທີ່ຈະຕ້ອງຍັງຢູ່ໃນໄລຍະເວລາທີ່ກໍານົດເພື່ອປະກອບໃນການລົງທະບຽນກັບສະໂມສອນໃໝ່ໄດ້ເລີຍ.

1.4.2 ກໍລະນີການປົດປ່ອຍ

ຖ້າສະໂມສອນຕົ້ນສັງກັດເກົ່າມີຈຸດປະສົງຕ້ອງການປົດປ່ອຍນັກກິລາຕ່າງປະເທດອອກຈາກສະໂມສອນຕົນເອງ ໂດຍບໍ່ມີການເຈລະຈາການຢືມຕົວນັກກິລາຮ່ວມກັບສະໂມສອນໃດ. ສະໂມສອນຕົ້ນສັງກັດເກົ່າຈະຕ້ອງອອກໃບປົດປ່ອຍໃຫ້ນັກກິລາ ແລະ ດໍາເນີນການຖອດຖອນລາຍຊື່ນັກກິລາດັ່ງກ່າວອອກຈາກເອກະສານທາງການຕ່າງໆທີ່ຂຶ້ນກັບສະໂມສອນຕົນເອງໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ຕາມໄລຍະເວລາທີ່ກໍານົດ.

- ກໍລະນີນີ້ແມ່ນນັກກິລາຈະບໍ່ສາມາດນໍາໃຊ້ເອກະສານທາງການທີ່ອອກຊື່ສະໂມສອນເກົ່າເຊັ່ນ: (VISA LA-B2), (STAY PERMIT), (WORK PERMIT) ເພື່ອໄປນໍາໃຊ້ລົງທະບຽນກັບສະໂມສອນໃໝ່ໄດ້. ໂດຍສະໂມສອນໃໝ່ນັ້ນຈະຕ້ອງໄດ້ຮັບຜິດຊອບດໍາເນີນການເຮັດເອກະສານ

ທາງການໃໝ່ທີ່ອອກຊື່ສະໂມສອນຕົນເອງໃຫ້ນັກກິລາ ຈຶ່ງຈະຖືວ່າຖືກຕ້ອງຕາມກົດລະບຽບການລົງທະບຽນການແຂ່ງຂັນ.

2. ການໂອນຍ້າຍນັກກິລາລະຫວ່າງປະເທດ(TMS):
   - 2.1 ເອກະສານປະກອບການໂອນຍ້າຍລະຫວ່າງປະເທດ.
   - 2.2 ສັນຍາລະຫວ່າງນັກກິລາ ແລະ ສະໂມສອນທີ່ຕ້ອງການໂອນຍ້າຍ (ສະແກນເປັນຟາຍ PDF).
   - 2.3 ໜັງສືເດີນທາງຂອງນັກກິລາ (ສະແກນເປັນຟາຍ PDF).
   - 2.4 ໃບປົດປ່ອຍຂອງນັກກິລາຈາກສະໂມສອນລ້າສຸດ (ສະແກນເປັນຟາຍ PDF).
   - 2.5 ຫຼັງຈາກຍື່ນເອກະສານການໂອນຍ້າຍສຳເລັດ ແລະ ຄົບຖ້ວນຕ້ອງລໍຖ້າການຕອບກັບຈາກສະຫະພັນບານເຕະປະເທດຕົ້ນທາງທີ່ຜູ້ກ່ຽວໄດ້ລົງທະບຽນແຂ່ງຂັນບານເຕະຄັ້ງລ້າສຸດ. ຖ້າເອກະສານ ແລະ ຂໍ້ມູນຂອງ ຜູ້ກ່ຽວຄົບຖວ້ນຖືກຕ້ອງ ສະຫະພັນບານເຕະຈຶ່ງຈະອອກໃບອະນຸຍາດໂອນຍ້າຍລະຫວ່າງປະເທດ (ITC) ໃຫ້ຈຶ່ງຖືກວ່າການໂອນຍ້າຍສຳເລັດ.
   - 2.6 ນັກກິລາສັນຊາດຕ່າງປະເທດທີ່ອາຍຸຕໍ່າກວ່າ 18 ປີບໍ່ສາມາດໂອນຍ້າຍລະຫວ່າງປະເທດໄດ້. ຍົກເວັ້ນມີເງື່ອນໄຂກົງກັບຂໍ້ຍົກເວັ້ນທີ່ກຳນົດໄວ້ໃນກົດລະບຽບການໂອນຍ້າຍນັກກິລາຂອງ FIFA.
3. ໄລຍະການໂອນຍ້າຍນັກກິລາແມ່ນອີງຕາມການແຈ້ງການທີ່ຝ່າຍຈັດການແຂ່ງຂັນວາງອອກໂດຍອີງໃສ່ຄວາມເໝາະສົມດ້ານເວລາ ແລະ ການແຂ່ງຂັນພາຍໃນຊຶ່ງຈະແຈ້ງໃຫ້ສະໂມສອນຮັບຊາບຢ່າງເປັນລາຍລັກອັກສອນ.

# ພາກທີ VI

## ມາດຕະການຕໍ່ຜູ້ກະທຳຜິດກະຕິກາການແຂ່ງຂັນ, ການປະທ້ວງ ແລະ ການອຸທອນ

### ມາດຕາ 31: ມາດຕະການລົງໂທດຕໍ່ການກຳທະຜິດກະຕິກາການແຂ່ງຂັນ.

1. ບັດເຫຼືອງ ແມ່ນການເຕືອນນັກກິລາໃຫ້ຫຼິ້ນດ້ວຍຄວາມລະມັດລະວັງ ບັດແດງ ແມ່ນໃຫ້ຫຼິ້ນຕາມກະຕິກາ ແລະ ຢູ່ໃນລະບຽບການແຂ່ງຂັນ. ຊຶ່ງຄະນະຮັບຜິດຊອບສະໂມສອນ ແລະ ນັກກິລາ ຈະຕ້ອງປະຕິບັດຕາມການແນະນຳຂອງກຳມະການຕັດສິນ.
2. ນັກກິລາທີ່ໄດ້ບັດເຫຼືອງສະສົມຄົບ 03 ບັດ, ເອີ້ນວ່າ ບັດເຫຼືອງສະສົມ" ນັກກິລາດັ່ງກ່າວຈະບໍ່ໄດ້ລົງແຂ່ງຂັນ 01 ນັດຖັດໄປ ແລະ ບັດເຫຼືອງທັງໝົດຈະຖືກລຶບລ້າງເມື່ອຖືກໃສ່ວິໄນແລ້ວ.
3. ນັກກິລາໄດ້ບັດເຫຼືອງໜຶ່ງບັດໃນນັດແຂ່ງຂັນ ແລະ ໄດ້ບັດເຫຼືອງອີກໜຶ່ງບັດ ລວມເປັນສອງບັດເຫຼືອງໃນນັດດຽວກັນແມ່ນເທົ່າກັບ 01 ບັດແດງ ເອີ້ນວ່າ "ສອງເຫຼືອງເປັນແດງ ນັກກິລາຈະຖືກສັ່ງອອກຈາກເດີ່ນແຂ່ງຂັນ ແລະ ບໍ່ອະນຸຍາດໃຫ້ນັ່ງຢູ່ໃນເຂດເຕັກນິກ ແລະ ບໍ່ໄດ້ລົງແຂ່ງຂັນ 02 ນັດຖັດໄປ.
4. ນັກກິລາທີ່ໄດ້ບັດເຫຼືອງແລ້ວໜຶ່ງບັດ ແລະ ຄັ້ງທີ 02 ເປັນບັດແດງໂດຍກົງເລີຍ ເອີ້ນວ່າ "ໜຶ່ງບັດເຫຼືອງ ແລະ ໜຶ່ງບັດແດງໂດຍກົງ" ໃນນັດດຽວກັນນັ້ນ. ນັກກິລາຈະຖືກສັ່ງອອກຈາກເດີ່ນແຂ່ງຂັນ ບໍ່ອະນຸຍາດໃຫ້ນັ່ງຢູ່ໃນເຂດເຕັກນິກ ແລະ ຈະບໍ່ອະນຸຍາດໃຫ້ລົງແຂ່ງຂັນ 03 ນັດຖັດໄປ ພ້ອມຍັງສະສົມບັດເຫຼືອງ 01 ບັດໄວ້ຄືເກົ່າ.
5. ນັກກິລາທີ່ໄດ້ບັດແດງໂດຍກົງໃນການແຂ່ງຂັນ ເອີ້ນວ່າ "ບັດແດງໂດຍກົງ" ແມ່ນຈະຖືກສັ່ງອອກຈາກການແຂ່ງຂັນ ແລະ ຈະບໍ່ອະນຸຍາດແຂ່ງຂັນໃນ 03 ນັດຖັດໄປ ພ້ອມທັງບໍ່ອະນຸຍາດໃຫ້ນັ່ງຢູ່ມ້ານັ່ງຂອງນັກກິລາ ສຳຮອງຂອງສະໂມສອນຕົນໃນໄລຍະຖືກລົງວິໄນ.

6. ການກວດກາການໄດ້ຮັບບັດເຫຼືອງ ຫຼື ແດງ ຂອງສະໂມສອນຕົນເອງແມ່ນໃຫ້ຕິດຕາມໃນລະບົບ FIFA FCMS ເຊິ່ງລະບົບຈະແຈ້ງພາຍຫຼັງສິ້ນສຸດການແຂ່ງຂັນໃນແຕ່ລະນັດ.
7. ຄ່າປັບໃໝການໄດ້ຮັບບັດເຫຼືອງ ຫຼື ບັດແດງ ຂອງນັກກິລາ ແລະ ຄະນະຄູຝຶກ ມີດັ່ງລຸ່ມນີ້:
   - ບັດເຫຼືອງ: 500.000 ກີບ/ບັດ
   - ບັດແດງ: 1.000.000 ກີບ/ບັດ

   ການຈ່າຍຄ່າປັບໃໝແມ່ນຈະຖືກຫັກຈາກເງິນອຸດໜຸນສະໂມສອນພາຍຫຼັງສິ້ນສຸດລະດູການແຂ່ງຂັນ.

8. ໃນກໍລະນີຄະນະນຳ ຫຼື ຄະນະຄູຝຶກຂອງສະໂມສອນໄດ້ຮັບບັດເຫຼືອງ ຫຼື ບັດແດງຈາກກຳມະການຕັດສິນໃນການແຂ່ງຂັນແມ່ນໃຫ້ປະຕິບັດຕາມມາດຕະການດຽວກັນກັບນັກກິລາທີ່ໄດ້ຮັບບັດເຫຼືອງ ຫຼື ບັດແດງໃນການແຂ່ງຂັນ.
9. ການບັນທຶກບັດເຫຼືອງ ຂອງການແຂ່ງຂັນ ເປບຊີ ລາວລີກ 1 ລະດູການ 2025/25 ຈະບໍ່ຖືກສະສົມຮ່ວມກັບການແຂ່ງຂັນອື່ນໆຂອງ ສຕລ. ສ່ວນບັດແດງ ແມ່ນຍັງມີຜົນນຳໃຊ້ຮ່ວມກັບການແຂ່ງຂັນອື່ນໆຂອງ ສຕລ.

**ມາດຕາ 32: ການປະທ້ວງ**

1. ພາຍຫຼັງສິ້ນສຸດການແຂ່ງຂັນ ສະໂມສອນທີ່ຕ້ອງການປະທ້ວງກ່ຽວກັບຄຸນສົມບັດຂອງນັກກິລາ ຫຼື ບຸກຄະລາກອນຂອງສະໂມສອນ, ເງື່ອນໄຂອົງປະກອບຂອງການຈັດການແຂ່ງຂັນ (ອົງປະກອບພາກສະໜາມ, ພາກບຸກຄະລາກອນຂອງສະໂມສອນ ທີ່ມີສ່ວນເຮັດໃຫ້ການແຂ່ງຂັນບໍ່ເປັນໄປຕາມລະບຽບການແຂ່ງຂັນ) ແລະ ການກະທຳຜິດຂອງນັກກິລາ ຫຼື ບຸກຄະລາກອນສະໂມສອນທີ່ມີສ່ວນກ່ຽວຂອງກັບການແຂ່ງຂັນ. ສະໂມສອນສາມາດດຳເນີນການປະທ້ວງໂດຍສະເໜີຈຸດປະສົງຕໍ່ຜູ້ຄວບຄຸມການແຂ່ງຂັນ ແລະ ເຮັດບົດບັນທຶກພ້ອມທັງລົງລາຍເຊັນເປັນລາຍລັກອັກສອນພາຍຫຼັງສິ້ນສຸດການແຂ່ງຂັນບໍ່ເກີນ 2 ຊົ່ວໂມງ, ຫຼັງຈາກນັ້ນໃຫ້ສະໂມສອນຍື່ນໜັງສືຂໍປະທ້ວງ ພ້ອມຫຼັກຖານປະກອບການປະທ້ວງຢ່າງເປັນທາງການ ຕໍ່ຄະນະຈັດການແຂ່ງຂັນບໍ່ເກີນ 48 ຊົ່ວໂມງນັບແຕ່ການແຂ່ງຂັນສິ້ນສຸດລົງ ພ້ອມດ້ວຍເງິນສົດຈຳນວນ 3,000,000 ກີບ (ສາມລ້ານກີບ) ຄັດຕິດມາພ້ອມ ເພື່ອໃຫ້ຄະນະກຳມະການຈັດການແຂ່ງຂັນດຳເນີນເລື່ອງສະເໜີຕໍ່ຄະນະ ກຳມະການວິໄນ ເພື່ອການພິຈາລະນາການປະທ້ວງດັ່ງກ່າວ. ໃນກໍລະນີທີ່ສະໂມສອນບໍ່ປະຕິບັດຕາມຂັ້ນຕອນເງື່ອນໄຂ ແລະ ຂໍ້ກຳນົດທີ່ກ່ຽວຂ້ອງກັບການປະທ້ວງ ຈະຖືວ່າສະໂມສອນສະຫຼະສິດໃນການປະທ້ວງ ແລະ ຈະບໍ່ນຳເລື່ອງນີ້ຂຶ້ນພິຈາລະນາ.
2. ກໍລະນີການປະທ້ວງເປັນຜົນຈຳນວນເງິນດັ່ງກ່າວຈະສົ່ງຄືນໃຫ້ສະໂມສອນຢ່າງຄົບຖ້ວນ.
3. ກໍລະນີຫາກການປະທ້ວງບໍ່ເປັນຜົນຈະຖືວ່າການປະທ້ວງເປັນໂມຄະ ແລະ ຝ່າຍຈັດການແຂ່ງຂັນຈະບໍ່ໄດ້ສົ່ງເງິນດັ່ງກ່າວຄືນ.
4. ກຳມະການຕັດສິນ ແລະ ຜູ້ຊ່ວຍກຳມະການຕັດສິນ ຈະຖືກປົກປ້ອງໂດຍເຈົ້າໜ້າທີ່ຮັບຜິດຊອບການແຂ່ງຂັນແຕ່ລະນັດ ແລະ ໄດ້ຮັບນະໂຍບາຍອື່ນໆຕາມຄວາມເໝາະສົມ.
5. ສະໂມສອນບໍ່ສາມາດສະເໜີປະທ້ວງໂດຍມີຈຸດປະສົງເພື່ອປ່ຽນແປງຜົນການແຂ່ງຂັນພາຍຫຼັງການແຂ່ງຂັນສິ້ນສຸດລົງ.

**ມາດຕາ 33: ການອຸທອນ**

1. ໃນກໍລະນີທີ່ອະນຸກຳມະການລະບຽບວິໄນໄດ້ຕັດສິນລົງໂທດຢ່າງໃດໜຶ່ງຕໍ່ກັບສະໂມສອນ, ນັກກິລາ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງແລ້ວ ແລະ ໄດ້ແຈ້ງໃຫ້ພາກສ່ວນກ່ຽວຂ້ອງທີ່ຖືກລົງໂທດຮັບຊາບແລ້ວ. ຫາກພາກສ່ວນກ່ຽວຂ້ອງທີ່ຖືກລົງໂທດ ຫຼື ຄູ່ກໍລະນີໃນການປະທ້ວງບໍ່ເຫັນດີຕໍ່ກັບຄຳຕັດສິນລົງໂທດດັ່ງກ່າວນັ້ນ. ພາກສ່ວນກ່ຽວຂ້ອງທີ່ຖືກລົງໂທດ ຫຼື ຄູ່ກໍລະນີ ສາມາດຍື່ນໜັງສືຂໍອຸທອນຕໍ່ຄຳຕັດສິນລົງໂທດດັ່ງກ່າວຕໍ່ຄະນະກຳມະການອຸທອນຂອງ ສຕລ ເຊິ່ງຄຳຮ້ອງຂໍອຸທອນຕ້ອງໄດ້ຍື່ນຜ່ານພະແນກຈັດການແຂ່ງຂັນພາຍໃນ 48 ຊົ່ວໂມງຫຼັງຈາກໄດ້ຮັບແຈ້ງການບົດລົງໂທດຂອງຄະນະກຳມະການລະບຽບວິໄນ. ໂດຍຕ້ອງປະກອບໜັງສືຂໍອຸທອນ, ຫຼັກຖານທີ່ກ່ຽວຂ້ອງກັບການອຸທອນໂດຍຕ້ອງເປັນຊຸດດຽວກັນທີ່ຍື່ນໃຫ້ກັບອະນຸກຳມະການລະບຽບວິໄນ ແລະ ເງິນສົດຈຳນວນ 3.000.000 ກີບຄັດຕິດມາພ້ອມ. ຖ້າການພິຈາລະນາຂອງອະນຸກາມະການອຸທອນຂອງ ສຕລ ອອກມາເປັນຜົນ ສຕລ ຈະສົ່ງເງິນຈຳນວນ 3.000.000 ກີບ ຄືນໃຫ້ຜູ້ຂໍອຸທອນ ແລະ ຖ້າການຕັດສິນອອກມາບໍ່ເປັນຜົນ ຝ່າຍຈັດການແຂ່ງຂັນຈະບໍ່ໄດ້ສົ່ງເງິນດັ່ງກ່າວຄືນ. .
2. ຜົນການພິຈາລະນາຂອງຄະນະກຳມະການອຸທອນຈະເປັນການຕັດສິນຂັ້ນສູງສຸດເຊິ່ງບໍ່ສາມາຂໍອຸທອນໄດ້ອີກ.
3. ໃນກໍລະນີທີ່ຜູ້ຍື່ນຂໍອຸທອນຍັງບໍ່ເຫັນດີກັບຜົນຂອງການອຸທອນສາມາດດຳເນີນການຕໍ່ໃນຂັ້ນສານກິລາສາກົນ (CAS ຫຼື Court of Arbitration for Sports) ໄດ້ໂດຍສະໂມສອນຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຂອງການດຳເນີນການຂໍອຸທອນເອງທັງໝົດ.

**ມາດຕາ 34: ມາດຕະການ**

1. ກົດລະບຽບການແຂ່ງຂັນສະບັບນີ້ໄດ້ກຳນົດປະເພດຂອງມາດຕະການ ແລະ ການລົງວິໄນຕໍ່ບຸກຄົນທີ່ເປັນຄະນະຮັບຜິດຊອບ, ນັກກິລາ, ກຳມະການຕັດສິນ ແລະ ສະໂມສອນ ຕາມກໍລະນີຂອງການກະທຳຜິດໂດຍຈະຖືກປະຕິບັດວິໄນໃນສະຖານເບົາຫາໜັກຄືດັ່ງລຸ່ມນີ້:
   - ຕັກເຕືອນ, ສຶກສາອົບຮົມ ແລະ ຂຽນໃບສຳຫຼວດ
   - ປະຕິບັດລົງໂທດ ແລະ ປັບໄໝຕາມລະບຽບການລົງວິໄນຂອງ ສຕລ.
   - ໂຈະການເຂົ້າຮ່ວມແຂ່ງຂັນ.
   - ຢຸດຕິ ແລະ ຫ້າມເຄື່ອນໄຫວໃນທຸກໆກິດຈະກຳກ່ຽວກັບການແຂ່ງຂັນບານເຕະຂອງ ສຕລ ແຕ່ 1 ປີຈົນເຖິງຕະຫຼອດຊີວິດ.
2. ຄະນະຮັບຜິດຊອບ, ນັກກິລາ ແລະ ສະໂມສອນຈະຖືກຕັກເຕືອນ, ປັບໄໝ ແລະ ປະຕິບັດວິໄນໃນກໍລະນີຕໍ່ໄປນີ້:

   2.1 ຄະນະຮັບຜິດຊອບສະໂມສອນເປັນສ່ວນບຸກຄົນ ຫຼື ທັງໝົດຄະນະທີ່ມີພຶດຕິກຳທ່າທີ ຫຼື ວາຈາທີ່ຫຍາບຊ້າ, ລົງມືທຳຮ້າຍນັກກິລາຝ່າຍກົງກັນຂ້າມ, ຕໍ່ກຳມະການຕັດສິນ ແລະ ຄະນະຈັດການແຂ່ງຂັນປະຈຳສະໜາມຈະຕ້ອງຖືກລົງວິໄນ ພ້ອມທັງຈະເຮັດບົດລາຍງານສົ່ງໃຫ້ອະນຸກຳມະການວິໄນລົງໂທດເພີ່ມ ຕາມກໍລະນີໜັກ ຫຼື ເບົາຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕາ 34 ແລະ ກົດລະບຽບການລົງວິໄນຂອງ ສຕລ.

   2.2 ການກະທຳທີ່ຜິດຕໍ່ລະບຽບການລົງທະບຽນນັກກິລາ ແລະ ຄະນະຄູຝຶກ.

2.3 ຄະນະຮັບຜິດຊອບສະໂມສອນ, ນັກກິລາທີ່ບໍ່ໄດ້ຊໍາລະການປັບໄໝຂອງຕົນຈະບໍ່ໄດ້ຮັບອະນຸຍາດໃຫ້ລົງແຂ່ງຂັນ ຫຼື ເຮັດໜ້າທີ່ໃນນັດຕໍ່ໄປຈົນກວ່າ ມີການສໍາລະສະສາງຕາມລະບຽບເປັນທີ່ຮຽບຮ້ອຍ.

2.4 ບໍ່ມີລົດແພດປະຈໍາໃນສະໜາມແຂ່ງຂັນ ສະໂມສອນຈະຖືກປັບແພ້ 0-3 ພ້ອມທັງສະໂມສອນເຈົ້າບ້ານຈະຖືກປັບໄໝແຕ່ 1.000.000–5.000.000 ກີບ.

2.5 ບໍ່ມີເດັກນ້ອຍເກັບບານ ແລະ ພະນັກງານຫາມເປໃນມື້ແຂ່ງຂັນ ສະໂມສອນເຈົ້າບ້ານຈະຖືກປັບໄໝແຕ່ 500.000 ຫາ 1.000.000 ກີບຕາມການພິຈາລະນາຂອງຄະນະກໍາມະການວິໄນ.

2.6 ພະນັກງານປ້ອງກັນສະໜາມໃນມື້ແຂ່ງຂັນມາຊ້າກາຍ 15 ນາທີ ສະໂມສອນເຈົ້າບ້ານຈະຖືກປັບໄໝແຕ່ 500.000 ຫາ 1.000.000 ກີບຕາມການພິຈາລະນາຂອງຄະນະກໍາມະການວິໄນ.

2.7 ບໍ່ມີພະນັກງານປ້ອງກັນສະໜາມໃນມື້ແຂ່ງຂັນສະໂມສອນຈະຖືກປັບແພ້ 0-3 ພ້ອມທັງສະໂມສອນເຈົ້າບ້ານຈະຖືກປັບໄໝ 5.000.000 ກີບ.

2.8 ລາຍຊື່ການແຂ່ງຂັນ (Starting List) ຂອງສະໂມສອນຕ້ອງເຊັນໂດຍຜູ້ຈັດການສະໂມສອນ ຫຼື ຫົວ ໜ້າຄູຝຶກເທົ່ານັ້ນ, ຖ້າສະໂມສອນໃດບໍ່ປະຕິບັດຈະຖືກປັບໄໝເປັນຈໍານວນເງິນ 500.000 ກີບຕໍ່ຄັ້ງ.

2.9 ຫົວໜ້າຄູຝຶກຕ້ອງໃຫ້ສໍາພາດກັບສື່ມວນຊົນຫຼັງສິ້ນສຸດການແຂ່ງຂັນທຸກນັດ, ຖ້າຫາກຄູຝຶກສະໂມສອນບໍ່ປະຕິບັດຕາມລະບຽບ ສະໂມສອນດັ່ງກ່າວຈະຖືກປັບໄໝເປັນຈໍານວນເງິນ 3.000.000 ກີບຕໍ່ຄັ້ງ.

2.10 ສະໂມສອນຖືເບົາຕໍ່ວຽກງານເຕັກນິກການພັດທະນາທີ່ ສຕລ ໄດ້ວາງອອກເຊັ່ນ: ການຝຶກອົບຮົມ, ສໍາມະນາ ແລະ ປະຊຸມປຶກສາຫາລືຕ່າງໆໂດຍທີ່ສະໂມສອນບໍ່ເຂົ້າຮ່ວມ ຫຼື ສົ່ງຜູ້ທີ່ບໍ່ໄດ້ຮັບຜິດຊອບວຽກງານດັ່ງກ່າວມາເຂົ້າຮ່ວມ ສະໂມສອນດັ່ງກ່າວຈະຖືກພິຈາລະນາມາດຕະການທາງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

2.11 ຫາກມາດຕະການທາງດ້ານວິໄນທີ່ກໍານົດໄວ້ໃນກົດລະບຽບສະບັບນີ້ບໍ່ຄອບຄຸມເຖິງຄວາມຜິດອື່ນທີ່ເກີດຂຶ້ນພາຍຫຼັງທີ່ຮັບຮອງກົດລະບຽບສະບັບນີ້ ແລະ ກົດລະບຽບການລົງວິໄນຂອງ ສຕລ, ກໍລະນີດັ່ງກ່າວຈະຕົກຢູ່ໃນດຸນພິນິດຂອງຄະນະກໍາມະການວິໄນຂອງ ສຕລ ໃນການນໍາໃຊ້ມາດຕະການທາງວິໄນໂດຍອີງໃສ່ກົດລະບຽບຂອງ AFC ແລະ FIFA ມາບັງຄັບໃຊ້.

2.12 ບຸກຄົນ ຫຼື ນັກກິລາຄົນໃດທີ່ມີພຶດຕິກໍາລົ້ມບານ (ລ໋ອກຜົນການແຂ່ງຂັນ) ເພື່ອຫາຜົນປະໂຫຍດສ່ວນຕົວທີ່ສົ່ງຜົນເສຍຕໍ່ລະບົບການແຂ່ງຂັນແມ່ນຈະຖືກດໍາເນີນຄະດີຕາມກົດໝາຍວ່າດ້ວຍກິລາ-ກາຍະກໍາ ສະບັບປີ 2020 ມາດຕາ 110 ແລະ ກົດໝາຍທີ່ກ່ຽວຂ້ອງ.

2.13 ສະໂມສອນທີ່ບໍ່ມາແຂ່ງຂັນຕາມຕາຕະລາງ ຫຼື ມາຮອດສະໜາມແຂ່ງຂັນແລ້ວແຕ່ບໍ່ລົງແຂ່ງຂັນດ້ວຍເຫດຜົນໃດໜຶ່ງທີ່ບໍ່ກ່ຽວກັບອົງປະກອບຈັດການແຂ່ງຂັນ ແມ່ນຈະຖືກປັບໃຫ້ເປັນຝ່າຍເສຍດ້ວຍຜົນການແຂ່ງຂັນ 0–3 ແລະຈະຖືກປັບໄໝເປັນຈໍານວນເງິນ 5.000.000 ກີບ ພ້ອມທັງຊົດໃຊ້ຄ່າເສຍຫາຍໃຫ້ແກ່ສະໂມສອນຄູ່ແຂ່ງຂັນ ແລະ ຝ່າຍຈັດການແຂ່ງຂັນຕາມຄວາມເສຍຫາຍໂຕຈິງ ແລະ ຖືກປະຕິບັດວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

2.14 ນັກກິລາ ຫຼື ຄະນະຄູຝຶກ ທີ່ເອົາບັດ AD Card ຂອງຕົນເອງ ໃຫ້ຄົນອື່ນທີ່ບໍ່ໄດ້ຖືກລົງທະບຽນໃນລະບົບໄປນໍາໃຊ້ແທນຈະຖືກລົງໂທດດັ່ງນີ້: ລົງວິໄນຕໍ່ບຸກຄົນທີ່ເປັນເຈົ້າຂອງບັດຕົວຈິງນັ້ນບໍ່ໃຫ້ລົງແຂ່ງຂັນ 3 ນັດຖັດໄປ, ລວມທັງ ຜູ້ໃຊ້ບັດ ແລະ ສະໂມສອນຈະຖືກລົງວິໄນຕາມກົດລະບຽບການລົງ

ວິໄນຂອງ ສຕລ ແລະ ຖ້າຫາກຖືກກວດສອບເຫັນວ່າຜູ້ທີ່ໃຊ້ບັດເປັນນັກກິລາ ແລ້ວໄດ້ລົງແຂ່ງຂັນໃນນັດໃດໜຶ່ງນັ້ນ ແມ່ນຈະໃຫ້ສະໂມສອນດັ່ງກ່າວຖືກປັບແພ້ໃນການແຂ່ງຂັນ 0-3 ປະຕູ.

2.15 ນັກກິລາທີ່ມາແຂ່ງຂັນໂດຍບໍ່ມີບັດນັກກິລາ ຫຼື ຍັງຢູ່ໃນຂັ້ນຕອນການປ່ຽນບັດນັກກິລາໃໝ່ ນັກກິລາດັ່ງກ່າວແມ່ນຈະບໍ່ອະນຸຍາດໃຫ້ລົງແຂ່ງຂັນ. ຖ້າຝ່າຝືນຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ.

2.16 ນັກກິລາທີ່ໃຊ້ສານກະຕຸ້ນ, ສິ່ງມຶນເມົາ ແລະ ຢາເສບຕິດຕ່າງໆລົງມາແຂ່ງຂັນ ຜູ້ກ່ຽວຈະຖືກສັ່ງໂຈະລົງແຂ່ງຂັນ ໂດຍຄະນະກຳມະການຈັດການແຂ່ງຂັນປະຈຳສະໜາມ ແລະ ຈະຖືກປະຕິບັດວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

2.17 ນັກກິລາທີ່ທຳຮ້າຍຮ່າງກາຍຄູ່ຕໍ່ສູ້ ຫຼື ເຈົ້າໜ້າທີ່ໃນເວລາການແຂ່ງຂັນຢູ່ສະໜາມຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ. ນອກຈາກນັ້ນຜູ້ທີ່ຖືກທຳຮ້າຍຮ່າງກາຍກໍ່ສາມາດດຳເນີນຄະດີທາງອາຍາຕໍ່ກັບນັກກິລາຜູ້ທີ່ໄດ້ລົງມືທຳຮ້າຍຮ່າງກາຍ.

2.18 ນັກກິລາທີ່ມີພຶດຕິກຳຢ່າງອອກຈາກເດັ່ນ ໃນເວລາແຂ່ງຂັນເພື່ອປະທ້ວງການວິນິດໄສຂອງກຳມະການຕັດສິນ ເປັນບຸກຄົນ ຫຼື ເປັນຄະນະ ແມ່ນຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ.

2.19 ນັກກິລາທີ່ບໍ່ຍິນຍອມເຂົ້າຮ່ວມການແຂ່ງຂັນຂອງທີມຊາດຕາມການແຈ້ງການຂອງ ສຕລ ໂດຍບໍ່ມີເຫດຜົນ ແມ່ນຈະບໍ່ອະນຸຍາດໃຫ້ສືບຕໍ່ເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ 1 ຈົນຈົບລະດູການ, ຖ້າຫາກສະໂມສອນຕົ້ນສັງກັດບໍ່ໃຫ້ເຂົ້າຮ່ວມຈະຖືກປະຕິບັດວິໄນຕາມລະບຽບການລົງວິໄນຂອງ ສຕລ ເຊັ່ນກັນ.

2.20 ເງິນປັບໄໝນັກກິລາຕາມທີ່ກຳນົດໄວ້ໃນກົດລະບຽບສະບັບນີ້ ແລະ ລະບຽບການລົງວິໄນຂອງ ສຕລ ແມ່ນໃຫ້ສະໂມສອນຕົ້ນສັງກັດຂອງນັກກິລາເປັນຜູ້ຊຳລະທົດແທນ ນັບແຕ່ມື້ໄດ້ຮັບແຈ້ງການ.

2.21 ສະໂມສອນທີ່ສົ່ງນັກກິລາທີ່ຂາດຄຸນສົມບັດ (ຖືກລົງວິໄນ, ບໍ່ຜ່ານການລົງທະບຽນທີ່ຖືກຕ້ອງ ຫຼື ກໍລະນີອື່ນໆ) ລົງແຂ່ງຂັນໃນນັດແຂ່ງຂັນໃດໜຶ່ງ, ຈະຖືກປະຕິບັດວິໄນດ້ວຍການປັບຜົນການແຂ່ງຂັນໃຫ້ເສຍໃຫ້ຄູ່ແຂ່ງຂັນ 0 ປະຕູຕໍ່ 3 ຫຼືຖ້າຫາກຜົນການແຂ່ງຂັນຂອງນັດດັ່ງກ່າວສະໂມສອນທີ່ກະທຳຜິດລະບຽບເສຍຫຼາຍກວ່າ 3 ປະຕູແມ່ນໃຫ້ຍຶດເອົາຈຳນວນປະຕູທີ່ເສຍຕົວຈິງນັ້ນເລີຍໂດຍໃຫ້ຍົກເລີກຈຳນວນປະຕູທີ່ສະໂມສອນຜິດລະບຽບຍິງໄດ້ທັງໝົດໃນນັດດັ່ງກ່າວ. ພ້ອມທັງຖືກປະຕິບັດວິໄນເພີ່ມເຕີມອີງຕາມກົດລະບຽບວ່າດ້ວຍການລົງວິໄນຂອງ ສຕລ ແລະ ສາກົນ.

3. ຄະນະບໍລິຫານງານສະໂມສອນ, ຄະນະຄູຝຶກ ແລະ ນັກກິລາຈະຖືກສັ່ງໂຈະການເຄື່ອນໄຫວໃນໄລຍະລະດູການແຂ່ງຂັນທີ່ກຳລັງດຳເນີນການແຂ່ງຂັນ ໃນກໍລະນີດັ່ງຕໍ່ໄປນີ້:

3.7 ບໍ່ຍອມປະຕິບັດຕາມແຈ້ງການ, ມະຕິຕົກລົງ ຫຼື ຈ່າຍຄ່າປັບໄໝຕາມທີ່ໄດ້ກຳນົດໄວ້ໃນລະບຽບສະບັບນີ້ ແລະ ກົດລະບຽບການລົງວິໄນຂອງ ສຕລ.

3.8 ປອມແປງຂໍ້ມູນເອກະສານການລົງທະບຽນ (ຕົວຢ່າງ: ວັນ,ເດືອນ,ປີເກີດໃນ ສຳມະໂນຄົວ, ບັດປະຈຳໂຕ, ໜັງສືເດີນທາງ, ສັນຍາ ຫຼື ໃບປົດປ່ອຍ). ນັກກິລາ ແລະ ຄະນະຄູຝຶກຈະຖືກຢຸດຕິການປະຕິບັດໜ້າທີ່ໃນການແຂ່ງຂັນບານເຕະ ລາວລີກ 1 ໂດຍທັນທີ ແລະ ຄະນະບໍລິຫານງານສະໂມສອນ, ຄະນະຄູຝຶກ ແລະ ນັກກິລາຈະຖືກລົງວິໄນຕາມກົດລະບຽບການລົງວິໄນຂອງ ສຕລ.

3.9 ໃນກໍລະນີເຈດຕະນາສ້າງຄວາມເສຍຫາຍຕໍ່ກຽດສັກສີ, ຊື່ສຽງ ແລະ ຊັບສິນ ຂອງ ສຕລ ໃນຮູບການຕ່າງໆ ດ້ວຍຮູບການລົງຂ່າວ ແລະ ເຜີຍແຜ່ຂໍ້ມູນຂ່າວສານທີ່ບິດເບືອນຄວາມຈິງ, ສຽດສີ ແລະ ໃສ່ຮ້າຍປ້າຍສີໃນສື່ອອນໄລຕາມຊ່ອງທາງຕ່າງໆເຊັ່ນ: ເຟສບຸກ, ອິນສະແກຣມ, ທະວິດເຕີ, ວັອດແອັບ , ຕິກຕອກ, ຢູທູບ ແລະ ອື່ນໆ, ຄະນະບໍລິຫານງານສະໂມສອນ, ຄະນະຄູຝຶກ ແລະ ນັກກິລາທີ່ລົງທະບຽນໃນການແຂ່ງຂັນຂອງ ສຕລ ຈະຖືກໂຈະການເຄື່ອນໄຫວໃນໄລຍະລະດູການແຂ່ງຂັນທີ່ກຳລັງດຳເນີນການແຂ່ງຂັນໂດຍທັນທີ ແລະ ຈະຖືກປະຕິບັດວິໄນຕາມກົດລະບຽບການລົງວິໄນຂອງ ສຕລ ແລະ ສຕລ ສາມາດດຳເນີນຄະດີຕາມກົດໝາຍຕໍ່ກັບບຸກຄົນດັ່ງກ່າວໄດ້.

# ພາກທີ VII

# ບົດບັນຍັດສຸດທ້າຍ

**ມາດຕາ 35: ບົດບັນຍັດສຸດທ້າຍ**

1. ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ 1 ແມ່ນຈະຕ້ອງໄດ້ປະຕິບັດກົດລະບຽບສະບັບນີ້ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງຂອງ ສຕລ ຢ່າງເຄັ່ງຄັດ.
2. ໃນກໍລະນີມີຂໍ້ຂັດແຍ່ງໃດໜຶ່ງເກີດຂຶ້ນ ບໍ່ວ່າ ຈະກ່ອນ, ຫຼັງ ຫຼື ໃນໄລຍະ ຂອງ ການແຂ່ງຂັນ ລະຫວ່າງ ພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ ໃນການແຂ່ງຂັນ, ຂໍ້ຂັດແຍ່ງດັ່ງກ່າວ ຕ້ອງໄດ້ຮັບການແກ້ໄຂ ຕາມຂັ້ນຕອນທີ່ລະບຸໄວ້ໃນ ກົດລະບຽບສະບັບນີ້ ແລະ ກົດລະບຽບ ອື່ນໆຂອງ ສຕລ ທີ່ມີຜົນບັງຄັບໃຊ້ໃນແຕ່ລະໄລຍະເທົ່ານັ້ນ. ຜົນຂອງການແກ້ໄຂດັ່ງກ່າວແມ່ນຖືເປັນທີ່ສິ້ນສຸດ ແລະ ມີຜົນບັງຄັບໃຊ້ຕໍ່ພາກສ່ວນທີ່ກ່ຽວຂ້ອງ.
3. ຖ້າບັນຫາໃດໜຶ່ງເກີດຂຶ້ນໃນການແຂ່ງຂັນ ທີ່ບໍ່ໄດ້ກຳນົດໄວ້ໃນກົດລະບຽບການແຂ່ງຂັນສະບັບນີ້ ຫຼື ນິຕິກຳຂອງ ສຕລ ແມ່ນຈະໄດ້ຮັບການພິຈາລະນາແກ້ໄຂໂດຍຄະນະອະນຸກຳມະການລະບຽບວິໄນຂອງ ສຕລ ໂດຍອີງໃສ່ນິຕິກຳຂອງ FIFA, AFC, AFF ແລະ/ຫຼື ບັນດາຄຳຕັດສິນຂອງອົງກອນທີ່ກ່ຽວຂ້ອງ.
4. ກົດລະບຽບສະບັບນີ້ ມີຜົນສັກສິດ ແລະ ບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ສະຫະພັນບານເຕະແຫ່ງຊາດລາວ

ປະທານ

ສ.ຕ.ລ LAO FOOTBALL FEDERATION

ວິເພັດ ສີຫາຈັກຣ

# ຂໍ້ກຳນົດເພີ່ມເຕີມທີ 1

## ນະໂຍບາຍອຸດໜູນສະໂມສອນ, ເງິນລາງວັນ ແລະ ປະເພດລາງວັນໃນການແຂ່ງຂັນ

- ການອຸດໜູນສະໂມສອນໃນການແຂ່ງຂັນຈະແບ່ງອອກເປັນ 2 ປະເພດດັ່ງລຸ່ມນີ້:

1. ເງິນອຸດໜູນສະໂມສອນ

1.1 ສະໂມສອນທີ່ລົງທະບຽນສຳເລັດ ແລະ ເຂົ້າຮ່ວມການແຂ່ງຂັນຈະໄດ້ຮັບເງິນອຸດໜູນໃນການບໍລິຫານສະໂມສອນ ໂດຍອີງຕາມມະຕິຕົກລົງຂອງຄະນະບໍລິຫານງານ ສຕລ;

1.1.1. ເງິນອຸດໜູນທີ່ໄດ້ຮັບຈາກ ສຕລ ແມ່ນໃຫ້ນຳໃຊ້ເປັນຄ່າໃຊ້ຈ່າຍໃນການຈັດການແຂ່ງຂັນບານເຕະລາວລີກ 1 ແລະ ເງິນແຮງງານຂອງນັກກິລາ ແລະ ຄູຝຶກທີ່ເຂົ້າຮ່ວມການແຂ່ງຂັນລາວລີກ 1 ເທົ່ານັ້ນ.

1.1.2. ສະໂມສອນທີ່ລົງທະບຽນສຳເລັດ ແລະ ມີອົງປະກອບຄົບຖ້ວນຈະໄດ້ຮັບເງິນອຸດໜູນສະໂມສອນເປັນຈຳນວນ 150.000.000 ກີບ ໂດຍ ສຕລ ຈະແບ່ງຈ່າຍເປັນ 2 ງວດ:

1. ງວດທີ 1 ສະໂມສອນຕ້ອງໄດ້ລົງທະບຽນ ໃຫ້ສຳເລັດສົມບູນກ່ອນການແຂ່ງຂັນ ແລະ ສົ່ງແຜນການນຳໃຊ້ງົບປະມານງວດທຳອິດໃຫ້ ສຕລຮັບຊາບ ຈຶ່ງຈະໄດ້ຮັບການອະນຸມັດເບີກຈ່າຍເງິນງວດທຳອິດ 120,000,000 ກີບໃຫ້ສະໂມສອນໂດຍການໂອນເຂົ້າບັນຊີທະນາຄານທີ່ອອກຊື່ຂອງສະໂມສອນ ແລະ ສະໂມສອນຕ້ອງໄດ້ສະຫຼຸບລາຍຈ່າຍທັງໝົດຂອງຈຳນວນເງິນງວດທຳອິດນີ້ ໃຫ້ຖືກຕ້ອງຕາມກົດລະບຽບການເງິນ ຈຶ່ງຈະສາມາດຮັບເງິນອຸດໜູນງວດທີ 2 ພາຍຫຼັງສິ້ນສຸດການແຂ່ງຂັນ.
2. ງວດທີ 2 ເງິນອຸດໜູນ 30,000,000 ກີບ ທີ່ຍັງເຫຼືອ ຈະຖືກຫັກຄ່າໃຊ້ຈ່າຍປັບໃໝບັດເຫຼືອງ-ແດງ ແລະ ຄ່າທຳນຽມຕ່າງໆ ແລ້ວເຫຼືອເງິນເທົ່າໃດແມ່ນຈະໂອນເຂົ້າບັນຊີທະນາຄານທີ່ອອກຊື່ຂອງສະໂມສອນ ແລະ ສະໂມສອນຕ້ອງໄດ້ສະຫຼຸບລາຍຈ່າຍທັງໝົດຂອງຈຳນວນເງິນງວດທີ 2 ນີ້ ໃຫ້ຖືກຕ້ອງຕາມກົດລະບຽບການເງິນ ສຕລ 30 ວັນແລ້ວສົ່ງໃຫ້ ສຕລ ໂດຍຜ່ານພະແນກຈັດການແຂ່ງຂັນຂອງ ສຕລ.

1.1.3. ສະໂມສອນສາມາດນຳໃຊ້ສະໜາມກິລາແຫ່ງຊາດຫຼັກ 16 ເປັນສະໜາມແຂ່ງຂັນຂອງຕົນເອງໃນນັດເປັນເຈົ້າບ້ານ ໂດຍຈະຕ້ອງໄດ້ເຮັດສັນຍານຳໃຊ້ຮ່ວມກັບ ສຕລ ແລະ ນຳໃຊ້ສະໜາມບານເຕະສູນຝຶກຫ້ວຍຫົງເປັນສະໜາມຊ້ອມຂອງສະໂມສອນໂດຍອີງຕາມກົດລະບຽບ ຂອງ ສຕລ.

1.1.4. ສະໂມສອນໃດມີຈຸດປະສົງຢາກນຳໃຊ້ສະໜາມແຂ່ງຂັນ ແລະ ນຳໃຊ້ສະໜາມບານເຕະສູນຝຶກຫ້ວຍຫົງເປັນສະໜາມຊ້ອມຂອງສະໂມສອນຕ້ອງມີການເຮັດສັນຍານຳໃຊ້ຢ່າງລະອຽດລະຫວ່າງສະໂມສອນ ແລະ ພະແນກບໍລິຫານຂອງ ສຕລ.

1.1.5. ສະໂມສອນທີ່ນຳໃຊ້ສະໜາມແຂ່ງຂັນອື່ນໆທີ່ບໍ່ແມ່ນສະໜາມຂອງ ສຕລ ເປັນສະໜາມເຈົ້າບ້ານ ຈະໄດ້ຮັບເງິນອຸດໜູນປັບປຸງສະໜາມຈຳນວນ 40.000.000 ກີບ/ສະໜາມ ເພື່ອນຳໃຊ້ໃນການປັບປຸງແກ້ໄຂອົງປະກອບຕ່າງໆໃນສະໜາມໃຫ້ໄດ້ມາດຕະຖານ ຕາມທີ່ຄະນະຈັດການແຂ່ງຂັນໄດ້ກຳນົດ.

1.1.6. ສະໂມສອນ ຈະໄດ້ຮັບເງິນອຸດໜູນການເດີນທາງໄປແຂ່ງຂັນຕ່າງແຂວງ ໂດຍອີງຕາມກົດລະບຽບ ສຕລ.

1.1.7. ການໃຊ້ຈ່າຍເງິນອຸດໜຸນທີ່ໄດ້ຮັບຈາກ ສຕລ ຕ້ອງດຳເນີນການເບີກຈ່າຍຜ່ານລະບົບທະນາຄານ ແລະ ມີການເກັບກຳໃບບິນຕ່າງໆ ແລະ ສະຫຼຸບບັນຊີລາຍຈ່າຍຢ່າງເປັນລະບົບເພື່ອລາຍງານຄືນໃຫ້ ສຕລ.

## 2. ລາງວັນ

2.1 ເງິນລາງວັນປະເພດສະໂມສອນ

2.1.1 ອັນດັບ 1 ໄດ້ຮັບເງິນລາງວັນ 600,000,000 ກີບ, ຂັນ 1 ໜ່ວຍ ແລະ ຫຼຽນລາງວັນ 45 ຫຼຽນ.

2.1.2 ອັນດັບ 2 ໄດ້ຮັບເງິນລາງວັນ 300,000,000 ກີບ

2.1.3 ອັນດັບ 3 ໄດ້ຮັບເງິນລາງວັນ 150,000,000 ກີບ

2.1.4 ອັນດັບ 4 ໄດ້ຮັບເງິນລາງວັນ 75,000,000 ກີບ

2.1.5 ອັນດັບ 5 ໄດ້ຮັບເງິນລາງວັນ 50,000,000 ກີບ

2.1.6 ອັນດັບ 6 ໄດ້ຮັບເງິນລາງວັນ 45,000,000 ກີບ

2.1.7 ອັນດັບ 7 ໄດ້ຮັບເງິນລາງວັນ 35,000,000 ກີບ

2.1.8 ອັນດັບ 8 ໄດ້ຮັບເງິນລາງວັນ 30,000,000 ກີບ

2.1.9 ອັນດັບ 9 ໄດ້ຮັບເງິນລາງວັນ 25,000,000 ກີບ

2.1.10 ອັນດັບ 10 ໄດ້ຮັບເງິນລາງວັນ 20,000,000 ກີບ

2.2 ລາງວັນປະເພດບຸກຄົນ:

2.2.1 ນັກກິລາທີ່ຍິງປະຕູສູງສຸດ ໄດ້ຮັບຂັນລາງວັນ 1 ໜ່ວຍ

2.2.2 ຜູ້ຮັກສາປະຕູດີເດັ່ນ ໄດ້ຮັບຂັນລາງວັນ 1 ໜ່ວຍ

2.2.3 ຄູຝຶກດີເດັ່ນ ໄດ້ຮັບຂັນລາງວັນ 1 ໜ່ວຍ

2.2.4 ນັກກິລາດີເດັ່ນປະຈຳການແຂ່ງຂັນ ໄດ້ຮັບຂັນລາງວັນ 1 ໜ່ວຍ

2.3 ສະໂມສອນຊະນະເລີດແມ່ນຈະໄດ້ຮັບສິດຕາງໜ້າສະໂມສອນຈາກ ສປປ ລາວ ໃນການເຂົ້າຮ່ວມລາຍການແຂ່ງຂັນໃນລະດັບພາກພື້ນ ຫຼື ສາກົນ.

2.4 ສະໂມສອນທີ່ເຂົ້າຮ່ວມການແຂ່ງຂັນລາວລີກ 1 ແລະ ມີຈຸດປະສົງຈະເຂົ້າຮ່ວມການແຂ່ງຂັນ AFC Challenge League(ACGL) ຫຼື AFF Club Championship ໃນປີຕໍ່ໄປ ຕ້ອງຍື່ນຂໍໃບອະນຸຍາດ Club Licensing ລະດັບ AFC, ຖ້າໄດ້ຮັບໃບອະນຸຍາດ Club Licensing ລະດັບ AFC ສະໂມສອນດັ່ງກ່າວຈຶ່ງສາມາດເຂົ້າຮ່ວມການແຂ່ງຂັນບານເຕະຂອງ AFC ໄດ້. ໃນກໍລະນີສະໂມສອນທີ່ໄດ້ຊະນະເລີດລາວລີກ 1 ບໍ່ໄດ້ຮັບໃບອະນຸຍາດ Club Licensing ລະດັບ AFC ສະໂມສອນດັ່ງກ່າວແມ່ນບໍ່ມີສິດເຂົ້າຮ່ວມການແຂ່ງຂັນບານເຕະຂອງ AFC ຫຼື ການແຂ່ງຂັນບານເຕະລາຍການອື່ນໆທີ່ຖືກເຊີນ. ສິດໃນການເຂົ້າຮ່ວມການແຂ່ງຂັນບານເຕະຂອງ AFC ຫຼື ການແຂ່ງຂັນບານເຕະລາຍການອື່ນໆທີ່ຖືກເຊີນຈະຕົກເປັນຂອງສະໂມສອນໃນລຳດັບຖັດໄປຕາມກົດລະບຽບ Club Licensing ຂອງ AFC. ແຕ່ເຖິງຢ່າງໃດກໍຕາມສະໂມສອນທີ່ຈະໄດ້ຮັບສິດແທນຕ້ອງໄດ້ຮັບໃບອະນຸຍາດ Club Licensing ລະດັບ AFC ຈຶ່ງສາມາດເຂົ້າຮ່ວມແຂ່ງຂັນບານເຕະ AFC ຫຼື ການແຂ່ງຂັນບານເຕະລາຍການອື່ນໆທີ່ຖືກເຊີນໄດ້.

# ຂໍ້ກຳນົດເພີ່ມເຕີມທີ 2

## ມາດຕະຖານຂອງສະໜາມແຂ່ງຂັນໃນການແຂ່ງຂັນບານເຕະ ລາວລີກ 1

**1. ຫຼັກການທົ່ວໄປ**

ສະໜາມແຂ່ງຂັນທີ່ຈະນຳໃຊ້ເຂົ້າໃນການຈັດການແຂ່ງຂັນບານເຕະ ລາວລີກ 1 ຕ້ອງມີເອກະສານຢັ້ງຢືນການອະນຸຍາດນຳໃຊ້ຈາກພາກສ່ວນຕ່າງໆດັ່ງລຸ່ມນີ້:

1.1 ໜັງສືອະນຸຍາດນຳໃຊ້ຈາກເຈົ້າຂອງສະໜາມ (ສັນຍາເຊົ່ານຳໃຊ້ ຫຼື ເອກະສານຢັ້ງຢືນການເປັນເຈົ້າຂອງສະໜາມ)

1.2 ໜັງສືຮັບຮອງມາດຕະຖານຈາກຝ່າຍຈັດການແຂ່ງຂັນ

**2. ຫຼັກການດ້ານໂຄງສ້າງ**

2.1 ບໍລິເວນອ້ອມຮອບສະໜາມແຂ່ງຂັນ

2.1.1 ເດີ່ນແຂ່ງຂັນ

- ເປັນພື້ນຫຍ້າທຳມະຊາດ ຫຼື ຫຍ້າທຽມທີ່ໄດ້ມາດຕະຖານຂອງ FIFA.
- ຫຍ້າທຽມໃນເດີ່ນແຂ່ງຂັນຕ້ອງເປັນສີຂຽວ.
- ເດີ່ນແຂ່ງຂັນມາດຕະຖານຕ້ອງມີຂະໜາດ: ຄວາມຍາວ 105 ແມັດ, ຄວາມກວ້າງ 68 ແມັດ
- ມີພື້ນເດີ່ນທີ່ລຽບສະເໝີກັນ
- ເສັ້ນແບ່ງເຂດຕ່າງໆໃນເດີ່ນແຂ່ງຂັນຕ້ອງມີຂະໜາດສະເໝີກັນຢູ່ທີ່ 12cm.
- ມີລະບົບລະບາຍນ້ຳອ້ອມຮອບເດີ່ນ.

2.1.2 ພື້ນທີ່ອົບອຸ່ນຮ່າງກາຍ

- ສະໜາມແຂ່ງຂັນຕ້ອງມີພື້ນທີ່ອົບອຸ່ນຮ່າງກາຍໃຫ້ກັບນັກກິລາສຳຮອງໃນລະຫວ່າງການແຂ່ງຂັນ. ໂດຍຕ້ອງຈັດພື້ນທີ່ອົບອຸ່ນຮ່າງກາຍຢູ່ບໍລິເວນຫຼັງປະຕູ ຫຼື ບໍລິເວນດ້ານຂ້າງຂອງເຂດເຕັກນິກສະໂມສອນຕົນເອງຖ້າຫາກເດີ່ນແຂ່ງຂັນບໍ່ມີພື້ນທີ່ຫຼັງປະຕູ.

2.1.3 ເສົາປະຕູ

- ເສົາ ແລະ ຄານຂອງປະຕູໃນເດີ່ນແຂ່ງຂັນຕ້ອງເຮັດມາຈາກເຫຼັກ ຫຼື ອາລູມິນຽມໂດຍມີລັກສະນະເປັນທໍ່ກົມ ແລະ ມີຂະໜາດເສັ້ນຜ່າສູນກາງບໍ່ເກີນ 12cm.
- ຂະໜາດຂອງປະຕູ: ຄວາມກວ້າງຈາກຂອບເສົາດ້ານໃນຫາອີກເສົາ 7,32 ແມັດ ແລະ ສູງຈາກພື້ນເດີ່ນຫາກ້ອງຄານ 2,44 ແມັດ.
- ເສົາ ແລະ ຄານປະຕູຕ້ອງເປັນສີຂາວລວມທັງຕ້ອງມີການອອກແບບທີ່ປອດໄພຕໍ່ນັກກິລາ.
- ເສົາປະຕູສຳຮອງຕ້ອງມີກຽມພ້ອມຢູ່ສະໜາມແຂ່ງຂັນລວມທັງຕ້ອງສາມາດຕິດຕັ້ງໄດ້ງ່າຍ.

2.1.4 ຄວາມແຈ້ງຂອງໄຟສະໜາມ

- ຄວາມແຈ້ງຂອງໄຟສະໜາມຕ້ອງມີຄ່າຄວາມແຈ້ງຢູ່ທີ່ 600 lux ຂຶ້ນໄປຈຶ່ງສາມາດແຂ່ງຂັນໄດ້.
- ໄຟສະໜາມຕ້ອງເປັນໄຟສີຂາວທີ່ນຳໃຊ້ສຳລັບການແຂ່ງຂັນກິລາບານເຕະ.
- ຕ້ອງມີລະບົບໄຟສຳຮອງໃນກໍລະນີໄຟດັບ ຫຼື ໄຟຕົກ.

- ສະໂມສອນທີ່ຕ້ອງການແຂ່ງຂັນໃນເວລາທີ່ຕ້ອງເປີດໄຟສະໜາມຕ້ອງເປັນຜູ້ຮັບຜິດຊອບການກະກຽມຄວາມພ້ອມຂອງລະບົບໄຟ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ.

2.1.5 ໂມງຈັບເວລາຢູ່ສະໜາມແຂ່ງຂັນ (ຖ້າມີ)

- ສະໜາມແຂ່ງຂັນຄວນຈະມີໂມງຈັບເວລາເພື່ອສະແດງເວລາໃນໄລຍະການແຂ່ງຂັນ.
- ການສະແດງເວລາຂອງການແຂ່ງຂັນຕ້ອງເລີ່ມຈາກ ນາທີທີ່ 0-45 ໃນເຄິ່ງເວລາທໍາອິດ ແລະ ຈາກນາທີທີ່ 45-90 ໃນເຄິ່ງເວລາທີ 2.

2.1.6 ບ່ອນນັ່ງນັກກິລາສໍາຮອງ

ເດີ່ນແຂ່ງຂັນຕ້ອງກະກຽມບ່ອນນັ່ງສໍາຮອງທີ່ມີຫຼັງຄາໃຫ້ກັບທັງສອງສະໂມສອນຢູ່ສະໜາມແຂ່ງຂັນ ໂດຍຕ້ອງມີຈໍານວນບ່ອນນັ່ງ 20 ບ່ອນຕໍ່ສະໂມສອນ.

2.2 ສິ່ງອໍານວຍຄວາມສະດວກສໍາລັບສະໂມສອນ ແລະ ເຈົ້າໜ້າທີ່ຈັດການແຂ່ງຂັນ

2.2.1 ຫ້ອງປ່ຽນເຄື່ອງນັກກິລາ

- ຕ້ອງມີຫ້ອງປ່ຽນເຄື່ອງນັກກິລາຢ່າງໜ້ອຍ 2 ຫ້ອງ.
- ຫ້ອງປ່ຽນເຄື່ອງນັກກິລາຕ້ອງມີຫ້ອງນໍ້າ ແລະ ຫ້ອງອາບນໍ້າຕິດຢູ່ໃນ.
- ຕັ່ງນັ່ງສໍາລັບ 31 ຄົນໃນຫ້ອງປ່ຽນເຄື່ອງ.
- ຕຽງນວດ 1 ໜ່ວຍ.
- ກະດານໄວບອດ ແລະ ບິກເຟີດ 1 ຊຸດ.
- ຖັງນໍ້າກ້ອນຂະໜາດ 20 ລິດ ແລະ ນໍ້າກ້ອນເຄິ່ງຖັງ.
- ມີເຄື່ອງປັບອາກາດ ຫຼື ພັດລົມຢ່າງໜ້ອຍ 2 ໜ່ວຍ
- ຕ້ອງເປັນຫ້ອງທີ່ຢູ່ຕິດກັບທາງຢ່າງອອກສູ່ເດີ່ນແຂ່ງຂັນ.

2.2.2 ຫ້ອງພັກກໍາມະການຕັດສິນ

- ຄວນມີຫ້ອງນໍ້າ ແລະ ຫ້ອງອາບນໍ້າຢ່າງລະ 1 ຫ້ອງ.
- ໂຕະ 1 ໜ່ວຍ ແລະ ຕັ່ງ 8 ໜ່ວຍ.
- ຖັງນໍ້າກ້ອນຂະໜາດ 10 ລິດພ້ອມດ້ວຍນໍ້າກ້ອນ ແລະ ນໍ້າດື່ມ 1 ແພັກ.
- ມີເຄື່ອງປັບອາກາດ ຫຼື ພັດລົມ 1 ໜ່ວຍ.

2.2.3 ຫ້ອງເຮັດວຽກຂອງເຈົ້າໜ້າທີ່ຈັດການແຂ່ງຂັນ.

- ຫ້ອງທີ່ສາມາດຮັບຮອງໄດ້ 8 ຄົນ, ມີໂຕະ 1 ໜ່ວຍ ແລະ ຕັ່ງ 8 ໜ່ວຍ.
- ມີຮູປັກສຽບ ແລະ ປັກສຽບພ້ອມໃຊ້ງານ.
- ມີເຄື່ອງປັບອາກາດ ຫຼື ພັດລົມ 1 ໜ່ວຍ.
- ນໍ້າດື່ມສໍາຫຼັບເຈົ້າໜ້າທີ່ຈັດການແຂ່ງຂັນ 1 ແພັກ.
- ຫ້ອງເຮັດວຽກຂອງເຈົ້າໜ້າທີ່ຈັດການແຂ່ງຂັນຕ້ອງຢູ່ໃກ້ກັບ ຫຼື ຢູ່ໃນບໍລິເວນຫ້ອງປ່ຽນເຄື່ອງຂອງນັກກິລາ.

2.2.4 ບ່ອນນັ່ງເຮັດວຽກສໍາຫຼັບເຈົ້າໜ້າທີ່ຈັດການແຂ່ງຂັນ

- ມີໂຕະ 1 ໜ່ວຍ ແລະ ຕັ່ງ 3 ໜ່ວຍ.

- ຕັ້ງຢູ່ຈຸດທີ່ສາມາດແນມເຫັນບໍລິເວນອ້ອມຮອບເດີ່ນແຂ່ງຂັນທັງໝົດ.
- ມີຫຼັງຄາສາມາດກັນແດດກັນຝົນໄດ້.

2.2.5 ສະຖານທີ່ຈອດລົດ

- ມີສະຖານທີ່ຈອດລົດສໍາລັບເຈົ້າໜ້າທີ່ຈັດການແຂ່ງຂັນໂດຍບໍ່ເສຍຄ່າ.
- ມີສະຖານທີ່ຈອດລົດສໍາລັບນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນມາຢາມໂດຍບໍ່ເສຍຄ່າ.
- ຈໍານວນບ່ອນຈອດລົດສໍາລັບເຈົ້າໜ້າທີ່ຈັດການແຂ່ງຂັນ ແລະ ສະໂມສອນມາຢາມຂັ້ນຕໍ່າແມ່ນ 20 ຄັນ.

## 3. ສິ່ງອໍານວຍຄວາມສະດວກສື່ມວນຊົນ

3.1 ມີຫ້ອງເຮັດວຽກ ຫຼື ສະຖານທີ່ເຮັດວຽກຂອງສື່ມວນຊົນ.

3.2 ມີບ່ອນນັ່ງຖ່າຍຮູບໃຫ້ກັບສື່ມວນຊົນຢູ່ຫຼັງປະຕູໃນໄລຍະການແຂ່ງຂັນ.

3.3 ມີຫ້ອງຖະແຫຼງຂ່າວທີ່ສາມາດຮອງຮັບ 20 ຄົນໄດ້.

3.4 ມີຫ້ອງ ຫຼື ເຂດສະເພາະສໍາລັບທີມຖ່າຍທອດສົດ.

3.5 ມີການກໍານົດ ແລະ ກັນຈຸດຕັ້ງກ້ອງສໍາລັບການຖ່າຍທອດສົດ.

3.6 ມີ Mixed Zone ທີ່ໃຫ້ສື່ມວນຊົນສາມາດຖ່າຍຮູບນັກກິລາ ຫຼື ສໍາພາດນັກກິລາໄດ້.

## 4. ສິ່ງອໍານວຍຄວາມສະດວກວຽກງານການແພດ

4.1 ຫ້ອງແພດປະຈໍາສະໜາມແຂ່ງຂັນ

4.1.1 ຕ້ອງເປັນຫ້ອງທີ່ຢູ່ໃກ້ກັບເດີ່ນແຂ່ງຂັນ.

4.1.2 ມີຕຽງນອນຄົນເຈັບ 1 ຕຽງ.

4.1.3 ມີເຄື່ອງປັບອາກາດ ຫຼື ພັດລົມ 1 ໜ່ວຍ.

4.1.4 ມີເປຫາມນັກກິລາຈໍານວນ 2 ອັນ.

4.1.5 ມີອຸປະກອນປະຖົມພະຍາບານ 1 ຊຸດ.

4.2 ມີທີມແພດປະຈໍາສະໜາມ ຢ່າງໜ້ອຍ 2 ທ່ານ.

4.3 ມີລົດແພດປະຈໍາສະໜາມແຂ່ງຂັນຢ່າງໜ້ອຍ 1 ຄັນ.

4.4 ກະກຽມສະຖານທີ່ຈອດລົດແພດຢູ່ແຈເດີ່ນແຂ່ງຂັນ ແລະ ຈັດທາງອອກຈາກສະໜາມແຂ່ງຂັນໃຫ້ກັບລົດໂຮງໝໍໂດຍສະເພາະ.

4.5 ມີໂຕະ 1 ໜ່ວຍ ແລະ ຕັ່ງນັ່ງເຮັດວຽກ 4 ໜ່ວຍຢູ່ຂ້າງສະໜາມ.

## 5. ພື້ນທີ່ສໍາລັບແຂກ VIP (ໃໝ່)

5.1 ມີບ່ອນນັ່ງສໍາລັບແຂກ VIP ຈໍານວນ 50 ບ່ອນ.

5.2 ບ່ອນນັ່ງ VIP ຕ້ອງຢູ່ໃນຝັ່ງອັດສະຈັນຫຼັກຂອງສະໜາມ.

## 6. ສິ່ງອໍານວຍຄວາມສະດວກສໍາລັບຜູ້ຊົມ

6.1 ມີອັດສະຈັນຂອງຜູ້ຊົມທີ່ແບ່ງອອກເປັນ 2 ເຂດຄືຝັ່ງກອງເຊຍສະໂມສອນເຈົ້າບ້ານ ແລະ ກອງເຊຍສະໂມສອນມາຢາມ.

6.2 ມີເຄື່ອງກະຈາຍສຽງໃນການປະກາດຂໍ້ມູນການແຂ່ງຂັນສໍາລັບແຟນບານໃນສະໜາມແຂ່ງຂັນ.

6.3 ມີຮົ້ວກັ້ນເຂດ ຫຼື ເຈົ້າໜ້າທີ່ຮັກສາຄວາມປອດໄພ.

6.4 ມີຫ້ອງນໍ້າແຍກຍິງ-ຊາຍສໍາລັບແຟນບານທັງສອງສະໂມສອນ.

6.5 ມີທາງເຂົ້າ-ອອກສໍາລັບແຟນບານທັງສອງສະໂມສອນ.

6.6 ມີຈຸດກວດຄວາມປອດໄພກ່ອນເຂົ້າສະໜາມຂອງແຟນບານ.

# ຂໍ້ກຳນົດເພີ່ມເຕີມທີ 2

## ຕົວຢ່າງສັນຍາວ່າຈ້າງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**************************

ກາສະໂມສອນ

## ຮ່າງສັນຍາແຮງງານ

ສະໂມສອນ.................... ເອີ້ນຫຍໍ້ວ່າ " ..............." ຫ້ອງການຕັ້ງຢູ່................., ບ້ານ............, ເມືອງ ................,..................., ສປປ ລາວ ຕູ້ ປ.ນ............ໂທລະສັບ:........................., ແຟັກ:.................. ອີເມວ: ..........................ເຊິ່ງຕໍ່ໄປນີ້ເອີ້ນວ່າ **"ຜູ້ໃຊ້ແຮງງານ ຫຼື ຜູ້ວ່າຈ້າງ"**

ແລະ

ທ້າວ......................................, ອາຍຸ.............ປີ, ສັນຊາດ..............ປະຈຸບັນຢູ່ບ້ານ ............... ເຮືອນເລກທີ........, ເມືອງ..................,ແຂວງ.................. ໂທລະສັບມືຖື.................., ອີເມວ ......................ຈັດເຂົ້າສຳມະໂນຄົວເລກທີ...............ລົງວັນທີ......................ອອກໂດຍ ປກສ ເມືອງ ...................., ແຂວງ..............., ຖືບັດປະຈຳໂຕ/ໜັງສືເດີນທາງເລກທີ....................., ລົງວັນທີ ..........................ອອກໂດຍ ປກສ ແຂວງ.......................... ເຊິ່ງຕໍ່ໄປນີ້ເອີ້ນວ່າ **"ຜູ້ອອກແຮງງານ" ຫຼື "ພະນັກງານ"**

**ມາດຕາ 1: ປະເພດສັນຍາ ແລະ ໄລຍະເວລາຂອງສັນຍາວ່າຈ້າງ**

1. ປະເພດສັນຍາ:
   - 1.1 ມີກຳນົດ: ສັນຍາສະບັບນີ້ເລີ່ມແຕ່ວັນທີ......................ແລະ ສິ້ນສຸດໃນວັນທີ......................

2. ເງິນຄ່າແຮງງານ
   - 2.1 ຜູ້ອອກແຮງງານຈະໄດ້ຮັບເງິນເດືອນ.............................................(ລະບຸວິທີເບີກຈ່າຍພ້ອມໃນກໍລະນີມີການກຳນົດເງື່ອນໄຂໃນການເບີກຈ່າຍ)
   - 2.2 ຜູ້ອອກແຮງງານຈະໄດ້ຮັບສະຫວັດດີການ...........................................(ລະບຸລາຍລະອຽດຢ່າງຊັດເຈນ)
   - 2.3 ຜູ້ອອກແຮງງານຈະໄດ້ຮັບໂບນັດ (ເງິນພິເສດ)..............................(ລະບຸລາຍລະອຽດຖ້າຫາກມີການກຳນົດເງື່ອນໄຂເງິນໂບນັດ)
   - 2.4 ການເບີກຈ່າຍເງິນຄ່າແຮງງານແມ່ນເບີກຈ່າຍເປັນເດືອນໆລະ 1 ຄັ້ງ, ວັນເບີກຈ່າຍແມ່ນລະຫວ່າງວັນທີ .................................

ມາດຕາ 2 : ພັນທະຂອງຜູ້ອອກແຮງງານ

- ອີງຕາມກົດລະບຽບຂອງສະໂມສອນ ແລະ ການຕົກລົງເຫັນດີຂອງສອງຝ່າຍ

ມາດຕາ 3: ໜ້າທີ່ຂອງຜູ້ວ່າຈ້າງ

- ອີງຕາມການກຳນົດຂອງສະໂມສອນ ແລະ ການເຮັດສັນຍາສອງຝ່າຍ

ມາດຕາ 4: ການປະເມີນຜົນການຈັດຕັ້ງປະຕິບັດຂອງສັນຍາວ່າຈ້າງ

- ອີງຕາມການຕົກລົງຂອງສະໂມສອນ ແລະ ຜູ້ອອກແຮງງານ ຫຼື ຕາມກົດລະບຽບຂອງສະໂມສອນທີ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ.

ມາດຕາ 5: ມາດຕະການຕໍ່ການລະເມີດສັນຍາ

- ອີງຕາມການຕົກລົງຂອງສອງຝ່າຍໃນສັນຍາວ່າຈ້າງໂດຍອີງໃສ່ລະບຽບກົດໝາຍທີ່ກ່ຽວຂ້ອງ

ມາດຕາ 6: ການປົກປ້ອງສິດທິຂອງຄູ່ສັນຍາ

- ໃນກໍລະນີທີ່ຜູ້ອອກແຮງງານພິຈາລະນາວ່າຕົວເອງບໍ່ໄດ້ຮັບຄວາມເປັນທຳໃນການປະຕິບັດສັນຍາ, ຜູ້ອອກແຮງງານສາມາດສະເໜີຂໍເຈລະຈາພາຍໃນສະໂມສອນໄດ້ເປັນການແກ້ໄຂບັນຫາໃນຂັ້ນຕົ້ນສິ່ງ. ຖ້າຫາກຍັງບໍ່ສາມາດຕົກລົງກັນໄດ້ຜູ້ອອກແຮງງານສາມາດສົ່ງໜັງສືຮ້ອງທຸກມາຫາ ສຕລ ພາຍໃນ 7 ວັນລັດຖະການເພື່ອໃຫ້ຊ່ວຍໄກ່ເກ່ຍ.

ມາດຕາ 7: ການສິ້ນສຸດຂອງສັນຍາ

- ຕາມການຕົກລົງຂອງຄູ່ສັນຍາ

ຜູ້ວ່າຈ້າງ ຜູ້ອອກແຮງງານ

# ຂໍ້ກຳນົດເພີ່ມເຕີມທີ 4

## ໃບອະນຸຍາດສະໂມສອນການແຂ່ງຂັນບານເຕະລາວລີກ 1

## (Lao League 1 Club Licensing)

ສະໂມສອນບານເຕະຈະຕ້ອງປະກອບເອກະສານເງື່ອນໄຂຂອງລະບຽບດັ່ງຕໍ່ໄປນີ້ເພື່ອໃຫ້ໄດ້ຮັບໃບອະນຸຍາດສະໂມສອນ (Club Licensing) ຈາກ ສຕລ ແລະ ຈຶ່ງສາມາດ ເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ 1 ແລະ ໄດ້ຮັບເງິນອຸດໜູນການຈາກ ສຕລ.

1. ເງື່ອນໄຂດ້ານການກິລາ
   - ຫົວໜ້າຄູຝຶກ (ໃຫ້ມີ " A License ຂຶ້ນໄປ) : ຕ້ອງມີ
   - ຜູ້ຊ່ວຍຄູຝຶກ ( ໃຫ້ມີ " C " License ຂຶ້ນໄປ) : ຕ້ອງມີຢ່າງໜ້ອຍ 1 ທ່ານ.
   - ຄູຝຶກຜູ້ຮັກສາປະຕູ (ໃຫ້ມີ " C " License ຂຶ້ນໄປ ຫຼື ໃບປະກາດຄູຝຶກປະຕູ Level 1 ຂຶ້ນໄປ): ຕ້ອງມີ
   - ແພດປະຈຳສະໂມສອນ (ມີໃບປະກາດແພດລະດັບຊັ້ນສູງຂຶ້ນໄປ) : ຕ້ອງມີ.
   - ນັກກາຍະພາບບຳບັດ (ໃບປະກາດແພດກາຍະພາບບຳບັດລະດັບຊັ້ນກາງຂຶ້ນໄປ): ຕ້ອງມີ
   - ສະໂມສອນຕ້ອງມີນັກກິລາເຍົາວະຊົນ ລຸ້ນອາຍຸບໍ່ເກີນ 15 ປີ ແລະ 18 ປີ ແລະ ຕ້ອງສົ່ງເຂົ້າຮ່ວມການແຂ່ງຂັນເຍົາວະຊົນທີ່ ສຕລ ກຳນົດໃຫ້.
   - ຕ້ອງມີສັນຍາເປັນລາຍລັກອັກສອນກັບນັກກິລາ ແລະ ເຈົ້າໜ້າທີ່ສະໂມສອນໂດຍຕ້ອງລະບຸໄລຍະສັນຍາ, ຄ່າຈ້າງ, ເງິນອຸດໜູນພິເສດ (ຖ້າຫາກມີ) ແລະ ເງື່ອນໄຂການສິ້ນສຸດສັນຍາໄວ້ຢ່າງຈະແຈ້ງ
   - ສະໂມສອນທີ່ເຊັນສັນຍາກັບນັກກິລາຕ່າງປະເທດຕ້ອງຮັບຜິດຊອບເອກະສານເຂົ້າເມືອງຕ່າງໆຂອງນັກກິລາຕ່າງປະເທດຄືນດັ່ງກ່າວລວມທັງໃບອະນຸຍາດເຮັດວຽກໃນ ສປປ ລາວ.
   - ການກວດສຸຂະພາບປະຈຳປີ ໃຫ້ກັບນັກກິລາຊຸດໃຫຍ່ ແລະ ເຍົາວະຊົນຂອງສະໂມສອນ.

2. ເງື່ອນໄຂດ້ານໂຄງລ່າງພື້ນຖານ
   - ມີສະໜາມແຂ່ງຂັນເປັນຂອງສະໂມສອນ, ສະໜາມແຂ່ງຂັນຈະເປັນຮູບແບບ ສັນຍາເຊົ່າກໍ່ໄດ້ ແຕ່ຕ້ອງໄດ້ມາດຕະຖານໂດຍໄດ້ຮັບການກວດກາ ແລະ ຮັບຮອງຈາກ ສຕລ.
   - ມີສະໜາມຊ້ອມເປັນຂອງສະໂມສອນ, ສະໜາມຊ້ອມຈະເປັນຮູບແບບສັນຍາເຊົ່າກໍ່ໄດ້.
   - ສະໂມສອນຕ້ອງມີຫ້ອງການ, ທີ່ຢູ່ສາມາດຕິດຕໍ່ໄດ້, ເບີໂທລະສັບ, ເບີແຟກ, ອີເມວ (E-mail) ແລະຜູ້ປະສານງານເພື່ອສະດວກໃນການຕິດຕໍ່.

3. ເງື່ອນໄຂດ້ານບຸກຄະລາກອນບໍລິຫານ
   - ຜູ້ຈັດການສະໂມສອນ (General Manager) ເຮັດວຽກເຕັມເວລາ.
   - ພະນັກງານການເງິນ ເຮັດວຽກເຕັມເວລາ ຫຼື ຊົ່ວຄາວ ກໍ່ໄດ້.
   - ພະນັກງານປ້ອງກັນ ເຮັດວຽກເຕັມເວລາ ຫຼື ຊົ່ວຄາວ ກໍ່ໄດ້.
   - ພະນັກງານສື່ມວນຊົນ ເຮັດວຽກເຕັມເວລາ ຫຼື ຊົ່ວຄາວ ກໍ່ໄດ້.

- ພະນັກງານການຕະຫຼາດ ເຮັດວຽກເຕັມເວລາ ຫຼື ຊົ່ວຄາວ ກໍ່ໄດ້.

4. ເງື່ອນໄຂດ້ານກົດໝາຍ
   - ໃບຈົດທະບຽນວິສາຫະກິດອອກຊື່ສະໂມສອນ (ຕ້ອງບໍ່ແມ່ນບໍລິສັດຈຳກັດຜູ້ດຽວ ຫຼື ວິສາຫະກິດສ່ວນບຸກຄົນ).
   - ຕ້ອງມີກາປະທັບວິສາຫະກິດຂອງສະໂມສອນ.
   - ໂຄງຮ່າງການຈັດຕັ້ງບໍລິຫານງານຂອງສະໂມສອນ.
   - ລາຍຊື່ພະນັກງານ, ຜູ້ສະໜັບສະໜູນຂອງສະໂມສອນ ແລະ ຜູ້ບໍລິຫານຂອງສະໂມສອນ.
   - ລາຍຊື່ຜູ້ມີສິດລົງລາຍເຊັນໃນນາມສະໂມສອນ.
   - ໜັງສືຢັ້ງຢືນຈາກຄະນະບໍລິຫານງານຂອງສະໂມສອນ ວ່າບໍ່ມີສ່ວນກ່ຽວຂ້ອງທັງທາງກົງ ແລະ ທາງອ້ອມໃນເລື່ອງຜົນປະໂຫຍດທັບຊ້ອນກັບສະໂມສອນອື່ນ.

5. ເງື່ອນໄຂດ້ານການເງິນ
   - ບັນຊີທະນາຄານອອກຊື່ສະໂມສອນ.
   - ແຜນງົບປະມານປະຈຳປີຂອງສະໂມສອນ.
   - ການສະຫຼຸບລາຍຮັບ-ລາຍຈ່າຍຂອງສະໂມສອນ ລະດູການຜ່ານມາ.
   - ໜັງສືຢັ້ງຢືນການບໍ່ຄ້າງຄ່າຈ່າຍແຮງງານນັກກິລາ, ຄະນະຄູຝຶກ ແລະ ພະນັກງານຂອງສະໂມສອນ.
   - ໜັງສືຢັ້ງຢືນການບໍ່ຄ້າງການເສຍອາກອນ.

6. ເງື່ອນໄຂດ້ານການຕະຫຼາດ ແລະ ສື່ມວນຊົນ
   - ມີຊ່ອງທາງສື່ສານມວນຊົນທາງການຂອງສະໂມສອນທີ່ເຄື່ອນໄຫວຢ່າງຕໍ່ເນື່ອງເຊັ່ນວ່າ: ເວັບໄຊ້ ທາງການຂອງສະໂມສອນ ຫຼື ຊ່ອງຢູທູບທາງການຂອງສະໂມສອນ ຫຼື ເຟສບຸກເພຈທາງການ ຂອງສະໂມສອນ ຫຼື ອິນສະຕຣາແກມທາງການຂອງສະໂມສອນ ຫຼື ທະວິດເຕີທາງການຂອງ ສະໂມສອນ.
   - ສະໂມສອນບໍ່ສາມາດສະເໜີຂໍປ່ຽນ ສີປະຈຳສະໂມສອນ, ເຄື່ອງໝາຍສະໂມສອນ (ໂລໂກ້) ແລະ ຊື່ຂອງສະໂມສອນໄດ້ໃນໄລຍະກ່ອນເປີດການແຂ່ງຂັນ 1 ເດືອນ ແລະ ໄລຍະດຳເນີນການແຂ່ງຂັນຢູ່. ໂດຍສະໂມສອນຕ້ອງດຳເນີນການແຂ່ງຂັນຕໍ່ຈົນຈົບລະດູການເສຍກ່ອນຈຶ່ງສາມາດສະເໜີໄດ້ ແລະ ຕ້ອງນຳໃຊ້ຊື່ໃໝ່ສີໃໝ່, ໂລໂກ້ໃໝ່ໄປອີກເປັນເວລາ 2 ປີຈຶ່ງສາມາດໄດ້ຮັບໃບອະນຸຍາດສະໂມສອນຈາກ ສຕລ ໄດ້.
   - ລາຍລະອຽດລາຍການເງື່ອນໄຂຂອງການປະກອບຂໍໃບອະນຸຍາດສະໂມສອນລະດັບອາຊີໃຫ້ອີງຕາມກົດລະບຽບ AFC Club Licensing.